# ບົດລາຍງານ
# ເສດຖະກິດປີ 2014 ແລະ ທ່າອ່ຽງປີ 2015











ມີນາ 2015

ຈັດພິມໂດຍ:
**ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ**

ຊັ້ນ 5, ຕຶກໃໝ່ ຜທ
ຖະໜົນສຸພານຸວົງ, ບ້ານສີຖານເໜືອ
ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ
ໂທລະສັບ & ແຟັກ: +856 21 254826
ອີເມວສ໌: info@neri.gov.la
ເວບໄຊ: www.neri.gov.la

ສະໜັບສະໜູນໃນການຈັດພິມໂດຍ:
**ໂຄງການພັດທະນາສ້າງຂີດຄວາມສາມາດດ້ານສະຖິຕິ (LAOSTAT), ຫ້ອງການທະນາຄານໂລກ ປະຈຳ ສປປ ລາວ**

ພິມຄັ້ງທຳອິດ 2015

© ສະຫງວນລິຂະສິດ 2015
ບົດລາຍງານສະບັບນີ້ ແມ່ນຜະລິດຕະພັນຂອງນັກຄົ້ນຄວ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ. ຜົນການຄົ້ນຄວ້າ, ການຕີລາຄາ ແລະ ຂໍ້ສະຫຼຸບໃນບົດລາຍງານສະບັບນີ້ ບໍ່ຈຳເປັນຕ້ອງສ່ອງແສງເຖິງທັດສະນະຂອງຄະນະສະຖາບັນ ຫຼື ຂອງກະຊວງແຜນການ ແລະ ການລົງທຶນ.

# ຄະນະຮັບຜິດຊອບ
# ສ້າງບົດລາຍງານ
# ເສດຖະກິດ
# ປະຈໍາປີ 2014


**ຜູ້ຊີ້ນໍາລວມ:**

ທ່ານ ດຣ. ບຸນທະວີ ສີສຸພັນທອງ

**ຄະນະຮັບຜິດຊອບສ້າງບົດລາຍງານ:**

ທ່ານ ດຣ. ລີເບີ ລີບົວປາວ

ທ່ານ ສຸຜົດ ດາລາຈັນທຣາ

ທ່ານ ດຣ. ສະຖາບັນດິດ ອິນສີຊຽງໃໝ່

**ຄະນະບັນນາທິການ:**

ທ່ານ ວັນທະນາ ນໍລິນທາ

ທ່ານ ດຣ. ສິດທິຣົດ ລາດຊະພົນ

ທ່ານ ດຣ. ສາຍຄໍາ ວໍລະເດດ

ທ່ານ ທະນົງຊາຍ ສຸກຄໍາທັດ

ທ່ານ ນ. ລັດດາວັນ ຊົງວິໄລ

**ໜ່ວຍງານວິຊາການດ້ານເນື້ອໃນ:**

ທ່ານ ນ. ຄໍາເມີງ ບັນນະລາດ

ທ່ານ ນ. ພອນສະຫວັນ ສິດທິເດດ

ທ່ານ ນ. ດອກຟ້າ ສີໂຍທາ

ທ່ານ ນ. ອໍາໄພວັນ ຈັນມະນີ

ທ່ານ ນ. ສີອໍາໄພ ພັນທະວອນ

ທ່ານ ວັນໄຊ ໄຊຍະວົງ

**ໜ່ວຍງານວິຊາການອອກແບບ:**

ທ່ານ ເດືອນສະຫວັນ ພອນມີໄຊ

ທ່ານ ນ. ມາດມະນີ ກຸນລະວົງ

ທ່ານ ສຸລະໄຊ ບຸນທິເດດ

# ສາລະບານ


**ອະລຳພະບົດ** i

**ຄຳນຳ** iii

**ພາກທີ 1: ສະພາບເສດຖະກິດສາກົນໃນປີ 2014** 1

1. ບາງເຫດການພົ້ນເດັ່ນທາງດ້ານເສດຖະກິດໂລກທີ່ສົ່ງຜົນກະທົບຕໍ່ເສດຖະກິດຂອງ ສປປ ລາວ 1

2. ສະພາບເສດຖະກິດຂອງສາກົນ ແລະ ພາກພື້ນ 2

**ພາກທີ 2: ສະພາບເສດຖະກິດຂອງ ສປປ ລາວ ໃນປີ 2014** 7

1. ບາງເຫດການພົ້ນເດັ່ນຢູ່ໃນ ສປປ ລາວ ໃນປີ 2014 7

2. ສະພາບເສດຖະກິດມະຫາພາກຂອງ ສປປ ລາວ 8

3. ບາງສະພາບການພັດທະນາທາງດ້ານສັງຄົມ 25

**ພາກທີ 3: ທ່າອ່ຽງຂອງເສດຖະກິດໃນປີ 2015 ແລະ ໄລຍະກາງ**

1. ທ່າອ່ຽງເສດຖະກິດສາກົນ 29

2. ທ່າອ່ຽງເສດຖະກິດລາວ 31

3. ບັນຫາທີ່ຕ້ອງເອົາໃຈໃສ່ໃນຕໍ່ໜ້າ 32

**ເອກະສານຊ້ອນທ້າຍ** 34

# ອະລຳພະບົດ

ປີ 2014 ເປັນປີທີ 4 ຂອງການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015). ໃນປີ 2014 ໄດ້ມີຫຼາຍເຫດການທີ່ພົ້ນເດັ່ນຢູ່ສາກົນ ແລະ ພາຍໃນປະເທດ ເຊິ່ງເປັນທັງກາລະໂອກາດ ແລະ ສິ່ງທ້າທາຍຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ໂດຍລວມແລ້ວ, ສາມາດຕີລາຄາໄດ້ວ່າ ເສດຖະກິດແຫ່ງຊາດໄດ້ສືບຕໍ່ຂະຫຍາຍຕົວ ແລະ ມີສະເຖຍລະພາບດີ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ ສາມາດບັນລຸບັນດາຄາດໝາຍສູ້ຊົນຂອງແຜນພັດທະນາເສດຖະກິດ-ສັງຄົມ ໃນຫຼາຍດ້ານຕາມແຜນທີ່ກຳນົດໄວ້.

ຜົນສຳເລັດດັ່ງກ່າວນີ້ ແມ່ນເນື່ອງມາຈາກຄວາມເອົາໃຈໃສ່ຊີ້ນຳ ນຳພາຂອງພັກ ແລະ ລັດຖະບານ, ຄວາມຮັບຜິດຊອບ ແລະ ເປັນເຈົ້າການຢ່າງສູງຂອງບັນດາຂະແໜງການ ແລະ ທ້ອງຖິ່ນ, ບັນດາພາກສ່ວນເສດຖະກິດ, ປະຊາຊົນບັນດາເຜົ່າທຸກຊັ້ນຄົນ ແລະ ຄູ່ຮ່ວມພັດທະນາຂອງ ສປປ ລາວ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນປີຜ່ານມານີ້.

ເພື່ອຍົກໃຫ້ເຫັນລາຍລະອຽດກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມໃນປີຜ່ານມາ ແລະ ທ່າອ່ຽງໃນປີ 2015 ນີ້, ກະຊວງແຜນການ ແລະ ການລົງທຶນ ໄດ້ມອບໝາຍໃຫ້ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນໃຈກາງໃນການສຶກສາຄົ້ນຄວ້າ ແລະ ສ້າງບົດລາຍງານເສດຖະກິດ ປີ 2014 ແລະ ທ່າອ່ຽງ ປີ 2015 ສະບັບນີ້. ຂ້າພະເຈົ້າເຫັນວ່າ ປຶ້ມຫົວນີ້ຈະເປັນຂໍ້ມູນຮັບໃຊ້ແກ່ການຕິດຕາມ ແລະ ຕີລາຄາສະພາບການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 1 ປີ ຜ່ານມາ, ສຳລັບການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂະແໜງການ, ທ້ອງຖິ່ນໃນຊຸມປີຕໍ່ໜ້າ ກໍ່ຄືຮັບໃຊ້ວຽກງານຄົ້ນຄວ້າກ່ຽວກັບເສດຖະກິດ-ສັງຄົມຂອງປະເທດເຮົາໃຫ້ມີຂໍ້ມູນທີ່ຫຼາກຫຼາຍ, ເລິກເຊິ່ງ ແລະ ມີລັກສະນະວິທະຍາສາດຫຼາຍຂຶ້ນ.

ຫວັງວ່າເອກະສານສະບັບນີ້ ຈະເປັນປະໂຫຍດສຳລັບບັນດາທ່ານທີ່ມີຄວາມຕ້ອງການຂໍ້ມູນດັ່ງກ່າວ.

ລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ




ສົມດີ ດວງດີ

# ຄໍານໍາ

ບົດລາຍງານເສດຖະກິດປີ 2014 ແລະ ທ່າອ່ຽງ 2015 ສະບັບນີ້ ເປັນບົດລາຍງານເສດຖະກິດປະຈໍາປີສະບັບທີສີ່ ຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

ເນື້ອໃນຂອງບົດລາຍງານສະບັບນີ້ແບ່ງອອກເປັນ 3 ພາກໃຫຍ່ ຄື: ພາກທີ 1 ກ່ຽວກັບສະພາບເສດຖະກິດຂອງສາກົນໃນປີ 2014 ເຊິ່ງເປັນປັດໄຈທີ່ມີຜົນກະທົບຕໍ່ເສດຖະກິດໂລກ ແລະ ເສດຖະກິດຂອງພາຍໃນປະເທດໃຫ້ມີການປ່ຽນແປງ. ໃນນັ້ນ, ໄດ້ຍົກໃຫ້ເຫັນສະພາບພົ້ນເດັ່ນທາງດ້ານເສດຖະກິດ, ການເມືອງ ແລະ ການລະບາດຂອງພະຍາດຢູ່ໃນພາກພື້ນ ແລະ ສາກົນ ແລະ ສະພາບພົ້ນເດັ່ນການພັດທະນາເສດຖະກິດຂອງແຕ່ລະພາກພື້ນ; ພາກທີ 2 ກ່ຽວກັບສະພາບເສດຖະກິດມະຫາພາກຂອງ ສປປ ລາວ. ໃນນັ້ນ, ຈະຍົກໃຫ້ເຫັນບາງສະພາບພົ້ນເດັ່ນຢູ່ພາຍໃນປະເທດ, ການເຕີບໂຕ ແລະ ສະເຖຍລະພາບຂອງເສດຖະກິດມະຫາພາກ ແລະ ບາງສະພາບການພັດທະນາທາງດ້ານສັງຄົມ ຂອງ ສປປ ລາວ; ພາກທີ 3 ກ່ຽວກັບ ທ່າອ່ຽງເສດຖະກິດໃນປີ 2015 ແລະ ໄລຍະກາງ. ໃນນັ້ນ, ຈະຍົກໃຫ້ເຫັນທ່າອ່ຽງເສດຖະກິດສາກົນ ແລະ ທ່າອ່ຽງຂອງເສດຖະກິດພາຍໃນສໍາລັບຊຸມປີຕໍ່ໜ້າ. ນອກຈາກນັ້ນ, ມີເອກະສານ ແລະ ຕາຕະລາງຊ້ອນທ້າຍ ກ່ຽວກັບເນື້ອໃນລະອຽດຂອງແຕ່ລະພາກ.

ຜົນສໍາເລັດຂອງການສ້າງປຶ້ມບົດລາຍງານເສດຖະກິດມະຫາພາກປີ 2014 ນີ້ ແມ່ນເກີດຈາກຄວາມເອົາໃຈໃສ່ຊີ້ນໍານໍາພາຂອງຄະນະນໍາກະຊວງແຜນການ ແລະ ການລົງທຶນ, ຈາກການໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນ ຂອງບັນດາຂະແໜງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.

ຕາງໜ້າໃຫ້ແກ່ຄະນະນໍາ ຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຂ້າພະເຈົ້າຂໍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງຄະນະນໍາກະຊວງແຜນການ ແລະ ການລົງທຶນທີ່ໄດ້ໃຫ້ການຊີ້ນໍາບັນດາຂະແໜງການທີ່ສະໜອງຂໍ້ມູນເປັນຕົ້ນແມ່ນ ກົມອ້ອມຂ້າງກະຊວງແຜນການ ແລະ ການລົງທຶນ, ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ, ກະຊວງການອຸດສາຫະກໍາ ແລະ ການຄ້າ, ກອງເລຂາຄະນະກໍາມະການແຫ່ງຊາດລາວເພື່ອຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແລະ ພາກສ່ວນຕ່າງໆອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ, ຂໍສະແດງຄວາມຍ້ອງຍໍຊົມເຊີຍທີມງານກະກຽມບົດລາຍງານທຸກໆທ່ານ ທີ່ໄດ້ສຸມເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການສຶກສາຄົ້ນຄວ້າປະດິດສ້າງ ແລະ ປັບປຸງບົດລາຍງານສະບັບນີ້ຈົນມີຜົນສໍາເລັດດີ. ພິເສດ ຂໍສະແດງຄວາມຂອບໃຈຫ້ອງການທະນາຄານໂລກ ປະຈໍາ ສປປ ລາວ ທີ່ໄດ້ໃຫ້ການສະໜັບສະໜູນດ້ານງົບປະມານໃນການຈັດພິມ ໂດຍຜ່ານໂຄງການພັດທະນາສ້າງຄວາມສາມາດດ້ານສະຖິຕິ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ບົດລາຍງານເສດຖະກິດມະຫາພາກ ປະຈໍາປີ 2014 ນີ້ ຈະເປັນຂໍ້ມູນທີ່ມີປະໂຫຍດສໍາລັບວຽກຕິດຕາມສະພາບເສດຖະກິດ, ວຽກງານການວາງແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການທີ່ກ່ຽວຂ້ອງ, ວຽກງານການຄົ້ນຄວ້າ ແລະ ສໍາລັບທ່ານທີ່ມີຄວາມສົນໃຈຢາກຊອກຮູ້ຮໍ່າຮຽນ. ກໍລະນີຫາກມີຂໍ້ຜິດພາດ ແລະ ຄວາມບໍ່ສອດຄ່ອງໃນບົດລາຍງານນີ້ ຂ້າພະເຈົ້າພ້ອມດ້ວຍທີມງານຍິນດີຮັບເອົາຄໍາຄິດເຫັນ ແລະ ຕິຊົມ ຈາກບັນດາທ່ານດ້ວຍຄວາມຈິງໃຈ ເພື່ອເປັນການປັບປຸງບົດລາຍງານດ້ານເສດຖະກິດຂອງພວກເຮົາໃຫ້ດີຂຶ້ນໃນຄັ້ງຕໍ່ໄປ.

ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ

ດຣ. ລີເບີ ລີບົວປາວ

# ພາກທີ 1: ສະພາບເສດຖະກິດຂອງສາກົນໃນປີ 2014

## 1. ບາງເຫດການພົ້ນເດັ່ນທາງດ້ານເສດຖະກິດໂລກທີ່ສົ່ງຜົນກະທົບຕໍ່ເສດຖະກິດຂອງ ສປປ ລາວ

ໃນປີ 2014 ນີ້ມີຫຼາຍເຫດການເສດຖະກິດທີ່ພົ້ນເດັ່ນເກີດຂຶ້ນໃນສາກົນ ແລະ ພາກພື້ນ:

ລາຄານ້ຳມັນດິບຢູ່ໃນຕະຫຼາດໂລກໄດ້ຫຼຸດລົງຢ່າງຕໍ່ເນື່ອງ ນັບຕັ້ງແຕ່ເດືອນມິຖຸນາ ປີ 2014 ເປັນຕົ້ນມາ ແລະ ມາຮອດເດືອນທັນວາ 2014 ລາຄານ້ຳມັນດິບຫຼຸດລົງເຫຼືອພຽງແຕ່ 60,70 ໂດລາຕໍ່ບາເຣນ ເຊິ່ງຫຼຸດລົງເຖິງ 42,45% ຈາກເດືອນມິຖຸນາ ແລະ ເປັນລາຄາທີ່ຕ່ຳທີ່ສຸດໃນຮອບ 5 ປີ (ຮູບສະແດງ 1). ສາເຫດຂອງການຫຼຸດລົງຂອງລາຄານ້ຳມັນແມ່ນຍ້ອນ (1) ຄວາມຕ້ອງການນ້ຳມັນໃນຕະຫຼາດໂລກຢູ່ໃນລະດັບຕ່ຳ ເນື່ອງຈາກສະພາບເສດຖະກິດໃນຫຼາຍໆປະເທດຍັງບໍ່ທັນຟື້ນຕົວ, ມີການປັບປຸງປະສິດທິພາບການນຳໃຊ້ນ້ຳມັນໃຫ້ດີຂຶ້ນ, ໄດ້ເພີ່ມການຜະລິດ ແລະ ການນຳໃຊ້ພະລັງງານທົດແທນປະເພດຕ່າງໆຫຼາຍຂຶ້ນ[1]. (2) ການຜະລິດ ແລະ ການສະໜອງນ້ຳມັນເຊື້ອໄຟເພີ່ມຂຶ້ນ ໂດຍສະເພາະການເພີ່ມການຜະລິດຂອງສະຫະລັດອາເມລິກາ ທີ່ໄດ້ເຮັດໃຫ້ປະເທດດັ່ງກ່າວກາຍເປັນປະເທດຜະລິດນ້ຳມັນຫຼາຍທີ່ສຸດຂອງໂລກ[2]. ນອກຈາກນັ້ນ, ກຸ່ມປະເທດສົ່ງອອກນ້ຳມັນ (ໂອເປັກ) ຍັງຕັດສິນໃຈບໍ່ຫຼຸດປະລິມານການຜະລິດລົງ. ການຫຼຸດລົງຂອງລາຄານ້ຳມັນໃນໄລຍະທີ່ຜ່ານມາ ແມ່ນຈະມີຜົນດີຕໍ່ເສດຖະກິດໂລກໂດຍສະເພາະເຮັດ ໃຫ້ລາຄາຂົນສົ່ງກໍ່ຄືຕົ້ນທຶນການຜະລິດຫຼຸດລົງ ແຕ່ຈະສົ່ງຜົນກະທົບທາງລົບຢ່າງແຮງຕໍ່ປະເທດສົ່ງອອກນ້ຳມັນ ໂດຍສະເພາະແມ່ນ ລັດເຊຍ, ອີຣານ, ເວເນຊູເອລາ, ແລະ ນິເຊຣີ[3].

ຮູບສະແດງ 1: ລາຄານ້ຳມັນໃນຕະຫຼາດສາກົນ




ແຫຼ່ງຂໍ້ມູນ: ທະນາຄານໂລກ

---

[1] ວາລະສານ The Economist, 08 ທັນວາ 2014 ກ່າວວ່າ: ພະລັງງານທົດແທນທີ່ຜະລິດ ແລະ ນຳໃຊ້ຫຼາຍ ແມ່ນນ້ຳມັນຊີວະພາບ, ພະລັງງານແສງຕາເວັນ, ພະລັງງານນ້ຳ.

[2] ສະຫະລັດອາເມລິກາບໍ່ແມ່ນປະເທດສົ່ງອອກນ້ຳມັນ ແຕ່ການເພີ່ມການຜະລິດພາຍໃນປະເທດໝາຍເຖິງເພີ່ມການສະໜອງພາຍໃນ ແລະ ການຫຼຸດການນຳເຂົ້ານ້ຳມັນຈາກຕະຫຼາດໂລກ.

[3] ຜູ້ອຳນວຍການອົງການການເງິນສາກົນ ກ່າວໃນກອງປະຊຸມ The Wall Street Journal CEO Council ປະຈຳປີ 2014

ຢູ່ໃນຂົງເຂດພາກພື້ນອາຊີຕາເວັນອອກ ໄດ້ມີກອງປະຊຸມສຸດຍອດພາກພື້ນລຸ່ມແມ່ນ້ຳຂອງ ໃນລະຫວ່າງວັນທີ 19 ຫາ 20 ທັນວາ ປີ 2014 ທີ່ບາງກອກ ປະເທດໄທ ພາຍໃຕ້ຫົວຂໍ້ ຄວາມມຸ້ງໝັ້ນໃນການພັດທະນາແບບຍືນຍົງ ແລະ ມີສ່ວນຮ່ວມຂອງທຸກພາກສ່ວນໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ. ກອງປະຊຸມໄດ້ຮັບຮອງເອົາຖະແຫຼງການຮ່ວມ ຈຳນວນ 30 ຂໍ້ ແລະ ປະກາດເອກະສານຕ່າງໆ[4] ເຊັ່ນ: ແຜນການປະຕິບັດຂອບການລົງທຶນອະນຸພາກພື້ນ ໄລຍະ 2014-2018 ເຊິ່ງໄດ້ລະບຸໂຄງການບູລິມະສິດຈຳນວນ 92 ໂຄງການ ມີມູນຄ່າທັງໝົດ 30 ຕື້ໂດລາ, ການສ້າງຕັ້ງສູນປະສານງານໄຟຟ້າອະນຸພາກພື້ນ, ການສ້າງຕັ້ງສະມາຄົມທາງລົດໄຟ, ບົດລາຍງານທົບທວນຄືນຍຸດທະສາດການຄົມມະນາຄົມ (2006-2015).

ຢູ່ໃນຂົງເຂດສະຫະພາບເອີລົບ ແລະ ອາເມລິກາ ໄດ້ມີການລົງໂທດທາງດ້ານເສດຖະກິດລະຫວ່າງລັດເຊຍ ແລະ ປະເທດເສດຖະກິດໃຫຍ່ຈຳນວນໜຶ່ງ ເຊັ່ນ: ສະຫະລັດອາເມຣິກາ, ສະຫະພາບເອີຣົບ, ຍີ່ປຸ່ນ, ການາດາ ແລະ ອິດສະຕາລີ ເຊິ່ງມີສາເຫດມາຈາກວິກິດການທາງການເມືອງ ລະຫວ່າງຝ່າຍທີ່ສະໜັບສະໜູນລັດເຊຍ ແລະ ຝ່າຍທີ່ບໍ່ສະໜັບສະໜູນລັດເຊຍໃນອູແກຣນ ໂດຍສະເພາະແມ່ນເຂດຄຣີເມຍ ທີ່ເລີ່ມຕົ້ນຂຶ້ນໃນທ້າຍປີ 2013. ການລົງໂທດຂອງປະເທດເສດຖະກິດໃຫຍ່ຕໍ່ລັດເຊຍ ປະກອບມີການຫ້າມຄົນລັດເຊຍ ແລະ ຄົນອູແກຣນທີ່ສະໜັບສະໜູນລັດເຊຍຈຳນວນໜຶ່ງເຂົ້າປະເທດ ແລະ ບໍ່ອະນຸຍາດໃຫ້ກຸ່ມຄົນເຫຼົ່ານັ້ນເຄື່ອນຍ້າຍຊັບສິນຂອງເຂົາເຈົ້າທີ່ມີຢູ່ໃນປະເທດທີ່ລົງໂທດແກ່ລັດເຊຍ; ການຫ້າມບໍ່ໃຫ້ມີການເຄື່ອນໄຫວທຸລະກິດຂອງບໍລິສັດຈຳນວນໜຶ່ງ (ລວມມີທະນາຄານ ແລະ ບໍລິສັດພະລັງງານຂະໜາດໃຫຍ່) ແລະ ມາດຕະການອື່ນໆ. ເພື່ອເປັນການຕອບໂຕ້ ລັດເຊຍກໍ່ໄດ້ໃຊ້ມາດຕະການທີ່ຄ້າຍໆກັນຕໍ່ກັບບັນດາປະເທດດັ່ງກ່າວ. ບັນຫາດັ່ງກ່າວໄດ້ສົ່ງຜົນກະທົບຕໍ່ສະພາບເສດຖະກິດຂອງລັດເຊຍ ແລະ ສະຫະພາບເອີຣົບ ກໍ່ຄືເສດຖະກິດຂອງໂລກ.

ຢູ່ໃນຂົງເຂດອາຟຣິກາຕາເວັນອອກ ໄດ້ມີການລະບາດຂອງພະຍາດອີໂບລາ (Ebola) ເຊິ່ງມາຮອດທ້າຍເດືອນທັນວາ 2014[5] ຈຳນວນຜູ້ຕິດເຊື້ອພະຍາດດັ່ງກ່າວມີທັງໝົດ 20.260 ຄົນ ໃນນັ້ນ ມີຜູ້ເສຍຊີວິດສູງເຖິງ 7.905 ຄົນ. ປະເທດທີ່ມີການແຜ່ລະບາດຂອງພະຍາດດັ່ງກ່າວຢ່າງຮ້າຍແຮງທີ່ສຸດແມ່ນປະເທດເຊຍຣາເລອອນ ທີ່ມີຜູ້ຕິດເຊື້ອທັງໝົດ 9.446 ຄົນ ໃນນັ້ນ ເສຍຊີວິດ 2.758 ຄົນ; ຮອງລົງມາແມ່ນປະເທດລີເບເລຍ ທີ່ມີຈຳນວນຜູ້ຕິດເຊື້ອ 8.018 ຄົນ ແລະ ເສຍຊີວິດ 3.423 ຄົນ ແລະ ປະເທດກີເນ ທີ່ມີຜູ້ຕິດເຊື້ອທັງໝົດ 2.707 ຄົນ ແລະ ເສຍຊີວິດ 1.709 ຄົນ ຮອດທ້າຍເດືອນທັນວາ 2014. ຕໍ່ກັບການລະບາດດັ່ງກ່າວ ອົງການອານາໄມໂລກ (WHO) ພ້ອມກັບກະຊວງສາທາລະນະສຸກຂອງຫຼາຍປະເທດໄດ້ພັດທະນາ ແລະ ກຳລັງທົດລອງນຳໃຊ້ຢາເພື່ອປິ່ນປົວ ແລະ ສະກັດກັ້ນການແຜ່ລາມຂອງພະຍາດ ແລະ ໄດ້ເປີດກອງປະຊຸມເພື່ອເລັ່ງຫາທາງອະນຸມັດນຳໃຊ້ຢາ ແລະ ວັກແຊັງໃນການທົດລອງ.

## 2. ສະພາບເສດຖະກິດຂອງສາກົນ ແລະ ພາກພື້ນ

### ລາຄາສິນຄ້າ

ລາຄາສິນຄ້າໃນຕະຫຼາດໂລກໃນປີ 2014 ນີ້ມີທ່າອ່ຽງຫຼຸດລົງເມື່ອທຽບກັບປີ 2013 ໂດຍສະເພາະແມ່ນລາຄາຂອງທັນຍາພືດ, ນ້ຳມັນ ແລະ ໂລຫະມີຄ່າ. ລາຄາສາລີ ໃນປີ 2014 ຫຼຸດລົງ 25,65% ທຽບໃສ່ປີ 2013 ຈາກ 259,30 ໂດລາ/ໂຕນ ມາເປັນ 192,80 ໂດລາ/ໂຕນ ເຊິ່ງການຫຼຸດລົງແມ່ນຍ້ອນຜົນຜະລິດດີຂຶ້ນ ໂດຍສະເພາະແມ່ນສະຫະລັດອາເມລິກາ (ເຊິ່ງເປັນຜູ້ສະໜອງສາລີລາຍໃຫຍ່ທີ່ສຸດຂອງໂລກ) ແລະ ໄດ້ເຮັດໃຫ້ການສະໜອງເພີ່ມຂຶ້ນ ແລະ ລາຄາກໍ່ຫຼຸດລົງ[6]. ລາຄາເຂົ້າສານໄທທີ່ມີເມັດຫັກ 5% ຫຼຸດລົງ 16,41% ຈາກ 505,80 ໂດລາ/ໂຕນ ໃນປີ 2013 ມາເປັນ 422,68 ໂດລາ/ໂຕນ. ລາຄາຄຳຫຼຸດລົງຈາກ 1.411,46 ໂດລາ/ອອນ ໃນປີ 2013 ມາເປັນ 1.265,58 ໂດລາ/ອອນ

---

4 ວາລະສານກອມມູນິດຂອງປະເທດຫວຽດນາມ.

5 ຂໍ້ມູນຈາກອົງການອະນາໄມໂລກ.

6 ບົດລາຍງານທ່າອ່ຽງຕະຫຼາດສິນຄ້າໂລກ.

ໃນປີ 2014 ຫຼື ຫຼຸດລົງ 10,34% ຍ້ອນຄວາມຕ້ອງການຂອງນັກລົງທຶນຂັ້ນສະຖາບັນຫຼຸດລົງ. ສ່ວນລາຄາທອງ ກໍ່ໄດ້ຮັບຜົນກະທົບຈາກຄວາມຕ້ອງການທີ່ຫຼຸດລົງ ໂດຍສະເພາະຈາກປະເທດຈີນ ທີ່ມີການຂະຫຍາຍຕົວທີ່ຊ້າລົງ ໃນນັ້ນ, ລາຄາທອງ ຫຼຸດລົງ 6,39% ຈາກ 7.332,10 ໂດລາ/ໂຕນ ມາເປັນ 6.863,40 ໂດລາ/ໂຕນ. ລາຄານ້ຳມັນດິບສະເລ່ຍໝົດປີ 2014 ແມ່ນ ຫຼຸດລົງ 7,46% ຈາກ 104 ໂດລາ/ບາເຣນ ໃນປີ 2013 ມາເປັນ 96,24 ໂດລາ/ບາເຣນ ໃນປີ 2014 ເຊິ່ງການຫຼຸດລົງຂອງລາຄາແມ່ນໄດ້ເລີ່ມໃນໄລຍະກາງປີ 2014 (ລາຍລະອຽດເພີ່ມເຕີມແມ່ນຢູ່ໃນພາກເຫດການພົ້ນເດັ່ນ). ອີກສິນຄ້າໜຶ່ງທີ່ມີລາຄາຫຼຸດລົງຫຼາຍແມ່ນຢາງພາລາ ເຊິ່ງໄດ້ຫຼຸດລົງຢ່າງຕໍ່ເນື່ອງນັບຕັ້ງແຕ່ຕົ້ນປີ 2011 ເປັນຕົ້ນມາ ແລະ ລາຄາໃນປີ 2014 ທຽບກັບປີ 2013 ຫຼຸດລົງ 29,75%. ອີງຕາມການຄົ້ນຄວ້າຂອງທະນາຄານແຫ່ງປະເທດໄທ[7] ໄດ້ລະບຸວ່າ ສາເຫດຂອງການຫຼຸດລົງຂອງລາຄາຢາງພາລາ ແມ່ນມາຈາກສະພາບເສດຖະກິດໂລກ ແລະ ເສດຖະກິດຈີນທີ່ຂະຫຍາຍຕົວຊ້າລົງ ສົ່ງຜົນໃຫ້ຄວາມຕ້ອງການຫຼຸດລົງ ແລະ ປະລິມານການສະໜອງເພີ່ມຂຶ້ນຍ້ອນໃນໄລຍະທີ່ລາຄາຢາງພາລາມີທ່າອ່ຽງເພີ່ມຂຶ້ນຜ່ານມາໄດ້ເຮັດໃຫ້ຫຼາຍປະເທດ ເປັນຕົ້ນແມ່ນຈີນ, ລາວ, ຫວຽດນາມ, ກຳປູເຈຍ ແລະ ມຽນມາ ໄດ້ເພີ່ມເນື້ອທີ່ການປູກຢາງພາລາຂຶ້ນ. ສ່ວນສິນຄ້າທີ່ມີລາຄາເພີ່ມຂຶ້ນໃນປີ 2014 ໄດ້ແກ່ລາຄາຊີ້ນງົວ, ຊີ້ນໄກ່ ແລະ ອາຍແກັດທຳມະຊາດ ເຊິ່ງມີອັດຕາການເພີ່ມຂຶ້ນ 21,62%, 6,11% ແລະ 17,16% ຕາມລຳດັບ. (ຕາຕະລາງຊ້ອນທ້າຍ).

## ອັດຕາແລກປ່ຽນ

ດັດຊະນີຄ່າເງິນໂດລາ[8] ຢູ່ທີ່ລະດັບ 78,42 ແຂງຄ່າຂຶ້ນ 3,3% ເມື່ອທຽບໃສ່ປີ 2013. ຄ່າເງິນໂດລາແຂງຄ່າຂຶ້ນເຖິງ 8,5% ເມື່ອທຽບກັບເງິນເຢັນຂອງຍີ່ປຸ່ນ ຄື ຈາກ 97,56 ເຢນ/ໂດລາ ໃນປີ 2013 ມາເປັນ 105,86 ເຢນ/ໂດລາໃນ ປີ 2014 ເຊິ່ງສາເຫດສ່ວນໜຶ່ງແມ່ນຍ້ອນນະໂຍບາຍການເງິນແບບຜ່ອນຜັນຂອງຍີ່ປຸ່ນ ທີ່ເປັນນະໂຍບາຍດ້ານເສດຖະກິດໜຶ່ງທີ່ສຳຄັນຂອງລັດຖະບານ ພາຍໃຕ້ການນຳພາຂອງນາຍົກ ຊິນໂຊະ ອາເບ. ນອກຈາກນັ້ນ, ເມື່ອທຽບກັບເງິນຂອງບາງປະເທດສະມາຊິກອາຊຽນ ຄ່າເງິນໂດລາແຂງຄ່າຂຶ້ນຫຼາຍພໍສົມຄວນ ເຊັ່ນ ທຽບກັບເງິນບາດ, ເງິນຣິງກິດ ແລະ ເງິນໂດລາສິງກະໂປ ເງິນໂດລາ ແຂງຄ່າຂຶ້ນ 5,75%, 3,88% ແລະ 1,28% ຕາມລຳດັບ ເຊິ່ງສາເຫດທີ່ເຮັດໃຫ້ຄ່າຂອງເງິນໂດລາ ແຂງຄ່າຂຶ້ນທຽບກັບສະກຸນເງິນດັ່ງກ່າວ ແມ່ນຍ້ອນເສດຖະກິດຂອງສາຫະລັດອາເມລິກາ ມີການປັບຕົວດີຂຶ້ນ. ເຖິງຢ່າງໃດກໍ່ຕາມ ເມື່ອທຽບກັບເງິນປອນ ເງິນໂດລາອ່ອນຄ່າລົງປະມານ 5,29% ແລະ ອ່ອນຄ່າລົງເລັກໜ້ອຍເມື່ອທຽບກັບເງິນເອີໂຣ (ເງິນເອີໂຣທຽບກັບເງິນໂດລາ ແຂງຄ່າຂຶ້ນ 0,03%). (ຕາຕະລາງຊ້ອນທ້າຍ).

## ກຸ່ມປະເທດທີ່ນຳໃຊ້ເງິນເອີໂຣ

ໃນປີ 2014 ນີ້ ເສດຖະກິດຂອງກຸ່ມປະເທດທີ່ນຳໃຊ້ເງິນເອີໂຣ ຄາດວ່າມີທ່າອ່ຽງດີຂຶ້ນເມື່ອທຽບກັບປີຜ່ານມາ. ໃນ 3 ໄຕມາດຕົ້ນປີ 2014 ເສດຖະກິດຂະຫຍາຍຕົວ 0,4%, 1% ແລະ 0,8% ຕາມລຳດັບທຽບກັບໄຕມາດດຽວກັນຂອງປີ 2013 ເຊິ່ງດີຂຶ້ນຫຼາຍ ເພາະເສດຖະກິດຂອງປີ 2013 ຫົດຕົວໃນເກືອບທຸກໄຕມາດ. ຕົວເລກເບື້ອງຕົ້ນຈາກສຳນັກງານສະຖິຕິຂອງສະຫະພາບເອີຣົບ ລະບຸວ່າ ການຂະຫຍາຍຕົວຂອງກຸ່ມປະເທດທີ່ນຳໃຊ້ເງິນເອີໂຣໃນໄຕມາດທີ 4 ປີ 2014 ຄາດວ່າບັນລຸໄດ້ 0,9% ທຽບກັບໄຕມາດດຽວກັນຂອງປີ 2013 ແລະ ໝົດປີຄາດວ່າຂະຫຍາຍຕົວ 0,9% ເຊິ່ງດີຂຶ້ນເມື່ອທຽບກັບປີ 2013 ທີ່ຫົດຕົວ 0,5%. ການຂະຫຍາຍຕົວຂອງເສດຖະກິດໃນປີ 2014 ໄດ້ຖືກຂັບເຄື່ອນໂດຍການຂະຫຍາຍຕົວເສດຖະກິດຂອງປະເທດເຢຍລະມັນເຊິ່ງ ເປັນເສດຖະກິດທີ່ໃຫຍ່ທີ່ສຸດຂອງກຸ່ມປະເທດທີ່ນຳໃຊ້ເງິນເອີໂຣທີ່ກັບມາພົ້ນເດັ່ນຄືນໃນໄລຍະທ້າຍປີ. ໃນໄຕມາດທີ 4 ປີ 2014 GDP ຂອງເຢຍລະມັນຂະຫຍາຍຕົວ 1,5% ທຽບກັບໄຕມາດດຽວກັນຂອງປີ 2013 ແລະ ໄດ້ເຮັດໃຫ້ອັດຕາການຂະ

---

[7] ແປ ແລະ ສັງລວມຈາກບົດຄົ້ນຄວ້າຂອງທະນາຄານແຫ່ງປະເທດໄທ ສະບັບວັນທີ 2 ກັນຍາ 2011.

[8] ຄິດໄລ່ຈາກຄ່າສະເລ່ຍຖ່ວງນ້ຳໜັກຕາມມູນຄ່າການຄ້າຂອງອັດຕາແລກປ່ຽນລະຫວ່າງໂດລາກັບສະກຸນເງິນຂອງປະເທດຄູ່ຄ້າ, ຄິດໄລ່ໂດຍ ທະນາຄານກາງຂອງສະຫະລັດອາເມລິກາ

ຫຍາຍຕົວລວມໝົດປີບັນລຸໄດ້ 1,6%. ອີງຕາມການລາຍງານຂອງສຳນັກງານສະຖິຕິແຫ່ງຊາດຂອງເຢຍລະມັນ[9], ການຂະຫຍາຍຕົວໄລຍະທ້າຍປີ ແມ່ນຖືກຂັບເຄື່ອນໂດຍຄວາມຕ້ອງການພາຍໃນທີ່ສູງຂຶ້ນໂດຍສະເພາະແມ່ນການໃຊ້ຈ່າຍຂອງຄົວເຮືອນ ແລະ ການໃຊ້ຈ່າຍຊື້ເຄື່ອງຈັກ ແລະ ອຸປະກອນຂອງຂະແໜງການກໍ່ສ້າງ ແຕ່ການສົ່ງອອກທີ່ເປັນອົງປະກອບທີ່ສຳຄັນຂອງເສດຖະກິດເຢຍລະມັນ ແມ່ນຍັງບໍ່ທັນມີການຂະຫຍາຍຕົວທີ່ຟືດຟື້ນ. ສ່ວນປະເທດຝຣັ່ງ ເຊິ່ງເປັນເສດຖະກິດອັນດັບສອງຂອງກຸ່ມຂະຫຍາຍຕົວພຽງແຕ່ 0,4% ແລະ ອີຕາລີ ເຊິ່ງເປັນອັນດັບສາມແມ່ນຫົດຕົວ 0,4%. ສ່ວນຕົວເລກຊີ້ ບອກສະເຖຍລະພາບມະຫາພາກດ້ານອື່ນ ໃນປີ 2014 ນີ້ ແມ່ນມີການປັບຕົວດີຂຶ້ນເມື່ອທຽບກັບ 2013 ແຕ່ໂດຍລວມຍັງຢູ່ໃນລະດັບທີ່ໜ້າເປັນຫ່ວງ. ອັດຕາການຫວ່າງງານຍັງຢູ່ໃນລະດັບສູງເຖິງ 11,6% ຫຼຸດລົງຈາກ 12% ໃນ ປີ 2013. ອັດຕາເງິນເຟີ້ໂດຍລວມແມ່ນບັນລຸໄດ້ພຽງແຕ່ 0,4% ເຊິ່ງຕໍ່າກວ່າຕົວເລກເພດານ 2% ທີ່ກຳນົດໄວ້ ແລະ ຍັງເພີ່ມຄວາມສ່ຽງບັນຫາເງິນຝືດ. ເພື່ອກະຕຸ້ນເສດຖະກິດ ແລະ ຮັກສາສະເຖຍລະພາບທາງດ້ານລາຄາທະນາຄານກາງເອີຣົບ ໄດ້ນຳໃຊ້ມາດຕະການດ້ານເງິນຕາຫຼາຍຄັ້ງໃນໄລຍະປີຜ່ານມາ. ໃນເດືອນມີນາ 2014 ນີ້ທະນາຄານກາງເອີຣົບກໍ່ໄດ້ປັບຫຼຸດອັດຕາດອກເບ້ຍເງິນກູ້ ແລະ ເງິນຝາກໃຫ້ທະນາຄານທຸລະກິດ ເຊັ່ນ ອັດຕາດອກເບ້ຍເງິນກູ້ປັບຫຼຸດຈາກ 0,25% ມາເປັນ 0,15%, ອັດຕາດອກເບ້ຍເງິນຝາກແມ່ນຈາກລະດັບ 0% ມາເປັນ -0,1% ເຊິ່ງໄດ້ເຮັດໃຫ້ທະນາຄານກາງເອີຣົບ ເປັນທະນາຄານກາງແຫ່ງທຳອິດທີ່ໄດ້ນຳໃຊ້ອັດຕາດອກເບ້ຍຄ່າລົບ, ການປັບຫຼຸດດັ່ງກ່າວແມ່ນເພື່ອຮັກສາຊ່ອງຫວ່າງຂອງອັດຕາດອກເບ້ຍ ຈຶ່ງເຮັດໃຫ້ດອກເບ້ຍເງິນຝາກຂອງທະນາຄານກາງເອີຣົບເປັນຄ່າລົບເປັນຄັ້ງທຳອິດ. ນອກຈາກນັ້ນ, ໃນເດືອນກັນຍາ 2014 ທະນາຄານກາງເອີຣົບຍັງໄດ້ປັບຫຼຸດອັດຕາດອກເບ້ຍລົງອີກຮອບໜຶ່ງ ເຊິ່ງໄດ້ເຮັດໃຫ້ອັດຕາດອກເບ້ຍເງິນກູ້ໃຫ້ທະນາຄານທຸລະກິດຢູ່ທີ່ລະດັບ 0,05% ແລະ ອັດຕາດອກເບ້ຍເງິນຝາກໃຫ້ແກ່ທະນາຄານທຸລະກິດຢູ່ລະດັບ -0,2%.

## ສະຫະລັດອາເມລິກາ

ໃນປີ 2014 ນີ້, ສະພາບການພັດທະນາເສດຖະກິດ ຂອງສະຫະລັດອາເມລິກາໂດຍລວມ ມີທ່າອ່ຽງດີຂຶ້ນໃນ 3 ໄຕມາດທຳອິດຂອງປີ. ເຖິງແມ່ນວ່າ ຈະຂະຫຍາຍຕົວຫຼຸດລົງໃນໄຕມາດທຳອິດກໍ່ຕາມ ການປັບຕົວດີຂຶ້ນດັ່ງກ່າວ ແມ່ນຍ້ອນການລົງທຶນເຂົ້າໃນຂະແໜງທີ່ຢູ່ອາໄສຂອງຄົວເຮືອນ ແລະ ການລົງທຶນຂອງຫົວໜ່ວຍທຸລະກິດ ແລະ ການຈ້າງງານທີ່ເພີ່ມຂຶ້ນສົ່ງຜົນເຮັດໃຫ້ການຊົມໃຊ້ຂອງຄົວເຮືອນເພີ່ມຂຶ້ນ. ໃນປີ 2014 ນີ້ ເສດຖະກິດຂອງສະຫະລັດອາເມລິກາຂະຫຍາຍຕົວ 2,4%[10] ໄວກວ່າການຂະຫຍາຍຕົວໃນປີ 2013 ທີ່ບັນລຸໄດ້ 2,2%. ການລົງທຶນເພີ່ມຂຶ້ນເປັນ 19,75% ຂອງ GDP ຈາກ 19,34% ໃນປີ 2013. ອັດຕາການຫວ່າງງານໃນປີ 2014 ຫຼຸດລົງຈາກ 7,4% ໃນປີ 2013 ມາເປັນ 6,2%. ຕໍ່ກັບການປັບຕົວດີຂຶ້ນດັ່ງກ່າວ, ທະນາຄານກາງສະຫະລັດອາເມລິກາໄດ້ປະກາດຢຸດການນຳໃຊ້ມາດຕະການເງິນຕາແບບຜ່ອນຄາຍທາງດ້ານປະລິມານ (Quantitative Easing ຫຼື QE) ຮອບທີ 3 ໃນເດືອນຕຸລາ 2014 ແຕ່ຈະຍັງຮັກສາລະດັບອັດຕາດອກເບ້ຍໄວ້ໃນລະດັບຕໍ່າອີກໄລຍະໜຶ່ງ ຈຶ່ງຈະນຳໃຊ້ມາດຕະການໃຫ້ອັດຕາດອກເບ້ຍກັບຄືນສູ່ລະດັບປົກກະຕິ.

ນອກນັ້ນ, ອັດຕາເງິນເຟີ້ກໍ່ໄດ້ປັບຕົວສູງຂຶ້ນມາເປັນ 1,6% ຈາກ 1,5% ໃນປີ 2013, ແຕ່ກໍ່ຍັງຕໍ່າກວ່າເປົ້າໝາຍທີ່ທະນາຄານກາງໄດ້ຕັ້ງໄວ້ໃນລະດັບ 2%. ອັດຕາເງິນເຟີ້ເພີ່ມຂຶ້ນເນື່ອງຈາກລາຄາທີ່ຢູ່ອາໄສ ໂດຍສະເພາະແມ່ນຄ່າເຊົ່າໄດ້ປັບຕົວຂຶ້ນແຮງ ແຕ່ການຫຼຸດລົງຂອງລາຄາພະລັງງານ ແລະ ສະບຽງອາຫານໂດຍສະເພາະໃນໄລຍະທ້າຍປີ ໄດ້ເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນພຽງເລັກໜ້ອຍເທົ່ານັ້ນ. ສ່ວນມູນຄ່າການນຳເຂົ້າ ແລະ ສົ່ງອອກແມ່ນເພີ່ມຂຶ້ນ 3,76% ແລະ 2,84% ທຽບກັບປີຜ່ານຕາມລຳດັບ.

---

9 https://www.bea.gov/newsreleases/national/gdp/2015/pdf/gdp4q14_adv.pdf

10 ຕົວເລກເບື້ອງຕົ້ນຈາກກະຊວງການຄ້າຂອງສະຫະລັດອາເມລິກາ. ແຫຼ່ງຂໍ້ມູນ: ບົດລາຍງານຂ່າວຂອງສູນວິໄຈດ້ານເສດຖະກິດ, ກະຊວງການຄ້າ, ສະຫະລັດອາເມລິກາ, ສະບັບວັນທີ 30 ມັງກອນ 2015.

## ສປ ຈີນ ແລະ ຍີ່ປຸ່ນ

ໃນປີ 2014 ເສດຖະກິດຂອງ ສປ ຈີນ ຂະຫຍາຍຕົວ 7,4% ເຊິ່ງຊ້າລົງເມື່ອທຽບໃສ່ການຂະຫຍາຍຕົວຂອງປີ 2013 ທີ່ບັນລຸໄດ້ 7,7%, ແລະ ຍັງເປັນອັດຕາການຂະຫຍາຍຕົວທີ່ຊ້າທີ່ສຸດ ນັບແຕ່ປີ 1990. ສາເຫດຫຼັກຂອງການຂະຫຍາຍຕົວຊ້າໃນປີນີ້ ແມ່ນຍ້ອນການສະລໍຕົວຂອງຂະແໜງອະສັງຫາລິມະຊັບທີ່ມີປະລິມານການສະໜອງຫຼາຍກວ່າປະລິມານຄວາມຕ້ອງການ ແລະ ການຂະຫຍາຍຕົວທີ່ຊ້າລົງຂອງການລົງທຶນໃນຊັບສິນຄົງທີ່ ແລະ ການສົ່ງອອກ. ມູນຄ່າການສົ່ງອອກໃນປີ 2014 ບັນລຸໄດ້ 2.342,75 ຕື້ໂດລາ ເພີ່ມຂຶ້ນ 6,1% ທຽບໃສ່ມູນຄ່າຂອງປີ 2013 ແຕ່ຍັງຊ້າກວ່າອັດຕາການຂະຫຍາຍຕົວຂອງການສົ່ງອອກໃນປີ 2013 ທີ່ບັນລຸໄດ້ 8%. ການຂະຫຍາຍຕົວຂອງເສດຖະກິດ ແລະ ການສົ່ງອອກທີ່ຊ້າລົງ ໄດ້ເຮັດໃຫ້ອັດຕາເງິນເຟີ້ຕ່ຳລົງ ຈາກ 2,6% ໃນປີ 2013 ມາເປັນ 2% ໃນປີ 2014. ເຖິງແມ່ນວ່າອັດຕາການຂະຫຍາຍຕົວໃນປີ 2014 ນີ້ຈະເປັນການຂະຫຍາຍຕົວທີ່ຊ້າທີ່ສຸດໃນຮອບ 24 ປີ ກໍ່ຕາມ ແຕ່ອັດຕາດັ່ງກ່າວແມ່ນຍັງຢູ່ໃນລະດັບໃກ້ຄຽງກັບເປົ້າໝາຍທີ່ລັດຖະບານຕັ້ງໄວ້ ກໍ່ຄື 7,5% ແລະ ບໍ່ຫຼຸດຈາກປີຜ່ານມາຫຼາຍເກີນໄປ ເຊິ່ງສ່ວນໜຶ່ງແມ່ນໝາກຜົນຂອງມາດຕະການກະຕຸ້ນເສດຖະກິດທີ່ໄດ້ນຳໃຊ້ ທີ່ລວມມີການເພີ່ມການລົງທຶນພາກລັດເຂົ້າໃນໂຄງລ່າງພື້ນຖານ, ການປັບຫຼຸດອັດຕາຄັງສຳຮອງພາກບັງຄັບຂອງທະນາຄານທຸລະກິດທີ່ປ່ອຍກູ້ໃຫ້ແກ່ທຸລະກິດຂະໜາດກາງ ແລະ ນ້ອຍ ແລະ ການປ່ອຍສິນເຊື່ອດອກເບ້ຍຕ່ຳໃຫ້ແກ່ທະນາຄານລັດວິດສາຫະກິດຂະໜາດໃຫຍ່ຈຳນວນໜຶ່ງ. ນອກຈາກນັ້ນ, ລັດຖະບານຂອງ ສປ ຈີນ ຍັງເອີ້ນການຂະຫຍາຍຕົວດັ່ງກ່າວວ່າ "ລະດັບປົກກະຕິໃໝ່" ຂອງການຂະຫຍາຍຕົວທີ່ໝັ້ນຄົງ ເນັ້ນໜັກເພີ່ມທະວີຄຸນນະພາບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ[11].

ເສດຖະກິດຂອງຍີ່ປຸ່ນ ໃນປີ 2014 ນີ້ ບໍ່ຟົດຟື້ນເມື່ອທຽບກັບປີຜ່ານມາ. ກອງທຶນການເງິນສາກົນຄາດວ່າເສດຖະກິດຂອງຍີ່ປຸ່ນຈະຫົດຕົວ 0,1% ໃນປີ 2014 ນີ້ ເຊິ່ງເປັນອັດຕາການຂະຫຍາຍຕົວທີ່ຊ້າລົງຫຼາຍເມື່ອທຽບກັບການຂະຫຍາຍຕົວຂອງປີ 2013 ທີ່ບັນລຸໄດ້ 1,5%. ຕົວເລກ GDP ໄຕມາດຂອງຍີ່ປຸ່ນ ໃນ 3 ໄຕມາດທຳອິດຂອງປີ 2014 ໄດ້ຊີ້ໃຫ້ເຫັນວ່າເສດຖະກິດຍີ່ປຸ່ນໄດ້ເຂົ້າສູ່ພາວະຖົດຖອຍ ຫຼັງຈາກຫົດຕົວຕໍ່ເນື່ອງກັນໃນໄຕມາດ 2 ແລະ 3. ສາເຫດຕົ້ນຕໍຂອງການຫົດຕົວຂອງເສດຖະກິດຄືດັ່ງກ່າວ ແມ່ນຍ້ອນການຫຼຸດລົງຂອງຄວາມຕ້ອງການພາຍໃນ ຫຼັງຈາກລັດຖະບານຍີ່ປຸ່ນໄດ້ປະກາດເພີ່ມອັດຕາອາກອນການຊົມໃຊ້ຈາກ 5% ມາເປັນ 8% ໃນວັນທີ 1 ເມສາ 2015 ຜ່ານມາ. ການເພີ່ມອັດຕາອາກອນການຊົມໃຊ້ແມ່ນມີຈຸດປະສົງເພີ່ມລາຍຮັບລັດຖະບານ ແລະ ຫຼຸດຜ່ອນໜີ້ສິນພາກລັດທີ່ໄດ້ເພີ່ມຂຶ້ນສູງຫຼາຍກວ່າ 200% ຂອງ GDP ໃນຊຸມປີຜ່ານມາ. ຜົນກະທົບທາງລົບທີ່ເກີດຂຶ້ນຕໍ່ການຂະຫຍາຍຕົວເສດຖະກິດທີ່ມີຫຼາຍກວ່າທາງລັດຖະບານ ແລະ ຊ່ຽວຊານຈຳນວນໜຶ່ງໄດ້ຄາດໄວ້ ໄດ້ເຮັດໃຫ້ລັດຖະບານຍີ່ປຸ່ນເລື່ອນການເພີ່ມອາກອນການຊົມໃຊ້ຄັ້ງທີ 2 ອອກໄປເປັນປີ 2017 ຈາກປີ 2015 ທີ່ໄດ້ຕັ້ງໄວ້ໃນເບື້ອງຕົ້ນ. ສ່ວນອັດຕາເງິນເຟີ້ໝົດປີບັນລຸໄດ້ 2,7% ສູງກວ່າປີຜ່ານມາທີ່ບັນລຸໄດ້ພຽງແຕ່ 0,4%. ສາເຫດຂອງລະດັບລາຄາເພີ່ມສູງຫຼາຍ ສ່ວນໜຶ່ງແມ່ນຍ້ອນການເພີ່ມຂຶ້ນຂອງພາສີມູນຄ່າເພີ່ມ. ສ່ວນຕົວເລກອັດຕາການຫວ່າງງານ ແລະ ມູນຄ່າການສົ່ງອອກ ແມ່ນຍັງມີທ່າອ່ຽງທີ່ດີ ອັດຕາການຫວ່າງງານຄາດວ່າຈະຢູ່ໃນລະດັບ 3,4% ຫຼຸດລົງຈາກປີ 2013 ທີ່ຢູ່ໃນລະດັບ 3,7% ແລະ ການສົ່ງອອກຄາດວ່າຈະບັນລຸໄດ້ 73.105,18 ຕື້ເຢັນ ເພີ່ມຂຶ້ນ 4.8% ຈາກປີ 2013.

[11] ບົດຖະແຫຼງຂ່າວຂອງສູນສະຖິຕິແຫ່ງຊາດຂອງ ສປ ຈີນ ໃນວັນທີ 20 ມັງກອນ 2015.

## ກຸ່ມປະເທດອາຊຽນ

ໃນປີ 2014 ນີ້ ເສດຖະກິດຂອງພາກພື້ນອາຊຽນຍັງສືບຕໍ່ຂະຫຍາຍຕົວໄວ ແລະ ມີສະເຖຍລະພາບ ໂດຍສະເລ່ຍແລ້ວຄາດວ່າເສດຖະກິດຂອງອາຊຽນຂະຫຍາຍຕົວ 4,8% ໃນປີ 2014 ຫຼຸດລົງເລັກໜ້ອຍເມື່ອທຽບກັບ ປີ 2013 ທີ່ມີອັດຕາການຂະຫຍາຍຕົວຢູ່ທີ່ລະດັບ 5,2%. ໃນນັ້ນ, ອິນໂດເນເຊຍ ຂະຫຍາຍຕົວພຽງ 5,0% ໃນປີ 2014 ຈາກ 5,6% ໃນປີ 2013 ຍ້ອນການສົ່ງອອກຫຼຸດລົງ ໂດຍສະເພາະການຂະຫຍາຍຕົວຂອງການສົ່ງອອກບໍ່ແຮ່ທີ່ຊ້າລົງພາຍຫຼັງຂະຫຍາຍຕົວແຮງໃນປີ 2013 ທີ່ຜ່ານມາ; ສ່ວນເສດຖະກິດຂອງປະເທດໄທເຊິ່ງເປັນເສດຖະກິດໃຫຍ່ອັນດັບທີ 2 ຂອງອາຊຽນ ກໍ່ມີການຂະຫຍາຍຕົວທີ່ຫຼຸດລົງຈາກ 2,9% ໃນປີ 2013 ມາເປັນ 0,7% ຍ້ອນການທ່ອງທ່ຽວຍັງບໍ່ທັນຟື້ນຕົວຢ່າງເຕັມທີ່ ຈາກວິກິດການທາງດ້ານການເມືອງໃນໄລຍະຜ່ານມາ ບວກກັບການຫຼຸດລົງຂອງຄວາມຕ້ອງການພາຍໃນ ແລະ ການສົ່ງອອກ[12]. ສ່ວນປະເທດສະມາຊິກອາຊຽນທີ່ມີອັດຕາການຂະຫຍາຍຕົວໃນຈັງຫວະທີ່ໄວຂຶ້ນ ແລະ ພົ້ນເດັ່ນໃນປີ 2014 ແມ່ນປະເທດມາເລເຊຍ ທີ່ບັນລຸໄດ້ 6,0% ຈາກ 4,7% ໃນປີ 2013. ສຳລັບ ສສ ຫວຽດນາມ ເຫັນວ່າ ເສດຖະກິດຂະຫຍາຍຕົວ ໃນອັດຕາທີ່ໄວທີ່ສຸດໃນຮອບ 3 ປີ ຢູ່ທີ່ລະດັບ 6,0% ເພີ່ມຂຶ້ນຈາກ 5,4% ໃນປີ 2013 ຍ້ອນການລົງທຶນຈາກຕ່າງປະເທດເພີ່ມຂຶ້ນ, ການເພີ່ມການໃຊ້ຈ່າຍຂອງພາກລັດຕໍ່ GDP ແລະ ການຂະຫຍາຍຕົວເສດຖະກິດຂອງບັນດາປະເທດຄູ່ຄ້າທີ່ປັບຕົວດີຂຶ້ນ ເຊິ່ງເຮັດໃຫ້ການສົ່ງອອກຂອງຫວຽດນາມເພີ່ມຂຶ້ນຈາກ 12,6% ໃນປີ 2013 ມາເປັນ 14,4% ໃນປີ 2014 ແລະ ຫວຽດນາມຍັງໄດ້ກາຍເປັນປະເທດຜູ້ສົ່ງອອກໄປສະຫະລັດອາເມລິການລາຍໃຫຍ່ທີ່ສຸດຂອງອາຊຽນ ໂດຍມີສັດສ່ວນການສົ່ງອອກກວມເຖິງ 22% ຂອງຈຳນວນການສົ່ງອອກທັງໝົດຂອງອາຊຽນ.

[12] http://www.bloomberg.com/news/articles/2015-02-16/thailand-posts-slowest-growth-in-three-years-on-falling-exports.

# ພາກທີ 2: ສະພາບເສດຖະກິດຂອງລາວ ໃນປີ 2014

## 1. ບາງເຫດການພົ້ນເດັ່ນຢູ່ໃນ ສປປ ລາວ ໃນປີ 2014

ກອງປະຊຸມສະໄໝສາມັນເທື່ອທີ VII ແລະ VIII ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບແຜນງົບປະມານແຫ່ງລັດ 9 ເດືອນ, ວຽກງານຈຸດສຸມທ້າຍສົກປີ 2013-2014, ແຜນດັດແກ້ງົບປະມານແຫ່ງລັດສົກປີ 2013-2014 ແລະ ທິດທາງສົກປີ 2014-2015 ແລະ ໄດ້ຮັບຮອງເອົາກົດໝາຍ 11 ສະບັບ ປະກອບມີກົດໝາຍສ້າງໃໝ່ 8 ສະບັບ ແລະ ກົດໝາຍປັບປຸງໃໝ່ 3 ສະບັບ.

ມາຮອດເດືອນທັນວາ 2014, ສປປ ລາວ ມີຄວາມຄືບໜ້າໃນການປະຕິບັດ 2 ໂຄງການ ໄຟຟ້າຂະໜາດໃຫຍ່ທີ່ໃຫຍ່ທີ່ສຸດຂອງ ສປປ ລາວ ເປັນຕົ້ນແມ່ນ ເຂື່ອນຫົງສາລິກໃນ ສຳເລັດແລ້ວ 90%, ກຳລັງການຜະລິດ 1.878 ເມກາວັດ ແລະ ຄາດວ່າຈະເລີ່ມຕົ້ນການຜະລິດກາງປີ 2015; ເຂື່ອນໄຟຟ້າໄຊຍະບູລີ ສຳເລັດແລ້ວ 50% ກຳລັງການຜະລິດ 1.285 ເມກາວັດ ແລະ ຄາດວ່າຈະເລີ່ມຕົ້ນການຜະລິດປີຈຳໜ່າຍປີ 2019.

ການກໍ່ສ້າງຂົວມິດຕະພາບລາວ-ມຽນມາ ມາຮອດທ້າຍເດືອນທັນວາ 2014 ມີຄວາມຄືບໜ້າສຳເລັດແລ້ວ 93%, ຄາດວ່າຈະສາມາດເປີດນຳໃຊ້ຕາມແຜນການໃນເດືອນພຶດສະພາ 2015. ຂົວດັ່ງກ່າວມີຄວາມຍາວທັງໝົດ 691,6 ແມັດ, ກວ້າງ 10,9 ແມັດ, ມີມູນຄ່າການກໍ່ສ້າງທັງໝົດ 26 ລ້ານໂດລາສະຫະລັດ ໂດຍນຳໃຊ້ງົບປະມານຂອງລັດຖະບານທັງສອງປະເທດ.

ທະນາຄານໂລກໄດ້ປະເມີນຄວາມສະດວກໃນການດຳເນີນທຸລະກິດຂອງ ສປປ ລາວ ໃນປີ 2014 ເຫັນວ່າມີທ່າອ່ຽງດີຂຶ້ນ. ສປປ ລາວ ໄດ້ຖືກເລື່ອນເປັນລຳດັບດີຂຶ້ນມາອີກ 7 ອັນດັບຄື ຈາກລຳດັບທີ 155 ມາເປັນ 148 ໃນບັນດາ 189 ເສດຖະກິດໃນທົ່ວໂລກ. ດັດຊະນີຍ່ອຍກ່ຽວກັບການໄດ້ຮັບສິນເຊື່ອແມ່ນຫຍັບດີຂຶ້ນ 41 ອັນດັບ (ຈາກອັນດັບທີ 157 ມາເປັນ 116) ແລະ ດັດຊະນີຍ່ອຍກ່ຽວກັບການຄຸ້ມຄອງນັກລົງທຶນກໍ່ມີການປັບດີຂຶ້ນ 8 ອັນດັບ (ຈາກອັນດັບທີ 186 ມາເປັນ 178). ເຖິງຢ່າງໃດກໍ່ຕາມ ຍັງມີດັດຊະນີຍ່ອຍທີ່ມີຄວາມຫຍຸ້ງຍາກເພີ່ມຂຶ້ນໂດຍສະເພາະແມ່ນການຊຳລະພາສີ (ຈາກ 119 ມາເປັນ 129) ແລະ ການເລີ່ມຕົ້ນທຸລະກິດ (ຈາກ 150 ມາເປັນ 154), ສ່ວນດັດຊະນີຍ່ອຍທີ່ບໍ່ໄດ້ຮັບການແກ້ໄຂ ແລະ ຖືກສືບຕໍ່ຈັດຢູ່ໃນອັນດັບສຸດທ້າຍ ແມ່ນການແກ້ໄຂບັນຫາລົ້ມລະລາຍ (ລຳດັບທີ 189).

ວາລະສານການທ່ອງທ່ຽວອິນເດີລາດ[13] ໄດ້ຈັດເມືອງຫຼວງພະບາງເຂົ້າມາເປັນເມືອງທ່ອງທ່ຽວອັນດັບ 2 ຂອງໂລກ ແລະ ຈັດປະເທດລາວ ຢູ່ໃນ 10 ອັນດັບຕົ້ນ ຂອງບັນດາປະເທດທີ່ໜ້າທ່ຽວທີ່ສຸດໃນໂລກ ເຊິ່ງໃນປີ 2013 ທັງເມືອງຫຼວງພະບາງ ແລະ ສປປ ລາວ ແມ່ນບໍ່ຖືກຈັດຢູ່ໃນ 10 ອັນດັບຂອງສະຖານທີ່ທ່ອງທ່ຽວທີ່ໜ້າທ່ອງທ່ຽວຢູ່ໃນວາລະສານດັ່ງກ່າວ. ເຫດການດັ່ງກ່າວໄດ້ສະແດງເຖິງຄວາມຄືບໜ້າໃນການພັດທະນາຂະແໜງການທ່ອງທ່ຽວ ແລະ ເປັນການເພີ່ມການໂຄສະນາການທ່ອງທ່ຽວຂອງ ສປປ ລາວ ໃນເວທີສາກົນນັບມື້ນັບກວ້າງຂວາງຫຼາຍຂຶ້ນ.

ການປ່ຽນແປງດິນຟ້າອາກາດ ແລະ ໄພທຳມະຊາດ ໃນປີ 2014 ເປັນຕົ້ນແມ່ນໄພພິບັດທຳມະຊາດ ນ້ຳຖ້ວມໄດ້ສ້າງຄວາມເສຍຫາຍຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາຢ່າງຮ້າຍແຮງໃນບາງພື້ນທີ່ຂອງປະເທດ ເປັນຕົ້ນແມ່ນປະຊາຊົນຢູ່ໃນ 12 ແຂວງ, 58 ເມືອງ, 696 ບ້ານ ແລະ 27,311 ຄອບຄົວ; ໃນນັ້ນ ເຮືອນຂອງປະຊາຊົນເປ່ເພເສຍຫາຍກວ່າ 378 ຫຼັງ ແລະ ມີຜູ້ເສຍຊີວິດ 5 ຄົນ, ເນື້ອທີ່ນາປັກດຳຖືກນ້ຳຖ້ວມທັງໝົດ 90,176

---

[13] ວາລະສານ Wonderlust Travel Magazine

ເຮັກຕາ, ເສັ້ນທາງຖືກນໍ້າຖ້ວມ 58 ເສັ້ນ (ເປ່ເພແຮງ 339 ກມ) ແລະ ຂົວ 50 ແຫ່ງໄດ້ຮັບຜົນກະທົບ, ມີໂຮງຮຽນ ແລະ ລະບົບນໍ້າບາດານຖືກຖ້ວມ 39 ຫຼັງ ແລະ 1,121 ແຫ່ງ ຕາມລໍາດັບ (ລາຍລະອຽດບາງເຫດການທາງໄພທໍາມະຊາດທີ່ພົ້ນເດັ່ນຢູ່ໃນເອກະສານຊ້ອນທ້າຍ).

# 2. ສະພາບເສດຖະກິດມະຫາພາກຂອງ ສປປ ລາວ

## 2.1 ການເຕີບໂຕຂອງເສດຖະກິດ

ເສດຖະກິດຂອງ ສປປ ລາວ (GDP) ໃນສົກປີ 2013-14 ເຕີບໂຕໃນຈັງຫວະທີ່ຊ້າກວ່າສົກປີທີ່ຜ່ານມາເລັກນ້ອຍ ຈາກ 8% ໃນສົກປີ 2012-13 ມາເປັນ 7,8% (ກົງກັບການຄາດຄະເນຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ໃນປີ 2013). ເຖິງແມ່ນວ່າຈັງຫວະການເຕີບໂຕຊ້າກວ່າປີທີ່ຜ່ານມາກໍ່ຕາມ, ເມື່ອທຽບກັບບາງບັນດາປະເທດໃນຂົງເຂດພາກພື້ນເຫັນວ່າ ສປປ ລາວ ເປັນປະເທດທີ່ມີການເຕີບໂຕສູງຢູ່ໃນອັນດັບສອງ ຮອງຈາກມຽນມາ (ຮູບສະແດງ 2). GDP ເພີ່ມຂຶ້ນຈາກ 80.199 ຕື້ກີບ ໃນປີ 2012-13 ມາເປັນ 90.823 ຕື້ກີບ (ປະມານ 11,31 ຕື້ໂດລາສະຫະລັດ), GDP ຕໍ່ຫົວຄົນບັນລຸໄດ້ 13,41 ລ້ານກີບ (1.671 ໂດລາສະຫະລັດ) ເພີ່ມຂຶ້ນ 11,1% ເມື່ອທຽບກັບສົກປີທີ່ຜ່ານມາ. ຂະແໜງການທີ່ເປັນຕົວຂັບເຄື່ອນການເຕີບໂຕເສດຖະກິດ ຕົ້ນຕໍແມ່ນຂະແໜງບໍລິການ ເຊິ່ງເປັນຂະແໜງທີ່ຂະຫຍາຍຕົວສູງກວ່າໝູ່, ຮອງລົງມາແມ່ນຂະແໜງອຸດສາຫະກໍາ. ລາຍລະອຽດການຂະຫຍາຍຕົວຂອງແຕ່ລະຂະແໜງການມີດັ່ງນີ້.

ຂະແໜງບໍລິການເປັນຂະແໜງທີ່ຂະຫຍາຍຕົວໄວກວ່າໝູ່ ເຊິ່ງຂະຫຍາຍຕົວ 9,3% (ຫຼຸດລົງຈາກ 9,7% ໃນສົກປີຜ່ານມາ), ປະກອບສ່ວນໃນການຂະຫຍາຍຕົວລວມ 3,5 ຈຸດສ່ວນຮ້ອຍ ແລະ ກວມ 39,3% ຂອງ GDP. ຕົ້ນຕໍແມ່ນຂະແໜງການຄ້າຍົກ ແລະ ຄ້າຍ່ອຍທີ່ປະກອບສ່ວນຕໍ່ການຂະຫຍາຍຕົວລວມຫຼາຍກວ່າໝູ່, ຮອງລົງມາແມ່ນຂະແໜງການບໍລິຫານພາກລັດ ແລະ ຂະແໜງການຂົນສົ່ງ-ໄປສະນີ ແລະ ໂທລະຄົມມະນາຄົມ. ສ່ວນການທ່ອງທ່ຽວກໍ່ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໃນນັ້ນ ຈໍານວນນັກທ່ອງທ່ຽວເຂົ້າມາລາວໃນປີ 2014 ມີ 4,15 ລ້ານຄົນ ເພີ່ມຂຶ້ນ 10% ທຽບກັບປີຜ່ານມາ, ໄລຍະການພັກເຊົາຂອງນັກທ່ອງທ່ຽວຍັງໃກ້ຄຽງກັບປີຜ່ານມາ (ສະເລ່ຍ 8 ມື້), ສ່ວນຄ່າໃຊ້ຈ່າຍສະເລ່ຍຕໍ່ຄົນຕໍ່ມື້ ເພີ່ມຂຶ້ນ 5,47% (ຈາກ 69,5 ໂດລາ ມາເປັນ 73,3 ໂດລາ). ນັກທ່ອງທ່ຽວທີ່ເຂົ້າມາຫຼາຍກວ່າໝູ່ຍັງແມ່ນບັນດານັກທ່ອງທ່ຽວຈາກກຸ່ມປະເທດອາຊີ-ປາຊີຟິກ ຄື: ໄທ, ສສ ຫວຽດນາມ, ສປ ຈີນ ແລະ ສ ເກົາຫຼີ.

ຂະແໜງອຸດສາຫະກໍາ ຂະຫຍາຍຕົວ 8,5%[14] (ເພີ່ມຂຶ້ນຈາກ 7,4% ໃນສົກປີຜ່ານມາ), ປະກອບສ່ວນ 2,4 ຈຸດສ່ວນຮ້ອຍຕໍ່ການເຕີບໂຕລວມ ແລະ ກວມ 27,5% ຂອງ GDP. ຂະແໜງການປຸງແຕ່ງເປັນຂະແໜງການຕົ້ນຕໍທີ່ປະກອບສ່ວນຕໍ່ການຂະຫຍາຍຕົວຢູ່ໃນຂະແໜງອຸດສາຫະກໍາ; ໃນນັ້ນ, ຜົນຜະລິດຕັດຫຍິບ ເພີ່ມຂຶ້ນ 10% ເມື່ອທຽບກັບປີຜ່ານມາ, ເບຍ ເພີ່ມຂຶ້ນ 6,71%, ນໍ້າຫວານ ເພີ່ມຂຶ້ນ 8,32%, ຊີມັງ ເພີ່ມຂຶ້ນ 7,1 % ແລະ ໄຟຟ້າ ເພີ່ມຂຶ້ນ 16,37%, ສ່ວນຜົນຜະລິດແຮ່ທອງຂອງບໍ່ຄໍາເຊໂປນ ຫຼຸດລົງ 2,79% ເມື່ອທຽບກັບສົກປີທີ່ຜ່ານມາ.

ຂະແໜງກະສິກໍາ ຂະຫຍາຍຕົວ 3% (ຫຼຸດລົງຈາກ 3,1% ໃນສົກປີຜ່ານມາ), ປະກອບສ່ວນຕໍ່ການຂະຫຍາຍໂຕລວມ 0,8 ຈຸດສ່ວນຮ້ອຍ ແລະ ກວມ 24,8% ຂອງ GDP. ຂະແໜງການປູກຝັງ ແລະ ລ້ຽງສັດ ເປັນຂະແໜງການຕົ້ນຕໍທີ່ປະກອບສ່ວນຕໍ່ການຂະຫຍາຍຕົວຢູ່ໃນຂະແໜງກະສິກໍາ; ໃນນັ້ນ, ການຜະລິດເຂົ້າບັນລຸໄດ້ 3,53

---

[14] ນອກຈາກນັ້ນການຂະຫຍາຍຕົວຂອງຂະແໜງອຸດສາຫະກໍາຍັງສາມາດປະເມີນຈາກດັດຊະນີຜົນຜະລິດອຸດສາຫະກໍາໂດຍ ສຖສ ເປັນຜູ້ຄິດໄລ່. ໃນນັ້ນ, ດັດຊະນີຜົນຜະລິດອຸດສາຫະກໍາ ສືບຕໍ່ເພີ່ມຂຶ້ນຈາກ 3,04% ໃນປີ 2012-13 ມາເປັນ 8,07% ໃນສົກປີ 2013-14 (ດັດຊະນີມີຄ່າ 104,51 ໃນປີ 2011-12, 107,69 ໃນປີ 2012-13 ແລະ 116,38 ໃນປີ 2013-14.

ລ້ານໂຕນ[15] ເພີ່ມຂຶ້ນ 2,4% ເມື່ອທຽບກັບປີທີ່ຜ່ານມາ. ສ່ວນການປູກພືດລະດູຝົນ ບັນລຸໄດ້ປະມານ 448.387 ເຮັກຕາ; ໃນນັ້ນ, ພືດທີ່ປູກຫຼາຍກວ່າໝູ່ແມ່ນສາລີແຂງ, ສາລີຫວານ, ກາເຟ, ມັນຕົ້ນ, ຖົ່ວດິນ, ໝາກເດືອຍ ແລະ ຜັກຕ່າງໆ

ປັດໄຈຕົ້ນຕໍທີ່ຊຸກຍູ້ການເຕີບໂຕໃນປີ 2014 ນີ້[16] ແມ່ນການເພີ່ມຂຶ້ນຂອງການຊົມໃຊ້ ແລະ ການລົງທຶນ ພົ້ນເດັ່ນແມ່ນການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ຢູ່ໃນເຂດເສດຖະກິດພິເສດ ແລະ ລົງທຶນໃນກິດຈະກຳທົ່ວໄປ[17] ເຊິ່ງຕົ້ນຕໍແມ່ນລົງທຶນໃນຂະແໜງການບໍລິການ, ສ່ວນການຄ້າລະຫວ່າງປະເທດມີການຂາດດຸນເພີ່ມຂຶ້ນຍ້ອນການນໍາເຂົ້າສືບຕໍ່ເພີ່ມຂຶ້ນ ເປັນຕົ້ນແມ່ນການນໍາເຂົ້າອຸປະກອນເອເລັກໂທນິກ ແລະ ເຄື່ອງໃຊ້ໄຟຟ້າ ແລະ ການຫຼຸດລົງຂອງການສົ່ງອອກ ເປັນຕົ້ນແມ່ນການຫຼຸດລົງຂອງການສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ, ສິນຄ້າກະສິກໍາ ແລະ ເສດໂລຫະຕ່າງໆ. ລາຍລະອຽດຂອງແຕ່ລະຂະແໜງການມີດັ່ງນີ້:

ຮູບສະແດງ 2: ອັດຕາການເຕີບໂຕຂອງເສດຖະກິດຂອງ ສປປ ລາວ ແລະ ບາງປະເທດພາກພື້ນ




ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ, ຂໍ້ມູນເດືອນ 10 ປີ 2014.

ໝາຍເຫດ: ການຂະຫຍາຍຕົວ GDP ຂອງລາວແມ່ນປີງົບປະມານ

[15] ສັງລວມຂໍ້ມູນຈາກບົດລາຍງານປະຈໍາອາທິດຂອງກະຊວງກະສິກໍາ ແລະ ປ່າໄມ້ ເຊິ່ງເຂົ້ານາປີຜະລິດໄດ້ 2,73 ລ້ານໂຕນ ຫຼຸດລົງ 1%, ເຂົ້ານາແຊງຜະລິດໄດ້ 0,55 ລ້ານໂຕນ ເພີ່ມຂຶ້ນ 18,84, ສ່ວນເຂົ້າໄຮ່ຜະລິດໄດ້ 0,24 ລ້ານໂຕນເພີ່ມຂຶ້ນ 11%.

[16] ສັງເກດລວມຍອດຜະລິດຕະພັນພາຍໃນຈາກເບື້ອງການໃຊ້ຈ່າຍ.

[17] ການລົງທຶນໃນກິດຈະການທົ່ວໄປ ລວມເອົາການລົງທຶນທັງໝົດທີ່ບໍ່ລວມເອົາການລົງທຶນໃນກິດຈະກໍາສໍາປະທານ ແລະ ການລົງທຶນຢູ່ເຂດເສດຖະກິດພິເສດ.

ຮູບສະແດງ 3: ອັດຕາການຂະຫຍາຍຕົວຂອງ GDP ຕາມຂະແໜງການ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ

ຮູບສະແດງ 4: ການປະກອບສ່ວນຂອງຂະແໜງການຕໍ່ການເຕີບໂຕລວມ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ຄິດໄລ່ໂດຍ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ

## ທ່າອ່ຽງການຊົມໃຊ້ຂອງຄົວເຮືອນ

ການຊົມໃຊ້ໃນປີ 2014 ຂອງຄົວເຮືອນຍັງສືບຕໍ່ຂະຫຍາຍຕົວ ແຕ່ຢູ່ໃນຈັງຫວະທີ່ຊ້າກວ່າປີທີ່ຜ່ານມາ ໂດຍເຫັນໄດ້ຈາກດັດຊະນີຄວາມຄິດເຫັນຜູ້ຊົມໃຊ້[18] ສະເລ່ຍໝົດສົກປີ ຫຼຸດລົງຈາກ 117,1 ໃນປີ 2013 ມາເປັນ 116,2 ໃນປີ 2014. ການຂະຫຍາຍຕົວຂອງການຊົມໃຊ້ໃນຈັງຫວະທີ່ຊ້າລົງຈາກປີທີ່ຜ່ານມາ ສະແດງອອກຈາກການນຳເຂົ້າບາງສິນຄ້າເພື່ອການຊົມໃຊ້ຂະຫຍາຍຕົວຊ້າກວ່າປີຜ່ານມາ ເຊັ່ນ ເຄື່ອງໃຊ້ສອຍປະຈຳວັນ (ຂະຫຍາຍຕົວ 228% ໃນສົກປີຜ່ານມາ ເປັນ 60,95% ໃນສົກປີນີ້), ອຸປະກອນເຄື່ອງໃຊ້ໄຟຟ້າ (ຂະຫຍາຍຕົວ 99% ໃນສົກປີຜ່ານມາ ເປັນ 60,4% ໃນສົກປີນີ້), ອຸປະກອນເຄື່ອງກໍ່ສ້າງ (ຂະຫຍາຍຕົວ 94% ໃນສົກປີຜ່ານມາ ເປັນ 31,3% ໃນສົກປີນີ້) ແລະ ນ້ຳມັນເຊື້ອໄຟ ແລະ ອາຍແກັດ (ຂະຫຍາຍຕົວ 29% ໃນສົກປີຜ່ານມາ ເປັນ 9,13% ໃນສົກປີນີ້). ເຖິງຢ່າງໃດກໍ່ຕາມ, ອັດຕາການນຳເຂົ້າສິນຄ້າອຸປະໂພກທີ່ກ່າວມາຂ້າງເທິງນັ້ນຍັງຢູ່ໃນອັດຕາທີ່ສູງຢູ່ ແລະ ການນຳເຂົ້າສິນຄ້າເພື່ອບໍລິໂພກ ເຊັ່ນ ສະບຽງອາຫານກໍ່ກັບມາຢູ່ໃນທ່າອ່ຽງທີ່ເພີ່ມຂຶ້ນໃນສົກປີນີ້ (ອັດຕາການຂະຫຍາຍຕົວຂອງການນຳເຂົ້າສະບຽງອາຫານໃນປີ 2013-14 ທຽບໃສ່ປີ 2012-13 ເພີ່ມຂຶ້ນ 23% ສ່ວນປີ 2012-13 ທຽບໃສ່ປີ 2011-12 ຫຼຸດລົງ 49%).

## ການລົງທຶນ

ໃນສົກປີ 2013-14, ການລົງທຶນທັງໝົດຄາດຄະເນບັນລຸໄດ້ 40,6 ພັນຕື້ກີບ[19]. ການລົງທຶນຂອງລັດປະຕິບັດໄດ້ 9.403,41 ຕື້ກີບ ກວມປະມານ 23% ຂອງການລົງທຶນທັງໝົດ ແລະ ເພີ່ມຂຶ້ນ 7,14% ທຽບກັບສົກປີທີ່ຜ່ານມາ, ສ່ວນການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດປະຕິບັດໄດ້ 31.296 ຕື້ກີບ ເພີ່ມຂຶ້ນ 26% ເມື່ອທຽບກັບສົກປີທີ່ຜ່ານມາພົ້ນເດັ່ນແມ່ນການລົງທຶນຢູ່ໃນເຂດເສດຖະກິດພິເສດ ແລະ ການລົງທຶນໃນກິດຈະກຳທົ່ວໄປ ສ່ວນການລົງທຶນໃນກິດຈະການສຳປະທານແມ່ນບໍ່ຟື້ນຟູເມື່ອທຽບກັບປີຜ່ານມາ. ລາຍລະອຽດຂອງການລົງທຶນສະແດງອອກດັ່ງນີ້:

ການລົງທຶນທັງໝົດໃນຂະແໜງການທົ່ວໄປ[20] ໃນປີ 2014 ສາມາດປະຕິບັດໄດ້ ຈຳນວນ 2.432 ໂຄງການ ຄິດເປັນມູນຄ່າ 4,4 ຕື້ໂດລາ ເພີ່ມຂຶ້ນ 32,5% ທຽບໃສ່ສົກປີຜ່ານມາ. ຂະແໜງການທີ່ລົງທຶນຫຼາຍກວ່າໝູ່ແມ່ນຂະແໜງການເຄື່ອນໄຫວພັກເຊົາ ແລະ ບໍລິການ (ກວມ 43% ຂອງທຶນຈົດທະບຽນທັງໝົດ), ຮອງລົງມາແມ່ນຂະແໜງກໍ່ສ້າງ (ກວມ 26%) ແລະ ຂະແໜງຄ້າຍົກ-ຄ້າຍ່ອຍ (ກວມ 9%). ນັກລົງທຶນຕ່າງປະເທດທີ່ມາລົງທຶນໃນຂະແໜງການທົ່ວໄປຫຼາຍກວ່າໝູ່ແມ່ນປະເທດຈີນ, ຮອງລົງມາແມ່ນຫວຽດນາມ ແລະ ໄທ.

ການລົງທຶນຂອງບັນດາບໍລິສັດລາຍຍ່ອຍໃນເຂດເສດຖະກິດພິເສດ ແລະ ເສດຖະກິດສະເພາະ (ຂພສ) ຍັງສືບຕໍ່ຂະຫຍາຍຕົວ. ໝົດສົກປີ 2013-14 ມີຈຳນວນ 33 ບໍລິສັດ ໄດ້ຮັບການອະນຸຍາດລົງທຶນ (ຕ່າງປະເທດ 27 ບໍລິສັດ, ພາຍໃນ 6 ບໍລິສັດ) ມີມູນຄ່າການລົງທຶນຕົວຈິງ 327 ລ້ານໂດລາ ເພີ່ມຂຶ້ນ 173,89% ເມື່ອທຽບກັບສົກປີຜ່ານມາ ເຊິ່ງລົງທຶນຫຼາຍກວ່າໝູ່ແມ່ນຢູ່ໃນຂະແໜງບໍລິການ. ເຂດທີ່ມີການລົງທຶນມີການຂະຫຍາຍຕົວດີກ່ວາໝູ່ ແມ່ນເຂດບໍ່ແຕນແດນງາມ, ຮອງລົງມາແມ່ນເຂດສາມຫຼ່ຽມຄຳ ແລະ ເຂດສະຫວັນ-ເຊໂນ ຕາມລຳດັບ, ສ່ວນເຂດເສດຖະກິດພິເສດມະຫານາທີສີພັນດອນ ແມ່ນກຳລັງຢູ່ໃນຂັ້ນຕອນການອະນຸມັດ, ເຊິ່ງຄາດວ່າຈະເລີ່ມໃຫ້ບໍລິສັດລາຍຍ່ອຍເຂົ້າ

---

[18] ດັດຊະນີຄວາມຄິດເຫັນຂອງຜູ້ຊົມໃຊ້ຄິດໄລ່ໂດຍ ສຄສ, ອີງໃສ່ຜົນການສຳຫຼວດລາຍໄຕມາດກວມເອົາ 628 ຄົວເຮືອນໃນ 9 ແຂວງພາຍໃຕ້ການສະໜັບສະໜູນຂອງໂຄງການສ້າງບົດລາຍງານການພັດທະນາມະນຸດ (UNDP ແລະ ສຄສ). ຖ້າຫາກດັດຊະນີມີຄ່າຫຼາຍກວ່າ 100 ສະແດງວ່າຄົວເຮືອນມີຄວາມໝັ້ນໃຈຕໍ່ເສດຖະກິດຂອງຄົວເຮືອນແລະເສດຖະກິດໂດຍລວມ.

[19] ຄາດຄະເນໂດຍ ສຄສ ໂດຍອີງໃສ່ຕົວເລກ (1) ການລົງທຶນຂອງລັດຂອງກະຊວງການເງິນ ແລະ (2) ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ຈາກບັນຊີທຶນ ແລະ ບັນຊີການເງິນ (ດຸນບັນຊີຊຳລະກັບຕ່າງປະເທດ), ການນຳເຂົ້າເພື່ອການລົງທຶນ, ການປ່ອຍກູ້ສິນເຊື່ອທົ່ວລະບົບທະ ນາຄານ.

[20] ການລົງທຶນໃນກິດຈະການທົ່ວໄປ ລວມເອົາການລົງທຶນທັງໝົດທີ່ບໍ່ລວມເອົາການລົງທຶນໃນກິດຈະກຳສຳປະທານ ແລະ ການລົງທຶນຢູ່ເຂດເສດຖະກິດພິເສດ.

ມາລົງທຶນໄດ້ໃນຕົ້ນປີ 2015. ສິ່ງທີ່ພົ້ນເດັ່ນຂອງການລົງທຶນໃນເຂດເສດຖະກິດພິເສດ ແມ່ນການຜະລິດໃນຮູບແບບຕ່ອງໂສ້ ການຜະລິດຂອງພາກພື້ນໄດ້ເພີ່ມຂຶ້ນຢ່າງເປັນຮູບປະທຳ ເປັນຕົ້ນແມ່ນການເຄື່ອນຍ້າຍບາງຖັນແຖວການຜະລິດຈາກຕ່າງປະເທດ ໂດຍສະເພາະແມ່ນປະເທດໄທ ມາລົງທຶນຜະລິດຢູ່ໃນ ສປປ ລາວ ແລ້ວສົ່ງອອກໄປປຸງແຕ່ງເພີ່ມເຕີມຢູ່ຖານການຜະລິດໃນຕ່າງປະເທດ. ການເຄື່ອນຍ້າຍຖານການຜະລິດດັ່ງກ່າວ ຕົ້ນຕໍແມ່ນຍ້ອນຄ່າຈ້າງທີ່ຕໍ່າ ແລະ ການມີສະເຖຍລະພາບທາງການເມືອງຂອງ ສປປ ລາວ[21].

ການລົງທຶນໂດຍກົງຂອງຕ່າງປະເທດໃນກິດຈະກຳສຳປະທານ ໃນສົກປີ 2013-14 ບັນລຸໄດ້ 1,1 ຕື້ໂດລາ (ມີ 33 ໂຄງການ) ຫຼຸດລົງ 61,67% ເມື່ອທຽບກັບສົກປີຜ່ານມາ. ເຊັ່ນດຽວກັນກັບປີທີ່ຜ່ານມາ, ຂະແໜງບໍ່ແຮ່ຍັງເປັນຂະແໜງທີ່ມີການລົງທຶນຫຼາຍກວ່າໝູ່ (ມີ 22 ໂຄງການ) ຄິດເປັນມູນຄ່າ 802 ລ້ານໂດລາ (ກວມ 72,26% ຂອງມູນຄ່າການລົງທຶນທັງໝົດ), ຮອງລົງມາແມ່ນຂະແໜງໄຟຟ້າ (ຈຳນວນ 3 ໂຄງການ) ເປັນມູນຄ່າ 253 ລ້ານໂດລາ (ກວມ 22,85 %) ແລະ ຂະແໜງກະສິກຳ (ກວມ 1,66%) ແລະ ອຸດສາຫະກຳ (ກວມ 1,43%). ປະເທດທີ່ມາລົງທຶນຫຼາຍກ່ວາໝູ່ແມ່ນໄທ (ກວມ 58,3% ຂອງມູນຄ່າການລົງທຶນທັງໝົດ), ຮອງລົງມາແມ່ນ ຈີນ (ກວມ 22,16%) ແລະ ຫວຽດນາມ (ກວມ 4,2%).

ຮູບສະແດງ 5: ມູນຄ່າອະນຸມັດການລົງທຶນຂອງຕ່າງປະເທດໃນຂະແໜງສຳປະທານ




ແຫຼ່ງຂໍ້ມູນ: ກົມສົ່ງເສີມການລົງທຶນ, ກະຊວງແຜນການ

ການລະດົມທຶນໃນຕະຫຼາດຫຼັກຊັບລາວກໍ່ມີທ່າກ້າວໜ້າຢ່າງຕໍ່ເນື່ອງຄື ໃນປີ 2014 ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວມະຫາຊົນໄດ້ຈົດທະບຽນ ແລະ ເຮັດໃຫ້ປະຈຸບັນໃນຕະຫຼາດຫຼັກຊັບລາວລວມທັງໝົດມີ 4 ບໍລິສັດ ມູນຄ່າຮຸ້ນເພີ່ມຂຶ້ນ 2,30% ທຽບໃສ່ປີຜ່ານມາ. ເຖິງຢ່າງໃດກໍ່ຕາມ, ການຊື້ຂາຍຮຸ້ນໃນແຕ່ລະວັນຢູ່ໃນຕະຫຼາດຫຼັກຊັບຍັງບໍ່ທັນມີບັນຍາກາດຟົດຟື້ນເທົ່າທີ່ຄວນ ເຊັ່ນ: ມູນຄ່າການຊື້-ຂາຍຮຸ້ນ ຫຼຸດລົງ 17,24% ທຽບໃສ່ປີຜ່ານມາ; ໃນນັ້ນ, ຮຸ້ນຂອງທະນາຄານການຄ້າຕ່າງປະເທດມະຫາຊົນ (BCEL) ຫຼຸດລົງ 74,46% ແລະ ຮຸ້ນຂອງບໍລິສັດຜະລິດໄຟຟ້າ

---

[21] ອີງຕາມຜົນຂອງການຄົ້ນຄວ້າບັນຍາກາດ ແລະ ທ່າອ່ຽງຂອງການລົງທຶນຂອງນັກລົງທຶນຍີ່ປຸ່ນ ຢູ່ໃນປະເທດພາກພື້ນແມ່ນ້ຳຂອງ ໂດຍ ສຄສ ຮ່ວມກັບ ERIA, ຕົວຢ່າງບໍລິສັດຕ່າງປະເທດທີ່ໄດ້ເຄື່ອນຍ້າຍຖານການຜະລິດມາ ສປປ ລາວ ລວມມີ ToyotaBoshoku, Nikkon, Arrowork ແລະ Koyo.

ລາວມະຫາຊົນ (EDL-GEN) ຫຼຸດລົງ 15,95% (ຮູບສະແດງ 6 ແລະ 7). ສ່ວນດັດຊະນີລາຄາຮຸ້ນເພີ່ມຂຶ້ນ 12,83% ຈາກ 1.253,33 ຈຸດ ເປັນ 1.414,19 ຈຸດ. ໃນນັ້ນ ລາຄາຮຸ້ນຂອງບໍລິສັດໄຟຟ້າລາວມະຫາຊົນ ເພີ່ມຂຶ້ນ 19,49% ຈາກ 5.900 ກີບ ເປັນ 7.050 ກີບ ແລະ ລາຄາຮຸ້ນຂອງທະນາຄານການຄ້າຕ່າງປະເທດ ຫຼຸດລົງ 11,76% ຈາກ 8.500 ກີບ ເປັນ 7.500 ກີບ.

ຮູບສະແດງ 6: ດັດຊະນີລວມຂອງຕະຫຼາດຫຼັກຊັບລາວ




ຮູບສະແດງ 7: ບໍລິມາດ ແລະ ມູນຄ່າຊື້ຂາຍ




ແຫຼ່ງຂໍ້ມູນ: ຕະຫຼາດຫຼັກຊັບລາວ

## ການສົ່ງອອກ-ນຳເຂົ້າ[22]

ໃນສົກປີ 2013-14 ການສົ່ງອອກຂອງ ສປປ ລາວ ບັນລຸໄດ້ 3,4 ຕື້ໂດລາ ຫຼຸດລົງ 5,82% ທຽບກັບປີທີ່ຜ່ານມາ. ໃນນັ້ນ, ໝວດສິນຄ້າສົ່ງອອກທີ່ຫຼຸດລົງຫຼາຍກວ່າໝູ່ແມ່ນໝວດແຮ່ທາດ ແລະ ຜະລິດຕະພັນແຮ່ທາດ (ເປັນໝວດທີ່ກວມສັດສ່ວນຫຼາຍກວ່າໝູ່ຂອງການສົ່ງອອກທັງໝົດ, ຫຼຸດລົງ 33,41%) ຍ້ອນການຫຼຸດລົງຂອງປະລິມານການຜະລິດ ແລະ ການຫຼຸດລົງຂອງລາຄາທອງຢູ່ໃນຕະຫຼາດສາກົນ, ສິນຄ້າກະສິກຳ (ຫຼຸດລົງ 17,89%), ແລະ ເສດໂລຫະຕ່າງໆ (ຫຼຸດລົງ 31,67%). ເຖິງຢ່າງໃດກໍ່ຕາມ, ການສົ່ງອອກອຸດສາຫະກຳເພີ່ມຂຶ້ນ 71,69% ທຽບກັບສົກປີຜ່ານມາ ເຊິ່ງເປັນສັນຍານອັນດີຂອງຄວາມຄືບໜ້າໃນການພັດທະນາຂະແໜງອຸດສາຫະກຳປຸງແຕ່ງຂອງ ສປປ ລາວ.

ການນຳເຂົ້າເກືອບທຸກໝວດສິນຄ້າຍັງສືບຕໍ່ເພີ່ມຂຶ້ນ ແຕ່ເພີ່ມຂຶ້ນໃນຈັງຫວະທີ່ຊ້າລົງຈາກປີຜ່ານມາ.ໃນສົກປີ 2013-14 ການນຳເຂົ້າບັນລຸໄດ້ 4,6 ຕື້ໂດລາ ເພີ່ມຂຶ້ນ 28,25% (ສົກປີ 2012-13 ເພີ່ມຂຶ້ນ 48% ຈາກປີ 2011-12). ໃນສົກປີ 2013-14 ໝວດສິນຄ້າຕົ້ນຕໍທີ່ນຳເຂົ້າເພີ່ມຂຶ້ນຫຼາຍກວ່າໝູ່ແມ່ນ ສິນຄ້າອຸປະກອນ ແລະ ເຄື່ອງໃຊ້ໄຟຟ້າ (ເພີ່ມຂຶ້ນ 60,4%), ອຸປະກອນເຄື່ອງກໍ່ສ້າງ (ເພີ່ມຂຶ້ນ 31,33%), ສິນຄ້າຮັບໃຊ້ອຸດສາຫະກຳປຸງແຕ່ງ (ເພີ່ມຂຶ້ນ 24,45%) ແລະ ສິນຄ້າກະສິກຳ (ເພີ່ມຂຶ້ນ 24,09%).

[22] ຂໍ້ມູນຈາກກົມແຜນການ, ກະຊວງອຸດສາຫະກຳ ແລະ ການຄ້າ.

ເມື່ອສັງເກດເບິ່ງມູນຄ່າການຄ້າຕໍ່ GDP[23] ເຫັນວ່າອັດຕາດັ່ງກ່າວຍັງຢູ່ໃນລະດັບເກົ່າທຽບກັບສົກປີຜ່ານມາ ຄືຈາກ 71,47% ໃນສົກປີ 2012-13 ເປັນ 71,64% ໃນສົກປີ 2013-14 ໃນນັ້ນ, ອັດຕາການສົ່ງອອກຕໍ່ GDP ຫຼຸດລົງຈາກ 35,72% ມາເປັນ 30,31% ສ່ວນອັດຕາການນຳເຂົ້າຕໍ່ GDP ເພີ່ມຂຶ້ນຈາກ 35,76% ມາເປັນ 41,32%. ການເພີ່ມຂຶ້ນຂອງການນຳເຂົ້າ ແລະ ການຫຼຸດລົງຂອງການສົ່ງອອກດັ່ງກ່າວ ເຮັດໃຫ້ການຂາດດຸນການຄ້າຂອງ ສປປ ລາວ ເພີ່ມຂຶ້ນສູງ ຈາກຂາດດຸນ 3,9 ລ້ານໂດລາ ໃນສົກປີ 2012-13 ມາເປັນ 1.247,13 ລ້ານໂດລາ ໃນປີ 2013-14. ການສືບຕໍ່ຂາດດຸນຄືດັ່ງກ່າວນັ້ນ ແນ່ນອນແມ່ນມີຜົນຕໍ່ຄັງສຳຮອງເງິນຕາຕ່າງປະເທດຫຼຸດລົງ.

ຮູບສະແດງ 8: ມູນຄ່າການສົ່ງອອກ




ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະ ການຄ້າ

ຮູບສະແດງ 9: ມູນຄ່າການນຳເຂົ້າ




ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະ ການຄ້າ

---

[23] ມູນຄ່າການຄ້າແມ່ນຜົນບວກຂອງການສົ່ງອອກ ແລະ ການນຳເຂົ້າ; ມູນຄ່າການຄ້າຕໍ່ GDP ຍັງເອີ້ນວ່າ ອັດຕາການເປີດປະເທດທາງດ້ານການຄ້າ.

### ສະພາບຕະຫຼາດແຮງງານ

ໃນປີ 2013[24] ມີຈຳນວນແຮງງານເຮັດວຽກຢູ່ໃນຂະແໜງການຕ່າງໆ ຈຳນວນ 3,6 ລ້ານຄົນ; ໃນນັ້ນ, ຢູ່ໃນຂະແໜງກະສິກຳ 66,18%, ອຸດສາຫະກຳ 11,36% ແລະ ບໍລິການ 22,46%. ສຳລັບບັນຍາກາດການສະໝັກວຽກຂອງແຮງງານລາວ ໂດຍຜ່ານບໍລິສັດຈັດຫາງານພາຍໃນປະເທດ ໃນສົກປີ 2013-14 ກໍ່ມີຄວາມຟົດຟື້ນ ມີທັງໝົດ 56.186 ຄົນ ແລະ ເພີ່ມຂຶ້ນ 28,39% ຈາກສົກປີທີ່ຜ່ານມາ. ການຈັດຫາງານໃຫ້ແກ່ແຮງງານພາຍໃນ ມີທັງໝົດ 47.882 ຄົນ ເຊິ່ງເພີ່ມຂຶ້ນ 126,57%; ໃນນັ້ນ, ຂະແໜງກະສິກຳ ມີທັງໝົດ 20.449 ຄົນ (ເພີ່ມຂຶ້ນ 95,52%), ອຸດສາຫະກຳ 16.329 ຄົນ (ເພີ່ມຂຶ້ນ 154,62%), ບໍລິການ 11.104 ຄົນ (ເພີ່ມຂຶ້ນ 160,6%). ການຈັດຫາແຮງງານລາວອອກໄປເຮັດວຽກຢູ່ຕ່າງປະເທດຢ່າງເປັນທາງການ (ທີ່ໄດ້ຮັບອະນຸຍາດໃນສົກປີນີ້) ມີທັງໝົດ 8.304 ຄົນຫຼຸດລົງ 63,15% ຈາກສົກປີທີ່ຜ່ານມາ; ໃນນັ້ນ, ຂະແໜງອຸດສາຫະກຳ ກວມ 51,43% (ຫຼຸດລົງ 19,81%), ບໍລິການ 42,2% (ຫຼຸດລົງ 11,11%), ກະສິກຳ 6,37% (ຫຼຸດລົງ 64,04%).

ເຖິງຢ່າງໃດກໍ່ຕາມ, ການສະໜອງແຮງງານຢູ່ພາຍໃນຍັງບໍ່ທັນສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ ເນື່ອງຈາກມີຈຳນວນແຮງງານຈຳກັດ, ແຮງງານລາວສ່ວນໃຫຍ່ຍັງເປັນແຮງງານດິບ ແລະ ຖ້າເປັນແຮງງານທີ່ໄດ້ເຂົ້າຮຽນວິຊາຊີບກໍ່ຍັງບໍ່ທັນຖືກກັບສະພາບຄວາມຕ້ອງການຂອງຕະຫຼາດແຮງງານເທົ່າທີ່ຄວນ[25]. ດັ່ງນັ້ນ, ຈຶ່ງເຮັດໃຫ້ການນຳເຂົ້າແຮງງານທັງຂະແໜງກະສິກຳ, ອຸດສາຫະກຳ ແລະ ບໍລິການສືບຕໍ່ເພີ່ມຂຶ້ນ. ໃນສົກປີນີ້ມີການນຳເຂົ້າແຮງງານຢ່າງເປັນທາງການ ມີທັງໝົດ 49.915 ຄົນ (ເພີ່ມຂຶ້ນ 9,2% ຈາກສົກປີຜ່ານມາ); ໃນນັ້ນ, ແຮງງານເຂົ້າມາເຮັດວຽກຢູ່ຂະແໜງກະສິກຳ ກວມ 33,33% (ເພີ່ມຂຶ້ນ 4,44%), ອຸດສາຫະກຳ 26,95% (ເພີ່ມຂຶ້ນ 4,64%) ແລະ ບໍລິການ 39,72% (ເພີ່ມຂຶ້ນ 17,16%). ແຮງງານຕົ້ນຕໍແມ່ນມາຈາກ ສປ ຈີນ (32,64%), ຈາກ ສສ ຫວຽດນາມ (28,23%), ຈາກໄທ (24,97%) ແລະ ປະເທດອື່ນໆ (14,16%).

## 2.2 ສະເຖຍລະພາບເສດຖະກິດມະຫາພາກ

ໃນສົກປີ 2013-14 ໂດຍລວມແລ້ວ ເສດຖະກິດສືບຕໍ່ມີສະເຖຍລະພາບຂຶ້ນເມື່ອທຽບກັບປີຜ່ານມາ. ດັດຊະນີລາຄາຂະຫຍາຍຕົວໃນຈັງຫວະທີ່ຫຼຸດລົງ ຍ້ອນບໍ່ໄດ້ຮັບແຮງກົດດັນຈາກລາຄາສິນຄ້າຈາກພາຍນອກ ເປັນຕົ້ນແມ່ນລາຄານ້ຳມັນ ແລະ ການຄຸ້ມຄອງການຈໍລະຈອນສິນຄ້າ ໂດຍສະເພາະແມ່ນການເຂັ້ມງວດການສົ່ງອອກງົວ-ຄວາຍ. ສະເຖຍລະພາບທາງດ້ານເງິນຕາ ໂດຍລວມແມ່ນມີຄວາມສະຫງົບ ແລະ ໝັ້ນທ່ຽງ ເຊັ່ນ: ສາມາດຮັກສາອັດຕາແລກປ່ຽນໄວ້ໄດ້ໃນກອບທີ່ກຳນົດ (ບວກລົບບໍ່ເກີນ 5%). ເຖິງຢ່າງໃດກໍ່ຕາມ, ອັດຕາດອກເບ້ຍຍັງບໍ່ສາມາດປັບໂຕຫຼຸດລົງໄດ້ຕາມການຫຼຸດລົງຂອງອັດຕາເງິນເຟີ້ທີ່ຫຼຸດລົງ ເຊິ່ງສະທ້ອນໃຫ້ເຫັນການຮັດກຸມທາງດ້ານສະພາບຄ່ອງຂອງລະບົບທະນາຄານຫຼາຍຂຶ້ນ ໂດຍສະແດງອອກຈາກການຂະຫຍາຍຕົວຂອງສິນເຊື່ອທີ່ຫຼຸດລົງ. ທາງດ້ານການເງິນລັດຖະບານ ໄດ້ມີຄວາມພະຍາຍາມຄຸ້ມຄອງລາຍຮັບ ແລະ ດັດແກ້ລາຍຈ່າຍ ເພື່ອໃຫ້ການຂາດດຸນງົບປະມານຢູ່ໃນກອບບໍ່ເກີນ 5% ແຕ່ສະພາບທາງດ້ານການເງິນຍັງມີຄວາມຫຍຸ້ງຍາກເປັນຕົ້ນແມ່ນ ລັດຖະບານບໍ່ສາມາດຈັດຕັ້ງປະຕິບັດແຜນລາຍຮັບ ແລະ ລາຍຈ່າຍຕາມແຜນການດັດແກ້ໄດ້. ລາຍລະອຽດແຕ່ລະດ້ານມີດັ່ງນີ້:

---

[24] ສຖສ ຮ່ວມກັບຫ້ອງການທະນາຄານໂລກ ຄາດຄະເນແຮງງານຈາກຜົນຂອງການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍປີ 2012-13.

[25] ຈາກບົດສະຫຼຸບຮ່າງເບື້ອງຕົ້ນບົດຄົ້ນຄວ້າກ່ຽວກັບການຄາດຄະເນແຮງງານຮອດປີ 2030 ໂດຍສຖສ ປີ 2014.

## ສະເຖຍລະພາບທາງດ້ານລາຄາ

ລາຄາສິນຄ້າໂດຍລວມມີສະເຖຍລະພາບດີຂຶ້ນ ສະແດງອອກການຂະຫຍາຍຕົວຂອງດັດຊະນີລາຄາຕໍ່າລົງຈາກປີຜ່ານມາ. ອັດຕາເງິນເຟີ້ສະເລ່ຍໃນປີ 2014 ຢູ່ທີ່ລະດັບ 4,13% (ປີ 2013 ຢູ່ທີ່ລະດັບ 6,37%) ເຊິ່ງຕົ້ນຕໍແມ່ນເງິນເຟີ້ໃນໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າຕໍ່າລົງ ຈາກລະດັບ 12,56% ມາເປັນ 6,98%, ຮອງລົງມາແມ່ນໝວດຮ້ານອາຫານ ແລະ ໂຮງແຮມ ຈາກ 8,73% ມາເປັນ 7,45% ແລະ ໝວດທີ່ພັກອາໄສ ຈາກ 6,78% ມາເປັນ 5,02%. ເຖິງແມ່ນວ່າດັດຊະນີລາຄາຂອງໝວດເຫຼົ່ານີ້ຈະມີຈັງຫວະການຂະຫຍາຍຕົວຕໍ່າລົງກໍ່ຕາມ, ແຕ່ເປັນໝວດທີ່ປະກອບສ່ວນຕໍ່ເງິນເຟີ້ລວມຫຼາຍກວ່າໝູ່ ເຊັ່ນ: ໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າ ປະກອບສ່ວນ 67,39%, ຮອງລົງມາແມ່ນໝວດຮ້ານອາຫານ ແລະ ໂຮງແຮມ (ປະກອບສ່ວນ 8,81%) ແລະ ໝວດທີ່ພັກອາໄສ (ປະກອບສ່ວນ 6,49%).

ປັດໄຈທີ່ເຮັດໃຫ້ເງິນເຟີ້ຕໍ່າໃນປີນີ້ ແມ່ນຍ້ອນບໍ່ມີແຮງກົດດັນທາງດ້ານລາຄາສິນຄ້າອຸປະໂພກ-ບໍລິໂພກຈາກຕ່າງປະເທດ ເປັນຕົ້ນແມ່ນລາຄານໍ້າມັນ ແລະ ລາຄາສິນຄ້ານຳເຂົ້າອື່ນໆ ແລະ ການປະຕິບັດບັນດາມາດຕະການໃນການຄຸ້ມຄອງການຈໍລະຈອນລາຄາສິນຄ້າ ໂດຍສະເພາະແມ່ນການສົ່ງອອກງົວ-ຄວາຍເຂັ້ມງວດຂຶ້ນ ເຮັດໃຫ້ການສະໜອງສິນຄ້າດັ່ງກ່າວຢູ່ຕະຫຼາດພາຍໃນພຽງພໍໃນລະດັບໃດໜຶ່ງ.

ເມື່ອທຽບກັບປະເທດເພື່ອນບ້ານເຫັນວ່າ ອັດຕາເງິນເຟີ້ຂອງ ສປປ ລາວ ຍັງຕໍ່າກວ່າຫຼາຍປະເທດ ເຊັ່ນ: ມຽນມາ, ຫວຽດນາມ ແລະ ກຳປູເຈຍ, ສ່ວນທຽບກັບປະເທດໄທເຫັນວ່າ ອັດຕາເງິນເຟີ້ຂອງລາວຍັງສູງກວ່າ (ຮູບສະແດງ 12).

ຮູບສະແດງ 10: ການປະກອບສ່ວນຂອງໝວດສິນຄ້າຕົ້ນຕໍ ແລະ ອັດຕາເງິນເຟີ້ລວມ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ຄິດໄລ່ໂດຍ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ

ຮູບສະແດງ 11: ຈັງຫວະການເພີ່ມຂຶ້ນຂອງອັດຕາເງິນເຟີ້ລວມໃນໝວດສິນຄ້າຕົ້ນຕໍ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ

ຮູບສະແດງ 12: ອັດຕາເງິນເຟີ້ຂອງ ສປປ ລາວ ທຽບກັບປະເທດເພື່ອນບ້ານ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກອງທຶນການເງິນສາກົນ (IMF).

## ສະເຖຍລະພາບທາງດ້ານເງິນຕາ

### - ອັດຕາແລກປ່ຽນ

ປີ 2014 ອັດຕາແລກປ່ຽນເງິນກີບທຽບກັບໂດລາສະຫະລັດສະເລ່ຍ 8.049,17 ກີບຕໍ່ໂດລາ ອ່ອນຄ່າ 2,71% ທຽບກັບປີທີ່ຜ່ານມາ, ເງິນກີບທຽບກັບເງິນບາດສະເລ່ຍ 249,70 ກີບຕໍ່ບາດແຂງຄ່າ 2,52% ທຽບກັບປີທີ່ຜ່ານມາ (ຮູບສະແດງ 14). ທ່າອ່ຽງການເໜັງຕີງຂອງອັດຕາແລກປ່ຽນເງິນກີບທຽບກັບໂດລາສະຫະລັດ ແລະ ເງິນກີບທຽບກັບເງິນບາດພາຍໃນປີນີ້ ແມ່ນມີທິດທາງດຽວກັນເຊິ່ງຈະແຂງຄ່າໃນໄລຍະຕົ້ນປີ ແລະ ອ່ອນຄ່າລົງໃນໄລຍະທ້າຍປີສະແດງອອກ ຄື: ເງິນກີບທຽບກັບໂດລາສະຫະລັດແຂງຄ່າສູງສຸດໃນເດືອນກຸມພາ ສະເລ່ຍຢູ່ທີ່ 8.023,77 ກີບຕໍ່ໂດລາ ແລະ ອ່ອນຄ່າສູງສຸດໃນເດືອນທັນວາ ສະເລ່ຍຢູ່ທີ່ 8.094,29 ກີບຕໍ່ໂດລາ, ສ່ວນເງິນກີບທຽບກັບເງິນບາດແຂງຄ່າສູງສຸດໃນເດືອນມັງກອນ ສະເລ່ຍຢູ່ທີ່ 246,07 ກີບຕໍ່ບາດ ແລະ ອ່ອນຄ່າສູງສຸດໃນເດືອນສິງຫາ ສະເລ່ຍຢູ່ທີ່ 252,31 ກີບຕໍ່ບາດ.

ປັດໄຈທີ່ເຮັດໃຫ້ອັດຕາແລກປ່ຽນເງິນກີບອ່ອນຄ່າລົງທຽບກັບເງິນໂດລາ ຕົ້ນຕໍແມ່ນຍ້ອນການຟື້ນໂຕຂອງເສດຖະກິດອາເມລິກາ ທີ່ເຮັດໃຫ້ສັງຄົມມີຄວາມເຊື່ອໝັ້ນ, ນຳໃຊ້ ແລະ ສະສົມເງິນໂດລາຫຼາຍຂຶ້ນ, ເຮັດໃຫ້ເງິນໂດລາ ແຂງຄ່າຂຶ້ນ, ໃນຂະນະດຽວກັນຄວາມວຸ້ນວາຍທາງການເມືອງຢູ່ປະເທດໄທ ແລະ ການເຕີບໂຕຊ້າລົງຂອງເສດຖະກິດໄທນັ້ນ ເປັນປັດໄຈທີ່ເຮັດໃຫ້ເງິນບາດອ່ອນຄ່າ ແລະ ເຮັດໃຫ້ເງິນກີບແຂງຄ່າຂຶ້ນເມື່ອທຽບກັບເງິນບາດ. ນອກ ຈາກນີ້, ການປະຕິບັດນະໂຍບາຍຄຸ້ມຄອງອັດຕາແລກປ່ຽນທີ່ຮັດກຸມຂອງທະນາຄານແຫ່ງ ສປປ ລາວ ກໍ່ຊ່ວຍໃຫ້ການເໜັງຕີງຂອງອັດຕາແລກປ່ຽນຢູ່ໃນກອບທີ່ກຳນົດ ( ບວກລົບບໍ່ເກີນ 5%) ແລະ ຮັກສາສ່ວນຕ່າງອັດຕາແລກປ່ຽນລະຫວ່າງທະນາຄານທຸລະກິດກັບຫ້ອງຕະຫຼາດຢູ່ໃນລະດັບ 0,09% ສຳລັບເງິນໂດລາ ແລະ 0,37% ສຳລັບເງິນບາດ.

ຮູບສະແດງ 13: ອັດຕາແລກປ່ຽນພາຍໃນປີ(ລາຍເດືອນ)




ຮູບສະແດງ 14: ອັດຕາແລກປ່ຽນລາຍປີ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ

**- ອັດຕາດອກເບ້ຍ**

ໃນປີ 2014 ອັດຕາດອກເບ້ຍທັງເງິນຝາກ ແລະ ເງິນກູ້ທີ່ອລະບົບທະນາຄານທຸລະກິດມີທ່າອ່ຽງເພີ່ມຂຶ້ນ. ໃນນັ້ນ, ອັດຕາດອກເບ້ຍເງິນກູ້ໄລຍະສັ້ນ 1 ປີ ແມ່ນເພີ່ມຂຶ້ນທັງ 3 ສະກຸນເງິນ ຄື: ເງິນກີບ ເພີ່ມຂຶ້ນຈາກ 12,94% ເປັນ 13%, ເງິນບາດ ເພີ່ມຂຶ້ນຈາກ 9,32% ເປັນ 9,62%, ເງິນໂດລາ ເພີ່ມຂຶ້ນຈາກ 8,45% ເປັນ 8,82% (ຮູບສະແດງ 15). ສ່ວນອັດຕາດອກເບ້ຍເງິນຝາກໄລຍະສັ້ນ 1 ປີ ໂດຍລວມແມ່ນເພີ່ມຂຶ້ນຍົກເວັ້ນເງິນກີບທີ່ຫຼຸດລົງພຽງເລັກໜ້ອຍ ຄື: ເງິນກີບ ຫຼຸດລົງຈາກ 8,72% ເປັນ 8,71%, ສ່ວນເງິນບາດ ເພີ່ມຂຶ້ນຈາກ 3,58% ເປັນ 3,77% ແລະ ເງິນໂດລາ ເພີ່ມຂຶ້ນຈາກ 3,94% ເປັນ 4,11% (ຮູບສະແດງ16).

ຮູບສະແດງ 15: ອັດຕາດອກເບ້ຍເງິນກູ້




ຮູບສະແດງ 16: ອັດຕາດອກເບ້ຍເງິນຝາກ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ

**- ການຂະຫຍາຍຕົວຂອງປະລິມານເງິນ (M2)**[26]

ມາຮອດທ້າຍເດືອນທັນວາ 2014 ປະລິມານເງິນ (M2) ບັນລຸໄດ້ 52.322,77 ຕື້ກີບ ເພີ່ມຂຶ້ນ 25,22% ທຽບກັບໄລຍະດຽວກັນຂອງປີຜ່ານມາ. ອົງປະກອບຂອງປະລິມານເງິນໃນປີນີ້ ໂດຍລວມມີການຂະຫຍາຍຕົວເພີ່ມຂຶ້ນເປັນຕົ້ນແມ່ນເງິນຝາກກະແສລາຍວັນ 31,70%, ເງິນຝາກປະຢັດ ແລະ ຝາກມີກໍານົດ ເພີ່ມຂຶ້ນ 31,03%, ເງິນຝາກທີ່ເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 29,60%, ມີພຽງເງິນທີ່ຢູ່ນອກລະບົບທະນາຄານທີ່ຫຼຸດລົງ 2,68%. ສັງເກດເຫັນວ່າ ທາງທະນາຄານມີຄວາມລະມັດລະວັງໃນການປ່ອຍກູ້ຫຼາຍຂຶ້ນ ໂດຍເຫັນໄດ້ຈາກການປັບອັດຕາດອກເບ້ຍເພີ່ມຂຶ້ນ ແລະ ຈັງຫວະການຂະຫຍາຍຕົວຂອງສິນເຊື່ອສືບຕໍ່ຕໍ່າລົງ; ໃນນັ້ນ, ປ່ອຍກູ້ໃຫ້ເອກະຊົນຂະຫຍາຍຕົວຢູ່ໃນລະດັບຊ້າລົງຈາກ 48,50% ໃນປີ 2012 ເປັນ 36,34% ໃນປີ 2013 ແລະ ເປັນ 11,69% ໃນປີ 2014, ສ່ວນການປ່ອຍກູ້ໃຫ້ແກ່ລັດວິສາຫະກິດກໍ່ຂະຫຍາຍຕົວຕໍ່າລົງຈາກ 27,97% ໃນປີ 2013 ເປັນ 23,73% ໃນປີ 2014.

[26] ການປຽບທຽບໃນການວິເຄາະປະລິມານເງິນ ແມ່ນທຽບກັບໄລຍະດຽວກັນຂອງປີທີ່ຜ່ານມາ ຄື: ເດືອນກັນຍາຂອງປີ 2014 ທຽບກັບ ເດືອນກັນຍາ 2013.

ຮູບສະແດງ 17: ການຂະຫຍາຍຕົວ ແລະ ໂຄງປະກອບຂອງປະລິມານເງິນ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ

ຮູບສະແດງ 18: ການຂະຫຍາຍຕົວຂອງຊັບສິນພາຍໃນ ແລະ ຕ່າງປະເທດ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ

**- ດຸນບັນຊີຊຳລະກັບຕ່າງປະເທດ**

ມາຮອດໄຕມາດ II ປີ 2014 ດຸນການຊຳລະກັບຕ່າງປະເທດຂອງ ສປປ ລາວ ຂາດດຸນ 26,02 ລ້ານໂດລາ ເຊິ່ງປ່ຽນຈາກເກີນດຸນ 77,49 ລ້ານໂດລາ ໃນໄຕມາດ I ປີ 2014 ເຊິ່ງຕົ້ນຕໍແມ່ນມາຈາກການຂາດດຸນເພີ່ມຂຶ້ນຂອງດຸນບັນຊີຊຳລະປົກກະຕິ (ຂາດດຸນຈາກ 36,07 ລ້ານໂດລາ ໃນໄຕມາດ I/2014 ມາເປັນ 393,31 ລ້ານໂດລາ) ໂດຍສະເພາະແມ່ນການຂາດດຸນການຄ້າ. ສ່ວນດຸນບັນຊີທຶນ ແລະ ບັນຊີການເງິນ ຖືວ່າຍັງຢູ່ໃນສະພາບທີ່ດີ (ເກີນດຸນຈາກ 185,79 ລ້ານໂດລາ ໃນໄຕມາດ I/2014 ມາເປັນ 519,06 ລ້ານໂດລາ) ພົ້ນເດັ່ນແມ່ນການລົງທຶນໂດຍກົງຂອງຕ່າງປະເທດ ແລະ ການລົງທຶນໃນຕະຫຼາດຮຸ້ນຢູ່ ສປປ ລາວ ສືບຕໍ່ເພີ່ມຂຶ້ນ.

ການຂາດດຸນຊຳລະຄືດັ່ງກ່າວ ໄດ້ສົ່ງຜົນໃຫ້ຄັງສຳຮອງເງິນຕາຕ່າງປະເທດຫຼຸດລົງ 3,52% ຈາກ 739,53 ລ້ານໂດລາ ໃນໄຕມາດ I/2014 ເປັນ 713,48 ລ້ານໂດລາ ໃນໄຕມາດ II/2014, ແຕ່ເມື່ອທຽບກັບໄລຍະທ້າຍປີ 2013 ເຫັນວ່າ ຄັງສຳຮອງໄດ້ເພີ່ມຂຶ້ນ 11,71%. ທ່າອ່ຽງຄັງສຳຮອງເງິນຕາຕ່າງປະເທດເມື່ອທຽບກັບການນຳເຂົ້າທັງໝົດແມ່ນສືບຕໍ່ຫຼຸດລົງຢ່າງຕໍ່ເນື່ອງຈາກປີ 2007 ເປັນຕົ້ນມາຄື ຢູ່ໃນລະດັບ 6 ເດືອນ ໃນປີ 2007 ເປັນ 5,19 ເດືອນໃນປີ 2009 ເປັນ 2,91 ເດືອນ ປີ 2012, ເປັນ 2,63 ເດືອນ ປີ 2013 ແລະ ເປັນ 1,7 ເດືອນ ໃນໄຕມາດ 2 ປີ 2014[27]. ເຊັ່ນດຽວກັນນັ້ນ, ສັດສ່ວນຂອງຄັງສຳຮອງຕໍ່ກັບປະລິມານເງິນກໍ່ຢູ່ໃນທ່າອ່ຽງທີ່ຫຼຸດລົງ (ຕາຕະລາງ 1).

ໂດຍລວມແລ້ວ, ໃນໄລຍະຜ່ານມາ ການຮັກສາຄັງສຳຮອງເງິນຕາຕ່າງປະເທດຂອງປະເທດເຮົາ ແມ່ນອີງໃສ່ການດຸ່ນດ່ຽງຈາກການໄຫຼເຂົ້າມາຂອງການລົງທຶນໂດຍກົງຂອງຕ່າງປະເທດ ແລະ ເງິນຊ່ວຍເຫຼືອລ້າເປັນຕົ້ນຕໍ. ເນື່ອງຈາກວ່າ, ສ່ວນໃຫຍ່ປະເທດເຮົາເປັນປະເທດທີ່ຂາດດຸນການຄ້າ. ຖ້າຫາກທ່າອ່ຽງການຂາດດຸນດັ່ງກ່າວຍັງສືບຕໍ່ຂາດດຸນຫຼາຍຂຶ້ນໃນຊຸມປີຕໍ່ໜ້າ ໂດຍສະເພາະແມ່ນການນຳເຂົ້າເພື່ອອຸປະໂພກ ແລະ ບໍລິໂພກເພີ່ມຫຼາຍຂຶ້ນ ແລະ ຖ້າຫາກການດຸ່ນດ່ຽງຈາກການໄຫຼເຂົ້າມາຂອງແຫຼ່ງທຶນຈາກຕ່າງປະເທດ ບໍ່ພຽງພໍຈະມີຄວາມສ່ຽງຕໍ່ການຫຼຸດລົງຂອງຄັງສຳຮອງ ກໍ່ຄືການຮັກສາສະເຖຍລະພາບຂອງອັດຕາແລກປ່ຽນ.

ຕາຕະລາງ 1: ຄັງສຳຮອງເງິນຕາຕ່າງປະເທດຂອງ ສປປ ລາວ

| | 2009 | 2010 | 2011 | 2012 | 2013 | 2014 (ໄຕມາດ 2) |
|---|---|---|---|---|---|---|
| ຄັງສຳຮອງເງິນຕາຕ່າງປະເທດ (ລ້ານໂດລາ) | 632,37 | 735,84 | 678,76 | 739,65 | 661,90 | 713,48 |
| ຄັງສຳຮອງເງິນຕາຕ່າງປະເທດກຸ່ມການນຳເຂົ້າຕໍ່ເດືອນ* | 5,19 | 4,29 | 3,39 | 5,07 | 4,84 | 4,60 |
| ຄັງສຳຮອງເງິນຕາຕ່າງປະເທດກຸ່ມການນຳເຂົ້າຕໍ່ເດືອນ** | 5,19 | 4,29 | 3,39 | 2,91 | 2,63 | 1,75 |
| ສັດສ່ວນຄັງສຳຮອງຕໍ່ກັບປະລິມານເງິນ (%) | 35,43 | 28,56 | 20,46 | 16,60 | 12,42 | 12,36 |

ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ, ຄິດໄລ່ໂດຍສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ
ໝາຍເຫດ: * ແມ່ນຄິດໄລ່ໂດຍ ທະນາຄານກາງ ເຊິ່ງຫຼັງຈາກປີ 2012 ເປັນຕົ້ນມາ ການຄິດໄລ່ແມ່ນບໍ່ລວມ ສິນຄ້າທີ່ມີທຶນຮັບຮອງ ເຊິ່ງປະກອບມີ ການນຳເຂົ້າເພື່ອການລົງທຶນຂອງນັກລົງທຶນຕ່າງປະເທດ,ການນຳເຂົ້າຂອງໂຄງການຊ່ວຍເຫຼືອ ແລະການນຳເຂົ້າກູ້ຢືມພາກລັດ, ການນຳເຂົ້າຂອງອົງການຈັດຕັ້ງສາກົນ ແລະສະຖານທູດ.** ແມ່ນການຄິດໄລ່ໂດຍສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດເພື່ອປຽບທຽບຂໍ້ມູນກັບອາດີດທີ່ຜ່ານມາ.

---

[27] ມູນຄ່າການນຳເຂົ້າຕໍ່ເດືອນແມ່ນລວມເອົາສິນຄ້າທັງໝົດ ເພື່ອປຽບທຽບເບິ່ງທ່າອ່ຽງການກຸ້ມການນຳເຂົ້າສິນຄ້າທັງໝົດໃນອາດີດເຖິງປະຈຸບັນ.

## ສະເຖຍລະພາບທາງດ້ານການເງິນ[28]

ໃນສົກປີ 2013-14 ລັດຖະບານມີຄວາມພະຍາຍາມໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານການເງິນ ດ້ວຍການດັດແກ້ແຜນລາຍຮັບ-ລາຍຈ່າຍຂອງລັດຖະບານ ໂດຍສະເພາະແມ່ນໄດ້ຕັດ ແລະ ຫຼຸດການໃຊ້ຈ່າຍບາງລາຍຈ່າຍລົງ ເຊັ່ນ: ດັດແກ້ເງິນອຸດໜູນໃຫ້ແກ່ພະນັກງານ, ຫຼຸດລາຍຈ່າຍສໍາລັບອັດຕາດອກເບ້ຍ ແລະ ອຸປະກອນເຄື່ອງໃຊ້ຫ້ອງການ ເຮັດໃຫ້ງົບປະມານຂາດດຸນຫຼຸດລົງຄື: ຖ້າລວມການຊ່ວຍເຫຼືອລ້າ ການຂາດດຸນງົບປະມານຫຼຸດລົງຈາກ 6,33% ຂອງ GDP ໃນສົກປີ 2012-13 ເປັນ 3,15% ຂອງ GDP ໃນສົກປີ 2013-14 ແລະ ຖ້າບໍ່ລວມການຊ່ວຍເຫຼືອລ້າ ການຂາດດຸນກໍ່ຫຼຸດລົງຈາກ 12,46% GDP ມາເປັນ 8,88% ຂອງ GDP. ລາຍລະອຽດກ່ຽວກັບລາຍຮັບ-ລາຍຈ່າຍງົບປະມານມີດັ່ງນີ້:

### - ລາຍຮັບງົບປະມານ

ໃນສົກປີ 2013/14 ລາຍຮັບງົບປະມານ (ລວມທັງເງິນຊ່ວຍເຫຼືອລ້າ) ທັງໝົດ ປະຕິບັດໄດ້ 22.470,26 ຕື້ກີບ, ບັນລຸ 98% ຂອງແຜນດັດແກ້, ເພີ່ມຂຶ້ນ 14,72% ທຽບໃສ່ສົກປີ 2012-13 ແລະ ກວມເອົາ 24.8% ຂອງ GDP. ໃນນັ້ນ, ລາຍຮັບພາຍໃນປະຕິບັດໄດ້ 17.272,89 ຕື້ກີບ, ເພີ່ມຂຶ້ນ 17,71% ທຽບໃສ່ສົກປີທີ່ຜ່ານມາ, ສ່ວນລາຍຮັບຈາກການຊ່ວຍເຫຼືອລ້າປະຕິບັດໄດ້ 5.197,37 ຕື້ກີບ ເພີ່ມຂຶ້ນ 5,79%.

ຮູບສະແດງ 19: ລາຍຮັບງົບປະມານ




ແຫຼ່ງຂໍ້ມູນ: ກົມນະໂຍບາຍ, ກະຊວງການເງິນ

ລາຍຮັບພາຍໃນ: ລາຍຮັບຈາກພາສີ-ອາກອນປະຕິບັດໄດ້ 14.665,70 ຕື້ກີບ, ເພີ່ມຂຶ້ນ 15,92% ທຽບໃສ່ສົກປີທີ່ຜ່ານມາ, ກວມເອົາ 65,27% ຂອງລາຍຮັບທັງໝົດ; ໃນນັ້ນ, ອາກອນມູນຄ່າເພີ່ມກວມສັດສ່ວນສູງກວ່າໝູ່ (ກວມ24% ຂອງລາຍຮັບພາສີອາກອນທັງໝົດ), ຮອງລົງມາແມ່ນອາກອນຊົມໃຊ້ (ກວມ 23%), ອາກອນກໍາໄລ (12%) ແລະ ພາສີນໍາເຂົ້າ (10%). ສໍາລັບລາຍຮັບທີ່ບໍ່ແມ່ນພາສີ-ອາກອນ ບັນລຸໄດ້ 2.607,18 ຕື້ກີບ, ເພີ່ມຂຶ້ນ

---

[28] ຂໍ້ມູນພາກການເງິນແມ່ນໄດ້ຂໍ້ມູນປັບປຸງ ໃນວັນທີ 6 ເດືອນ 3 ປີ 2015.

28,92% ທຽບໃສ່ສົກປີທີ່ຜ່ານມາ (ກວມເອົາ 15% ຂອງລາຍຮັບພາຍໃນທັງໝົດ). ຈາກການເກັບລາຍຮັບຂອງລັດຖະບານເຫັນວ່າ ບໍ່ສາມາດບັນລຸໄດ້ຕາມແຜນການດັດແກ້ ໂດຍສາມາດປະຕິບັດໄດ້ 98% ຂອງແຜນການ. ໃນນັ້ນ, ລາຍຮັບພາຍໃນປະຕິບັດໄດ້ 96% ຂອງແຜນ ຍ້ອນການເກັບລາຍຮັບຈາກອາກອນກຳໄລ ຫຼຸດລົງ 15% ທຽບກັບສົກປີຜ່ານມາ, ພາສີທີ່ດິນ ຫຼຸດລົງ 40% ແລະ ລາຍຮັບບໍລິຫານວິຊາການ ຫຼຸດລົງ 28%.

**- ລາຍຈ່າຍງົບປະມານ**

ໃນສົກປີ 2013-14 ລາຍຈ່າຍງົບປະມານປະຕິບັດໄດ້ 25.326,92 ຕື້ກີບ, ບັນລຸ 92% ຂອງແຜນດັດແກ້, ເພີ່ມຂຶ້ນ 2,68% ທຽບໃສ່ປີທີ່ຜ່ານມາ ແລະ ກວມເອົາ 27,9% ຂອງ GDP. ສຳລັບລາຍຈ່າຍບໍລິຫານປົກກະຕິປະຕິບັດໄດ້ 15.934,51 ຕື້ກີບ ເພີ່ມຂຶ້ນ 0,22% ທຽບໃສ່ສົກປີຜ່ານມາ ແລະ ກວມເອົາ 63% ຂອງລາຍຈ່າຍງົບປະມານທັງໝົດ. ສ່ວນລາຍຈ່າຍລົງທຶນປະຕິບັດໄດ້ 9.403,41 ຕື້ກີບ (ຕ່ຳກວ່າແຜນການ 1,62%) ເພີ່ມຂຶ້ນ 7,14% ທຽບໃສ່ສົກປີຜ່ານມາ ແລະ ກວມເອົາ 37% ຂອງຍອດລາຍຈ່າຍງົບປະມານທັງໝົດ.

ລັດຖະບານໄດ້ດັດແກ້ແຜນລາຍຈ່າຍດ້ວຍການຕັດ ແລະ ຫຼຸດບາງການໃຊ້ຈ່າຍບໍລິຫານລົງ ເປັນຕົ້ນແມ່ນລາຍຈ່າຍເງິນອຸດໜູນ (ຫຼຸດລົງ 43,72%), ອຸປະກອນເຄື່ອງໃຊ້ຫ້ອງການ (ຫຼຸດລົງ 0,98%), ດອກເບ້ຍ (ຫຼຸດລົງ 10%) ເຮັດໃຫ້ລັດຖະບານສາມາດປະຢັດງົບປະມານຈາກລາຍຮັບພາຍໃນ ທີ່ເຫຼືອຈາກການໃຊ້ຈ່າຍບໍລິຫານ ເພື່ອໄປໃຊ້ຈ່າຍສຳລັບການລົງທຶນ (ໃນສົກປີ 2012-13 ລາຍຮັບພາຍໃນບໍ່ພຽງພໍກັບການໃຊ້ຈ່າຍບໍລິຫານ 1,214.16 ຕື້ກີບ ຫຼື ກວມ 13% ຂອງລາຍຈ່າຍລົງທຶນ ໃນສົກປີ 2012-13 ແຕ່ໃນປີ 2013-14 ລາຍຮັບພາຍໃນເຫຼືອຈາກການໃຊ້ຈ່າຍບໍລິຫານເພື່ອໄປໃຊ້ຈ່າຍໃນການລົງທຶນ ຈຳນວນ 1.349,37 ຕື້ກີບ ຫຼື ກວມ 14% ຂອງລາຍຈ່າຍລົງທຶນໃນສົກປີ 2013-14). ຜົນຂອງການປະຕິບັດມາດຕະການຮັດກຸມທາງດ້ານລາຍຈ່າຍດັ່ງກ່າວ ເຮັດໃຫ້ລັດຖະບານສາມາດແກ້ໄຂໄດ້ບັນຫາຄວາມຫຍຸ້ງຍາກທາງດ້ານການຂາດດຸນງົບປະມານ ແລະ ບັນຫາໜີ້ສິນຂອງລັດໃນລະດັບໜຶ່ງ, ເຮັດໃຫ້ຖານະການເງິນ-ງົບປະມານຂອງລັດມີຄວາມໝັ້ນຄົງຂຶ້ນ ແລະ ເສດຖະກິດມະຫາພາກມີສະເຖຍລະພາບ.

ຮູບສະແດງ 20: ລາຍຈ່າຍງົບປະມານ




ແຫຼ່ງຂໍ້ມູນ: ກົມນະໂຍບາຍ, ກະຊວງການເງິນ

**- ດຸ່ນດ່ຽງງົບປະມານ**

ໃນສົກປີ 2013-14 ງົບປະມານຂາດດຸນໄດ້ຫຼຸດລົງຈາກສົກປີຜ່ານມາເນື່ອງຈາກລັດຖະບານມີການຮັດກຸມລາຍຈ່າຍເພີ່ມຂຶ້ນ. ໃນນັ້ນ, ຖ້າບໍ່ລວມການຊ່ວຍເຫຼືອລ້າ ຂາດດຸນ 8.054,03 ຕື້ກີບ ຫຼຸດລົງ 19,39% ຈາກສົກປີທີ່ຜ່ານມາ ແລະ ກວມເອົາ 8,9% ຂອງ GDP; ຖ້າລວມການຊ່ວຍເຫຼືອລ້າ, ການຂາດດຸນງົບປະມານທັງໝົດແມ່ນ 2.856,66 ຕື້ກີບ ຫຼຸດລົງ 43,74% ຈາກສົກປີຜ່ານມາ ແລະ ກວມເອົາ 3,15% ຂອງ GDP. ເພື່ອເປັນການດຸ່ນດ່ຽງການຂາດດຸນໃນສົກປີນີ້ ລັດຖະບານໄດ້ຫັນໄປກູ້ຢືມຈາກຕ່າງປະເທດເປັນສ່ວນໃຫຍ່ ເຊິ່ງກວມ 2.441,13 ຕື້ກີບ ເພີ່ມຂຶ້ນ 51,95% ແລະ ກວມ 85% ຂອງແຫຼ່ງທຶນທັງໝົດ (ສຳລັບ ສົກປີ 2012-13 ແຫຼ່ງທຶນດຸນດ່ຽງການຂາດດຸນມາຈາກຕ່າງປະເທດ 31% ແລະ ພາຍໃນ 69%)

ຮູບສະແດງ 21: ລາຍຈ່າຍງົບປະມານ




ແຫຼ່ງຂໍ້ມູນ: ກົມນະໂຍບາຍ, ກະຊວງການເງິນ

# 3. ບາງສະພາບການພັດທະນາທາງດ້ານສັງຄົມ

## 3.1 ການຈັດຕັ້ງປະຕິບັດເປົ້າຫມາຍສະຫັດສະວັດດ້ານການພັດທະນາ

ໃນໄລຍະໜຶ່ງປີຜ່ານມາ, ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາຢູ່ ສປປ ລາວ ແມ່ນມີຄວາມຄືບໜ້າໃນຫຼາຍຕົວຊີ້ວັດ; ໃນນັ້ນ, ພິເສດແມ່ນເປົ້າໝາຍທີ 6 ກ່ຽວກັບການຕ້ານເຊື້ອພະຍາດ HIV/AIDS, ມາເລເຣຍ ແລະ ເຊື້ອພະຍາດອື່ນໆ ທີ່ຄາດວ່າຈະສາມາດບັນລຸໄດ້ໃນປີ 2015 (ລາຍລະອຽດຢູ່ໃນຕາຕະລາງຊ້ອນທ້າຍ 2). ເຖິງຢ່າງໃດກໍ່ຕາມ, ບາງເປົ້າໝາຍຍັງເປັນສິ່ງທ້າທາຍທີ່ຈະບັນລຸ ລາຍລະອຽດດັ່ງນີ້:

ເປົ້າໝາຍ ທີ 1, ຈຳນວນປະຊາກອນຢູ່ລຸ່ມເສັ້ນຄວາມທຸກຍາກມີອັດຕາສ່ວນທີ່ຫຼຸດລົງ ແລະ ເຫຼືອພຽງແຕ່ 22% ເຊິ່ງຕາມເປົ້າໝາຍແມ່ນ 24%. ເຖິງຢ່າງໃດກໍ່ຕາມ ສິ່ງທ້າທາຍທີ່ສຸດສຳລັບ MDG1 ແມ່ນດ້ານອາຫານ ແລະ ໂພຊະນາການ ເຊິ່ງເຫັນວ່າອາດບໍ່ສາມາດບັນລຸໄດ້ຕາມຄາດໝາຍທາງດ້ານສັດສ່ວນຂອງເດັກທີ່ມີນ້ຳໜັກ ແລະ ລວງສູງຕ່ຳກວ່າມາດຕະຖານ.

ເປົ້າໝາຍ ທີ 2, ເຖິງວ່າອັດຕາເຂົ້າໂຮງຮຽນປະຖົມສຸດທິຈະບັນລຸຮອດ 98% ຕາມເປົ້າໝາຍ ໃນສົກຮຽນ 2013-2014 ແຕ່ກໍ່ຍັງບໍ່ສາມາດຮັບປະກັນໄດ້ຄວາມຍືນຍົງ ແລະ ຄຸນນະພາບຂອງການພັດທະນາການສຶກສາຂັ້ນປະຖົມເພາະຍັງມີເດັກນ້ອຍຈຳນວນຫຼາຍທີ່ບໍ່ສາມາດສືບຕໍ່ຮຽນຈົນຈົບປໍ 5. ນອກຈາກນັ້ນ, ອັດຕາການປະລະ ແລະ ຄ້າງຫ້ອງຂອງນັກຮຽນຊັ້ນປໍ 1 ກໍ່ຍັງມີຫຼາຍ.

ເປົ້າໝາຍ 3, ດ້ານການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ເຫັນວ່າມີຄວາມທ້າທາຍທີ່ຈະບັນລຸ ເປັນຕົ້ນແມ່ນອັດຕາການເຂົ້າຮຽນເທົ່າທຽມຂອງເດັກຍິງຕໍ່ເດັກຊາຍໃນຂັ້ນມັດທະຍົມຕົ້ນ ແລະ ມັດທະຍົມປາຍ ໂດຍສະເພາະແມ່ນຢູ່ເຂດຫ່າງໄກສອກຫຼີກ.

ເປົ້າໝາຍ 4 ແລະ 5, ດ້ານສຸຂະພາບຂອງແມ່ ແລະ ເດັກ ເຫັນວ່າມີຄວາມຄືບຫນ້າຫຼາຍ ເປັນຕົ້ນແມ່ນອັດຕາການຕາຍຂອງແມ່ ແລະ ອັດຕາການຕາຍຂອງເດັກຕ່ຳກວ່າຫ້າປີ ໄດ້ຮັບການປັບປຸງໃຫ້ດີຂຶ້ນເມື່ອທຽບກັບປີທີ່ຜ່ານມາ. ເຖິງຢ່າງໃດກໍ່ຕາມ ອັດຕາການເຂົ້າເບິ່ງແຍງຄັນ, ການຮັກສາສຸຂະພາບຂອງເດັກຕ່ຳກວ່າໜຶ່ງປີ ແລະ ການຫຼຸດຜ່ອນຄວາມແຕກໂຕນກັນດ້ານສຸຂະພາບແມ່ ແລະ ເດັກ ລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ, ລະຫວ່າງແຂວງ ແລະ ລະຫວ່າງ ຜູ້ຮັ່ງ ແລະ ຜູ້ທຸກ ຍັງເປັນສິ່ງທ້າທາຍ.

ເປົ້າໝາຍ 7 ກ່ຽວກັບການຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ, ເປັນເປົ້າໝາຍທີ່ທ້າທາຍທີ່ສຸດ ໂດຍສະເພາະການເພີ່ມເນື້ອທີ່ປ່າປົກຫຸ້ມໃຫ້ໄດ້ 65% ໃນປີ 2015 ເຊິ່ງປັດຈຸບັນມີເນື້ອທີ່ປ່າໄມ້ປົກຫຸ້ມພຽງ 42%. ສາເຫດສ່ວນໜຶ່ງແມ່ນຍ້ອນບັນຫາການລັກລອບຕັດໄມ້ ແລະ ຄວາມບໍ່ສະເໝີພາບໃນການເຂົ້າເຖິງທີ່ດິນເພື່ອການຜະລິດຂອງປະຊາຊົນໃນເຂດຊົນນະບົດ.

ເປົ້າໝາຍ 9 ກ່ຽວກັບການຫຼຸດຜ່ອນຜົນກະທົບຈາກລູກລະເບີດທີ່ບໍ່ທັນແຕກ ໃນ ສປປ ລາວ ມາຮອດປີ 2013 ສາມາດບັນລຸໄດ້ເນື້ອທີ່ເກັບກູ້ລວມ 10.514 ເຮັກຕາ ກວມ 52% ຂອງເປົ້າໝາຍໃນປີ 2015. ສ່ວນຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຍ້ອນລະເບີດບໍ່ທັນແຕກ ເຫັນວ່າມີຄວາມຄືບໜ້າຫຼາຍ ຄື ຈາກ 302 ກໍລະນີຕໍ່ປີ (2008) ມາເປັນ 41 ກໍລະນີຕໍ່ປີ (2013) ເຊິ່ງບັນລຸໄດ້ຕາມຄາດໝາຍທີ່ກຳນົດ.

## 3.2 ການຈັດຕັ້ງປະຕິບັດເປົ້າໝາຍການອອກຈາກບັນຊີປະເທດດ້ອຍພັດທະນາ

ອີງຕາມການຕີລາຄາຂອງສະຫະປະຊາຊາດເພື່ອການພັດທະນາຄັ້ງຫຼ້າສຸດໃນປີ 2015, ການຈັດຕັ້ງປະຕິບັດມາດຖານການຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາທາງດ້ານລາຍໄດ້ຕໍ່ຫົວຄົນ (GNI) ແມ່ນມີຄວາມຄືບໜ້າ, ແຕ່ສອງມາດຖານທີ່ເຫຼືອ ເຊັ່ນ ດັດຊະນີຊັບສິນມະນຸດ (HAI) ແລະ ດັດຊະນີຄວາມບອບບາງທາງເສດຖະກິດ (EVI) ຍັງຫ່າງໄກຈາກມາດຖານ. GNI ຕໍ່ຫົວຄົນຂອງ ສປປ ລາວ ບັນລຸໄດ້ 1.232[29] ໂດລາ ເຊິ່ງປະຕິບັດໄດ້ 99% ຂອງມາດຖານການຫຼຸດພົ້ນສຳລັບມາດຖານດ້ານລາຍໄດ້ (ມາດຖານ 1.242 ໂດລາ). ສ່ວນມາດຖານ HAI ປະຕິບັດໄດ້ 60,8 ຕໍ່າກວ່າມາດຖານ (ມາດຖານແມ່ນຕ້ອງຫຼາຍກວ່າ 66) ແລະ ມາດຖານ EVI ປະຕິບັດໄດ້ 36,2 ຕໍ່າກວ່າມາດຖານ (ມາດຖານແມ່ນ ຕ້ອງຕໍ່າກວ່າ 32). ຄາດວ່າຮອດປີ 2020 ຈະສາມາດເຮັດໃຫ້ລາຍໄດ້ຕໍ່ຫົວຄົນເພີ່ມຂຶ້ນເປັນສອງທົບຂອງມາດຖານທີ່ວາງໄວ້ (2.815 ໂດລາ) ແລະ ເປັນເງື່ອນໄຂພຽງພໍສຳລັບການພິຈາລະນາໃຫ້ຫຼຸດພົ້ນອອກຈາກບັນຊີ. ແຕ່ເຖິງຢ່າງໃດກໍ່ຕາມ, ການເພີ່ມຂຶ້ນຂອງລາຍໄດ້ຕໍ່ຫົວຄົນເປັນສອງທົບຂອງມາດຖານທີ່ວາງໄວ້ໃນປີ 2020 ນັ້ນກໍ່ຍັງບໍ່ສາມາດຮັບປະກັນໄດ້ວ່າ ສິ່ງດັ່ງກ່າວເປັນການຫຼຸດພົ້ນທີ່ຍືນຍົງ ເຊິ່ງເປັນອີກເງື່ອນໄຂໜຶ່ງທີ່ສຳຄັນໃນການອອກຈາກສະຖານະພາບດ້ອຍພັດທະນາແບບສົມບູນ.

ສິ່ງທ້າທາຍຕໍ່ການວາງແຜນການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດ ການອອກຈາກບັນຊີປະເທດດ້ອຍພັດທະນາແມ່ນການຄົ້ນຄວ້າທີ່ກ່ຽວຂ້ອງ ແລະ ການຄິດໄລ່ບັນດາດັດຊະນີທີ່ເປັນອົງປະກອບຂອງມາດຖານການຫຼຸດພົ້ນຍ້ອນປັດຈຸບັນຍັງບໍ່ທັນມີຂໍ້ມູນພຽງພໍໃນການຄິດໄລ່ຕົວເລກດັ່ງກ່າວໃຫ້ສອດຄ່ອງກັບການຄິດໄລ່ຂອງສາກົນ. ນອກຈາກນັ້ນກໍ່ຕ້ອງໄດ້ເພີ່ມທະວີຄວາມເຂົ້າໃຈຂອງພະນັກງານລັດຖະກອນ ແລະ ປະຊາຊົນຕໍ່ກັບແນວຄວາມຄິດ ແລະ ມາດຖານການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາທີ່ກຳນົດໄວ້ ແນໃສ່ເພື່ອຄວາມເປັນເອກະພາບ ແລະ ເພີ່ມປະສິດທິພາບໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນການດຳເນີນແຜນການໃນແຕ່ລະໄລຍະ.

## 3.3 ຄວາມຄືບໜ້າໃນການພັດທະນາເຂດເສດຖະກິດພິເສດ

ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ (ຂພສ) ຢູ່ ສປປ ລາວ ແມ່ນມີຄວາມຄືບໜ້າສາມາດດຶງບັນດານັກລົງທຶນທັນມາສົນໃຈຫຼາຍຂຶ້ນ. ປັດຈຸບັນ, ສປປ ລາວ ເຮົາມີເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະທັງໝົດ 10 ເຂດ ແລະ ມີຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າມາດຳເນີນທຸລະກິດຫຼາຍກວ່າ 138 ບໍລິສັດ ເຊິ່ງສາມາດສ້າງການຈ້າງງານໂດຍກົງໄດ້ຫຼາຍກວ່າ 9 ພັນຄົນ. ຂະແໜງການທີ່ນັກລົງທຶນໃຫ້ຄວາມສົນໃຈຫຼາຍກວ່າໝູ່ ແມ່ນຂະແໜງບໍລິການ (ກວມ 42,75%), ຮອງລົງມາແມ່ນການຄ້າ (ກວມ 30,43%), ແລະ ອຸດສາຫະກຳ (ກວມ 26,8%). ຄວາມຄືບໜ້າໃນການພັດທະນາຂອງບາງເຂດມີດັ່ງນີ້:

ເຂດເສດຖະກິດສະຫວັນ-ເຊໂນ: ບໍລິສັດຜູ້ພັດທະນາເຂດເສດຖະກິດພິເສດສະຫວັນ-ເຊໂນ ກຳລັງຂຸ້ນຂ້ຽວກໍ່ສ້າງພື້ນຖານໂຄງລ່າງໃນບັນດາຈຸດຕ່າງໆ ເພື່ອຮອງຮັບໃຫ້ແກ່ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດທີ່ມີທ່າອ່ຽງຈະເຂົ້າມາລົງທຶນນັບມື້ຫຼາຍຂຶ້ນ. ມາຮອດປັດຈຸບັນມີຫຼາຍກວ່າ 10 ບໍລິສັດໄດ້ເປີດດຳເນີນກິດຈະການ ເຊັ່ນ: ບໍລິສັດນີກອນລາວ (NIKON LAO) ທີ່ປະກອບກ້ອງຖ່າຍຮູບ, ບໍລິສັດໂກໂຍ (KOYO) ທີ່ລົງທຶນຜະລິດຊິ້ນສ່ວນກ້ອງຖ່າຍຮູບ, ບໍລິສັດໂຕໂຢຕາບູໂຊກຸ (TOYOTA Bushoku) ທີ່ປະກອບຊິ້ນສ່ວນພາຫະນະ, ບໍລິສັດເອສຊີໂລ (Essilor) ທີ່ຜະລິດເລນແວ່ນຕາ, ບໍລິສັດແອໂລເວີກທີ່ຜະລິດຊິ້ນສ່ວນເຮືອບິນ, ບໍລິສັດ Pacifica Streams Development ແລະ ບໍລິສັດອາເດີລັງ ກຳລັງລົງມືກໍ່ສ້າງສູນຫັດຖະກຳຖັກຜົມທຽມ. ການຜະລິດເຫຼົ່ານີ້ເປັນໜໍ່

---

[29] ລາຍໄດ້ຕໍ່ຫົວຄົນດັ່ງກ່າວແມ່ນຄ່າສະເລ່ຍຂອງ 3 ປີ ເຊິ່ງເປັນຕົວເລກທີ່ຖືກນຳໃຊ້ໃນການປະເມີນການອອກຈາກບັນຊີປະເທດດ້ອຍພັດທະນາ.

ແໜງອັນສຳຄັນຂອງອຸດສາຫະກຳປຸງແຕ່ງທີ່ທັນສະໄໝຢູ່ໃນ ສປປ ລາວ.

ເຂດເສດຖະກິດສະເພາະສາມຫຼ່ຽມຄຳ: ກຸ່ມບໍລິສັດຈາກຈີນ ແລະ ລັດຖະບານແຫ່ງ ສປປ ລາວ ໄດ້ລົງນາມດັດແກ້ສັນຍາສຳປະທານສະບັບໃໝ່ຂອງເຂດເສດຖະກິດສະເພາະສາມຫຼ່ຽມຄຳ ເຊິ່ງເນື້ອໃນຂອງສັນຍາດັ່ງກ່າວແມ່ນອະນຸຍາດໃຫ້ຂະຫຍາຍພື້ນທີ່ສຳປະທານຈາກ 827 ເຮັກຕາ ເປັນ 3.000 ເຮັກຕາ. ປັດຈຸບັນ, ມີບໍລິສັດຄິງໂລມັນອິນເຕີເນໂຊນານຈຳກັດ ສປ ຈີນ ມີແຜນລົງທຶນເຂົ້າໃນ 14 ໂຄງການ ແລະ ມີສັດສ່ວນການລົງທຶນລະຫວ່າງບໍລິສັດຈາກຈີນ ກັບລັດຖະບານ ສປປ ລາວ ໃນສັດສ່ວນ 80% ແລະ 20% ຕາມລຳດັບ.

ໂຄງການນິຄົມອຸດສາຫະກຳ ແລະ ການຄ້າເຂດວຽງຈັນໂນນທອງ (VITA): ມາຮອດປີ 2014 ໄດ້ມີ 28 ບໍລິສັດຂອງຕ່າງ ປະເທດ ໄດ້ເຂົ້າມາຈັບຈອງຈົດທະບຽນ ແລະ ໄດ້ພັດທະນາໄປແລ້ວໃນເນື້ອທີ່ 110 ເຮັກຕາ, ເຂດພັດທະນານີ້ສ້າງຂຶ້ນເພື່ອດຳເນີນເຄື່ອນໄຫວທຸລະກິດການຜະລິດສົ່ງອອກ, ການຄ້າ, ການບໍລິການ, ການບໍລິຫານ ແລະ ພັດທະນາໃຫ້ກາຍເປັນເຂດອຸດສາຫະກຳການຄ້າ ແລະ ການບໍລິການທີ່ທັນສະໄໝ.

ເຂດພັດທະນາກວມລວມໄຊເສດຖາ: ຕາມແຜນການພັດທະນາແມ່ນກວມເອົາເນື້ອທີ່ 1.000 ເຮັກຕາ ແລະ ໄດ້ແບ່ງໄລຍະການພັດທະນາອອກເປັນ 3 ໄລຍະຄື: ໄລຍະທຳອິດ ແຕ່ປີ 2012-2015 (ເປັນໄລຍະກໍ່ສ້າງພື້ນຖານໂຄງລ່າງ), ໄລຍະກາງ ແຕ່ປີ 2016-2020 (ເປັນໄລຍະເລີ່ມເຂົ້າສູ່ການພັດທະນາ) ແລະ ໄລຍະສຸດທ້າຍ ແຕ່ປີ 2021-2030 ແມ່ນເນັ້ນໃສ່ການພັດທະນາອຸດສາຫະກຳເປັນຫຼັກ ເພື່ອໃຫ້ກາຍເປັນເຂດ ຫຼື ຕົວເມືອງອຸດສາຫະກຳ, ການພັດທະນາການບໍລິການ, ການຄ້າ ແລະ ທີ່ຢູ່ອາໄສ. ປັດຈຸບັນ ໄດ້ສຳເລັດການກໍ່ສ້າງພື້ນຖານໂຄງລ່າງຈຳນວນໜຶ່ງເປັນຕົ້ນແມ່ນການກໍ່ສ້າງເສັ້ນທາງເຂົ້າປະຕູໂຂງ, ຫ້ອງການ, ໄຟຟ້າ ແລະ ອື່ນໆ.

# ພາກທີ 3: ທ່າອ່ຽງເສດຖະກິດໃນປີ 2015 ແລະ ໄລຍະກາງ

## 1. ທ່າອ່ຽງເສດຖະກິດສາກົນ

ອີງຕາມການຄາດຄະເນຂອງອົງການ IMF[30], ເສດຖະກິດໂລກ ໃນປີ 2015 ແລະ ປີ 2016 ຄາດວ່າຈະຂະຫຍາຍຕົວຢູ່ໃນລະດັບ 3,5% ແລະ 3,7% ຕາມລຳດັບ. ສາເຫດຕົ້ນຕໍທີ່ພາໃຫ້ເສດຖະກິດໂລກມີຈັງຫວະຂະຫຍາຍຕົວສູງຂຶ້ນກວ່າປີຜ່ານມາ ແມ່ນຍ້ອນການຫຼຸດລົງຂອງລາຄານ້ຳມັນ ເຊິ່ງເຮັດໃຫ້ກຳລັງຊື້ ກໍ່ຄືຄວາມຕ້ອງການຂອງພາກເອກະຊົນຢູ່ບັນດາປະເທດທີ່ນຳເຂົ້ານ້ຳມັນເພີ່ມຂຶ້ນ ແລະ ການຟື້ນໂຕດ້ານເສດຖະກິດຂອງບັນດາປະເທດນຳໜ້າທາງດ້ານເສດຖະກິດ. ສຳລັບສະຫະລັດອາເມລິກາ ເສດຖະກິດມີການຟື້ນຕົວຂຶ້ນ ໂດຍເຫັນໄດ້ຈາກທ່າອ່ຽງຂອງການວ່າງງານຫຼຸດລົງ, ອັດຕາເງິນເຟີ້ຢູ່ໃນລະດັບຄົງທີ່ ແລະຄວາມຕ້ອງການພາຍໃນເພີ່ມສູງຂຶ້ນ ແລະ ຄາດວ່າ ເສດຖະກິດຈະຂະຫຍາຍຕົວສູງກວ່າ 3% ໃນປີ 2015 ແລະ 2016. ສຳລັບເສດຖະກິດຂອງຂົງເຂດເອີຣົບຄາດວ່າ ຍັງບໍ່ທັນປະກອບສ່ວນຫຼາຍຕໍ່ການຂະຫຍາຍຂອງເສດຖະກິດໂລກ ຍ້ອນສະພາບການລົງທຶນຍັງອ່ອນແອ ແລະ ອັດຕາເງິນເຟີ້ຍັງສືບຕໍ່ມີທ່າອ່ຽງຫຼຸດລົງ; ດັ່ງນັ້ນ, ຄາດວ່າອັດຕາການເຕີບໂຕໃນຂົງເຂດນີ້ຢູ່ໃນລະດັບ 1,2% ໃນປີ 2015 ແລະ 1,4% ໃນ 2016. ສ່ວນປະເທດຍີ່ປຸ່ນນັ້ນ ເຖິງແມ່ນວ່າລັດຖະບານໄດ້ມີມາດຕະການເພີ່ມລາຍຈ່າຍງົບປະມານ ແລະ ຂະຫຍາຍສິນເຊື່ອເພື່ອກະຕຸ້ນເສດຖະກິດກໍ່ຕາມ, ແຕ່ຄາດວ່າເສດຖະກິດຈະມີການຂະຫຍາຍຕົວເພີ່ມຂຶ້ນພຽງເລັກໜ້ອຍ ຍ້ອນການເພີ່ມອາກອນການຊົມໃຊ້ຂຶ້ນໃນປີຜ່ານມາ ໄດ້ເຮັດໃຫ້ຄວາມຕ້ອງການພາກເອກະຊົນພາຍໃນຫຼຸດລົງ. ສຳລັບກຸ່ມປະເທດໃນພາກພື້ນອາຊຽນຄາດວ່າ ຈະຂະຫຍາຍຕົວສະເລ່ຍຈາກ 5,1% ໃນປີ 2014 ເປັນ 5,6% ໃນປີ 2015 ແລະ 5,65% ໃນປີ 2016. ສ່ວນປະເທດຄູ່ຄ້າຫຼັກຂອງ ສປປ ລາວ ເປັນຕົ້ນແມ່ນໄທຈະຂະຫຍາຍຕົວຈາກ 0,7% ໃນປີ 2014 ເປັນ 3,8% ໃນປີ 2015 ແລະ 3,9% ໃນປີ 2016 ຍ້ອນການໃຊ້ຈ່າຍພາກເອກະຊົນຄາດວ່າ ຈະປັບຕົວດີຂຶ້ນ ເນື່ອງຈາກການຫຼຸດລົງຂອງລາຄານ້ຳມັນ ເຮັດໃຫ້ກຳລັງຊື້ໂດຍລວມເພີ່ມຂຶ້ນ ແລະ ການໃຊ້ຈ່າຍພາກລັດທີ່ຈະເພີ່ມຂຶ້ນ; ຫວຽດນາມ ຂະຫຍາຍຕົວຈາກ 5,98% ໃນປີ 2014 ເປັນ 6,2% ໃນປີ 2015 ຍ້ອນການສະພາບການລົງທຶນທີ່ດີຂຶ້ນ ແລະ ມາດຕະການຂອງລັດຖະບານທີ່ຈະແກ້ໄຂບັນຫາໜີ້ເສຍ; ສ່ວນ ສປຈີນ ຈະ ມີອັດຕາການຂະຫຍາຍຕົວຫຼຸດລົງເລັກໜ້ອຍ ຈາກ 7,4% ໃນປີ 2014 ເປັນ 6,8% ໃນປີ 2015 ແລະ 6,3% ໃນປີ 2016 ຍ້ອນນະໂຍບາຍຫຼຸດຜ່ອນສະພາບການຮ້ອນແຮງເສດຖະກິດໃນໄລຍະກ່ອນໜ້ານີ້.

ເງິນເຟີ້ຂອງໂລກຈະເພີ່ມຂຶ້ນເລັກນ້ອຍຈາກ 3,8% ໃນປີ 2014 ມາເປັນ 3,9% ໃນປີ 2015. ໃນນັ້ນ, ເງິນເຟີ້ຂອງປະເທດພັດທະນາແລ້ວຄາດວ່າ ຈະເພີ່ມຂຶ້ນຈາກ 1,6% ໃນປີ 2014 ມາເປັນ 1,7%; ສະຫະລັດອາເມລິກາ ຢູ່ໃນລະດັບ 2,1%; ເອີໂຣໂຊນຈາກ 0,5% ມາເປັນ 1,0%; ປະເທດກຳລັງພັດທະນາໃນອາຊີກໍ່ຈະສືບຕໍ່ເພີ່ມຂຶ້ນຈາກ 4,1% ມາເປັນ 4,2%; ກຸ່ມອາຊຽນຈາກ 4,6% ມາເປັນ 5,0%. ສ່ວນເງິນເຟີ້ຂອງປະເທດຄູ່ຄ້າຕົ້ນຕໍຂອງລາວຈະມີການປ່ຽນແປງເລັກໜ້ອຍ ເຊັ່ນ: ໄທ ຫຼຸດລົງຈາກ 2,1% ມາເປັນ 2,0%, ແຕ່ ສປ ຈີນ ຈາກ 2,3% ມາເປັນ 2,5%, ສ່ວນ ສສ ຫວຽດນາມ ແມ່ນຍັງຢູ່ໃນລະດັບ 5,2%. ສຳລັບລາຄາສິນຄ້າໃນປີ 2015 ຄາດວ່າ ມີຫຼາຍລາຍການຍັງສືບຕໍ່ມີທ່າອ່ຽງຫຼຸດລົງ ເປັນຕົ້ນແມ່ນ: ນ້ຳມັນດິບຄາດວ່າຈະຫຼຸດລົງ 44,7%, ອາຍແກັດຫຼຸດລົງ 30,3%, ທອງແດງຫຼຸດລົງ 5,2%, ຄຳຫຼຸດລົງ 2.0%, ສາລີຫຼຸດລົງ 6,7%, ເຂົ້າສານຫຼຸດລົງ 1,8%, ນ້ຳຕານຫຼຸດລົງ 5,4%. ແຕ່ຍັງມີບາງສິນຄ້າຕົ້ນຕໍຄາດວ່າມີທ່າອ່ຽງເພີ່ມຂຶ້ນ ເປັນຕົ້ນອາລູມີນຽມ 3,1%, ສັງກະສີ 1,8% ແລະ ຊີ້ນງົວ 1,0% (ຕາຕະລາງຊ້ອນທ້າຍ).

[30] ຄາດຄະເນຄັ້ງຫຼ້າສຸດ ໃນເດືອນ ມັງກອນ 2015.

ຮູບສະແດງ 22: ທ່າອ່ຽງການເຕີບໂຕຂອງເສດຖະກິດໂລກ, ພາກພື້ນ ແລະ ບາງປະເທດ




ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ

ຮູບສະແດງ 23: ທ່າອ່ຽງອັດຕາເງິນເຟີ້ຂອງໂລກ, ພາກພື້ນ ແລະ ບາງປະເທດ




ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ

## 2. ທ່າອ່ຽງເສດຖະກິດ ສປປ ລາວ

ອີງຕາມທ່າອ່ຽງເສດຖະກິດໂລກ ແລະ ພື້ນຖານການຜະລິດພາຍໃນ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຄາດວ່າ ເສດຖະກິດລາວຈະຍັງສືບຕໍ່ຂະຫຍາຍຕົວໃນລະດັບປະມານ 7,6%[31] ສຳລັບສົກປີ 2014-15 ແລະ 7,8% ສຳລັບສົກປີ 2015-16 ສະແດງວ່າມີທ່າອ່ຽງບັນລຸຕາມແຜນການທີ່ຕັ້ງໄວ້ບໍ່ໃຫ້ຫຼຸດ 7,5%. ປັດໄຈຊຸກຍູ້ການຂະຫຍາຍຕົວທີ່ສຳຄັນໃນປີ 2014-15 ຍັງແມ່ນທ່າອ່ຽງການຟື້ນຕົວຂອງເສດຖະກິດໂລກ ໂດຍສະເພາະບັນດາປະເທດຄູ່ຄ້າທີ່ສຳຄັນຂອງລາວຍັງສືບຕໍ່ຂະຫຍາຍຕົວ ເຊັ່ນ: ຈີນ, ສສ ຫວຽດນາມ, ຍີ່ປຸ່ນ ແລະ ໄທ ເຊິ່ງຈະສົ່ງຜົນດີໃຫ້ແກ່ການສົ່ງອອກສິນຄ້າໃນໝວດກະສິກຳ ແລະ ອຸດສາຫະກຳປຸງແຕ່ງ ເຊັ່ນ: ແຜ່ນແພ-ເຄື່ອງຕັດຫຍິບ ແລະ ອື່ນໆ. ນອກຈາກນີ້, ການຊົມໃຊ້ ແລະ ການລົງທຶນເອກະຊົນຄາດວ່າ ຈະປະກອບສ່ວນຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດຕາມປົກກະຕິ.

ສາເຫດທີ່ເຮັດໃຫ້ເສດຖະກິດລາວ ໃນສົກປີ 2014-15 ອາດຈະຂະຫຍາຍຕົວຊ້າກວ່າສົກປີ 2013-14 (7,8%) ຕົ້ນຕໍແມ່ນມາຈາກຂະແໜງການບໍລິການຄາດວ່າ ຈະຂະຫຍາຍຕົວຊ້າລົງຍ້ອນ (1) ການບໍລິການດ້ານການເງິນ ແລະ ທະນາຄານ ເຫັນວ່າ ມີທ່າອ່ຽງການປ່ອຍສິນເຊື່ອເຂົ້າໃນລະບົບເສດຖະກິດຫຼຸດລົງໃນປີ 2014; (2) ຄາດວ່າ ລັດຖະບານຈະຮັດກຸມການລົງທຶນພາກລັດຫຼາຍຂຶ້ນ ແລະ ເນັ້ນໜັກໃສ່ແກ້ໄຂໜີ້ສິນທີ່ໄດ້ກູ້ຢືມເຂົ້າໃນໂຄງການລົງທຶນຂອງລັດໃນໄລຍະຜ່ານມາ ເຊິ່ງຈະກະທົບຕໍ່ການຂະຫຍາຍຕົວຂອງຂະແໜງກໍ່ສ້າງໃຫ້ຂະຫຍາຍຕົວຊ້າລົງ. ສ່ວນຂະແໜງອຸດສາຫະກຳຄາດວ່າ ຈະຂະຫຍາຍຕົວໄວຂຶ້ນ ໂດຍສະເພາະແມ່ນ (1) ຂະແໜງອຸດສາຫະກຳບໍ່ແຮ່ຍ້ອນສະພາບລາຄາທອງໃນຕະຫຼາດໂລກມີສະເຖຍລະພາບຫຼາຍຂຶ້ນ ໃນປີ 2015[32]. ສະນັ້ນ, ການຜະລິດທອງຄາດວ່າ ຈະເຕີບໂຕສູງກວ່າເລັກໜ້ອຍ ແລະ ສາມາດປະກອບສ່ວນຕໍ່ການເຕີບໂຕຂອງຂະແໜງການໂດຍລວມໄດ້ຢ່າງຕັ້ງໜ້າ; (2) ຂະແໜງການຜະລິດໄຟຟ້າຄາດວ່າ ຈະເຕີບໂຕໄວ ຍ້ອນເຂື່ອນໄຟຟ້າໃໝ່ຈຳນວນໜຶ່ງ ເຊັ່ນ: ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່, ນ້ຳຄານ 2, ເຊຂະມານ 1 ແລະ ຫົງສາລິກໄນທີ່ຈະເລີ່ມດຳເນີນການຜະລິດໄຟຟ້າ ແລະ ສົ່ງອອກ ເຊິ່ງການຜະລິດໄຟຟ້າລວມຈາກເຂື່ອນເຫຼົ່ານີ້ ໃນປີ 2015 ຄາດວ່າຈະໄດ້ເຖິງ 3,339 ກິກະວັດໂມງ (Gwh). ຂະແໜງກະສິກຳ ກໍ່ອາດຈະຂະຫຍາຍຕົວໃນທ່າອ່ຽງທີ່ດີ ໃນປີ 2015 ໂດຍສະເພາະການຜະລິດເຂົ້າ ເນື່ອງຈາກການຈັດຕັ້ງປະຕິບັດຜະລິດເຂົ້າໃນປີຜ່ານມາບໍ່ສາມາດປະຕິບັດໄດ້ຕາມແຜນ, ສະນັ້ນ, ຄາດວ່າລັດຖະບານ ແລະ ພາກສ່ວນກ່ຽວຂ້ອງຈະໄດ້ເພີ່ມມາດຕະການກະຕຸກຊຸກຍູ້ການຜະລິດເຂົ້າໃຫ້ດີຂຶ້ນ ໃຫ້ບັນລຸຕາມແຜນທີ່ວາງໄວ້ໃນປີ 2015 ແລະ ເຮັດໃຫ້ການຜະລິດເຂົ້າໃນປີນີ້ ຈະເຕີບໂຕໃນລະດັບໄວຂຶ້ນ, ສ່ວນການຜະລິດກະສິກຳອື່ນໆ ຄາດວ່າການເຕີບໂຕຈະຢູ່ໃນລະດັບໃກ້ຄຽງກັບປີຜ່ານມາ.

ສຳລັບການເຕີບໂຕຂອງເສດຖະກິດລາວ ໃນປີ 2015-16 ຈະຂະຫຍາຍຕົວໃນອັດຕາສູງກວ່າສົກປີ 2014-15 ໂດຍມີປັດໄຈຕົ້ນຕໍແມ່ນຂະແໜງການຜະລິດໄຟຟ້າ ເນື່ອງຈາກວ່າມີເຂື່ອນໄຟຟ້າໃໝ່ທີ່ຫາກໍ່ສຳເລັດຈະເລີ່ມການຜະລິດໄຟຟ້າ ແລະ ສົ່ງອອກບວກກັບມີບາງເຂື່ອນໃໝ່ໃນປີຜ່ານມາຈະເພີ່ມກຳລັງການຜະລິດຂຶ້ນ. ສະນັ້ນ, ການຜະລິດໄຟຟ້າໂດຍລວມຄາດວ່າຈະເຕີບໂຕເຖິງ 26%. ນອກນັ້ນ, ຄາດວ່າພາກການບໍລິການຈະເຕີບໂຕຂຶ້ນສູງກວ່າເກົ່າໂດຍສະເພາະຂະແໜງການເງິນ-ການທະນາຄານຄາດວ່າຈະກັບມາປ່ອຍສິນເຊື່ອຫຼາຍຂຶ້ນ ພາຍຫຼັງໄດ້ມີການຮັດກຸມການປ່ອຍສິນເຊື່ອ ແລະ ສຸມໃສ່ເກັບໜີ້ສິນໃນປີ 2015. ສ່ວນພາກກະສິກຳຄາດວ່າຈະເຕີບໂຕຊ້າລົງເລັກໜ້ອຍ ແຕ່ຄາດວ່າຈະບໍ່ມີຜົນກະທົບຫຼາຍຕໍ່ກັບການເຕີບໂຕໂດຍລວມ.

31 ຜົນພະຍາກອນກ່ຽວກັບທ່າອ່ຽງເສດຖະກິດລາວໂດຍໃຊ້ແບບຈຳລອງເສດຖະກິດມະຫາພາກຂອງສກສໃນເດືອນກຸມພາປີ 2014.

32 ອີງຕາມຕົວເລກຄາດຄະເນລາຄາທອງໃນຕະຫຼາດໂລກຂອງອົງການກອງທຶນໂລກ (IMF).

ສຳລັບເງິນເຟີ້ຄາດວ່າຈະຢູ່ໃນລະດັບສະເລ່ຍປະມານ 3,3%[33] ໃນສົກປີ 2014-15. ປັດໄຈຕົ້ນຕໍທີ່ເຮັດໃຫ້ດັດຊະນີລາຄາຂະຫຍາຍຕົວຕ່ຳກວ່າປີຜ່ານມາ ແມ່ນຍ້ອນປັດໄຈພາຍນອກ ໂດຍສະເພາະແມ່ນສະພາບລາຄານ້ຳມັນທີ່ຫຼຸດລົງ ບວກກັບຜົນກະທົບຈາກລາຄາສິນຄ້າຂອງປະເທດເພື່ອນບ້ານ ໂດຍສະເພາະປະເທດໄທທີ່ມີທ່າອ່ຽງຫຼຸດລົງຈາກປີຜ່ານມາເຊິ່ງຈະສົ່ງຜົນກະທົບທາງກົງ ແລະ ທາງອ້ອມຕໍ່ລາຄາສິນຄ້ານຳເຂົ້າ ໂດຍສະເພາະໝວດສິນຄ້າບໍລິໂພກ ແລະ ອຸປະໂພກ.

## 3. ບັນຫາທີ່ຕ້ອງເອົາໃຈໃສ່ໃນຕໍ່ໜ້າ

ສົກປີ 2014-15 ແມ່ນປີມ້ອນທ້າຍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ກໍ່ຄືການປູພື້ນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII. ດັ່ງນັ້ນ, ເພື່ອສູ້ຊົນການຈັດຕັ້ງປະຕິບັດການຊຸກຍູ້ໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວ ແລະ ມີປະສິດທິພາບ ໄປຄຽງຄູ່ກັບການຮັກສາສະເຖຍລະພາບຂອງເສດຖະກິດມະຫາພາກ, ມີບາງບັນຫາທີ່ຕ້ອງເອົາໃຈໃສ່ດັ່ງນີ້:

1) ຈາກທ່າອ່ຽງການຂະຫຍາຍຕົວໃນໄລຍະຜ່ານມາເຫັນວ່າ ມີຄວາມທ້າທາຍທີ່ຈະບັນລຸເປົ້າໝາຍການຂະຫຍາຍຕົວຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ຄື: ໃຫ້ເສດຖະກິດຂະຫຍາຍຕົວຢູ່ໃນລະດັບບໍ່ຫຼຸດ 8%. ຈາກທ່າອ່ຽງໃນໄລຍະຜ່ານມາ ຄາດວ່າເສດຖະກິດໃນສົກປີ 2010-11 ຫາ 2014-15 ຈະຂະຫຍາຍຕົວສະເລ່ຍປະມານ 7,8% ຕໍ່ປີ ຍ້ອນວ່າສະເລ່ຍ 4 ປີຜ່ານມາ ເສດຖະກິດຂະຫຍາຍຕົວຢູ່ໃນລະດັບ 8,05% ແລະ ຄາດວ່າສົກ 2014-15 ຈະຂະຫຍາຍຕົວຢູ່ໃນລະດັບ 7,6%. ດັ່ງນັ້ນ, ຜົນຂອງການຈັດຕັ້ງປະຕິບັດແຜນປີສຸດທ້າຍແມ່ນມີຄວາມສຳຄັນຕັດສິນ ແລະ ປັດໄຈທີ່ຕ້ອງໄດ້ເອົາໃຈໃສ່ແມ່ນສົ່ງເສີມໃຫ້ການຜະລິດເຂົ້າໃນສົກປີ 2014-15 ບັນລຸຕາມແຜນ, ສືບຕໍ່ຕິດຕາມ ແລະ ສະໜັບສະໜູນບັນດາໂຄງການພະລັງງານໄຟຟ້າທີ່ມີແຜນການຜະລິດໃນສົກປີນີ້ ໃຫ້ສາມາດດຳເນີນການຜະລິດຕາມແຜນ, ຊຸກຍູ້ການຜະລິດ ແລະ ສົ່ງອອກອຸດສາຫະກຳປຸງແຕ່ງໃຫ້ສືບຕໍ່ຂະຫຍາຍຕົວໄວ.

2) ສືບຕໍ່ສ້າງສະພາບແວດລ້ອມ ເພື່ອດຶງດູດການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ ໂດຍສະເພາະແມ່ນການລົງທຶນໃນຮູບແບບຕ່ອງໂສ້ການຜະລິດຂອງພາກພື້ນ ທີ່ເລີ່ມມີໜໍ່ແໜງຢູ່ໃນເຂດເສດຖະກິດພິເສດຂອງລາວ.

3) ເນື່ອງຈາກວ່າໃນໄລຍະຜ່ານມາການນຳເຂົ້າສິນຄ້າອຸປະໂພກ ແລະ ບໍລິໂພກໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ໝວດສະບຽງອາຫານຍັງເປັນໝວດປະກອບສ່ວນຕົ້ນຕໍຕໍ່ອັດຕາເງິນເຟີ້. ດັ່ງນັ້ນ, ຮຽກຮ້ອງໃຫ້ມີການພັດທະນາ ແລະ ການວາງນະໂຍບາຍຕໍ່ການສົ່ງເສີມການຜະລິດ ເພື່ອປ້ອນຕະຫຼາດພາຍໃນຢ່າງຈິງຈັງດ້ວຍການຄົ້ນຄວ້າ ແລະ ຫາມາດຕະການທີ່ເໝາະສົມ ເພື່ອເພີ່ມການຜະລິດເພື່ອປ້ອນຕະຫຼາດພາຍໃນ ແລະ ກ້າວໄປສູ່ການສົ່ງອອກ.

4) ການເກັບລາຍຮັບໃນສົກປີນີ້ໄດ້ສືບຕໍ່ບໍ່ບັນລຸຕາມແຜນ ເຊິ່ງໄດ້ສົ່ງຜົນກະທົບເຖິງການຈັດຕັ້ງປະຕິບັດແຜນລາຍຈ່າຍ ໂດຍສະເພາະແມ່ນລາຍຈ່າຍເພື່ອການລົງທຶນພັດທະນາໃນໂຄງການ ແລະ ກິດຈະກຳຕ່າງໆ. ດັ່ງນັ້ນ, ການສ້າງແຜນງົບປະມານຄວນມີການຄົ້ນຄວ້າໃຫ້ເລິກເຊິ່ງກວ່າເກົ່າ ເພື່ອໃຫ້ມີຄວາມໃກ້ຄຽງກັບຄວາມສາມາດຕົວຈິງຫຼາຍຂຶ້ນ ແລະ ຮັບປະກັນມີງົບປະມານໃນການຈັດຕັ້ງປະຕິບັດແຜນການໃຊ້ຈ່າຍຕາມແຜນພັດທະນາ. ຄຽງຄູ່ກັນນັ້ນ, ກໍ່ແມ່ນການສືບຕໍ່ຄົ້ນຄວ້າ ແລະ ປະຕິບັດມາດຕະການຢ່າງຈິງຈັງຕໍ່ການຫຼຸດຜ່ອນການຮົ່ວໄຫຼຂອງລາຍຮັບ.

---

[33] ອີງຕາມຜົນການພະຍາກອນຂອງແບບຈຳລອງເສດຖະກິດມະຫາພາກ ຂອງ ສດສ ທີ່ປັບປຸງຫຼ້າສຸດໃນເດືອນ ເມສາ 2015.

5) ເອົາໃຈໃສ່ປະຕິບັດວິໄນຢ່າງຈິງຈັງຕໍ່ກັບການສ້າງໂຄງການນອກແຜນ ແລະ ພ້ອມກັນນັ້ນກໍ່ຕ້ອງມີຄວາມຮັບປະກັນໃນການຊໍາລະໜີ້ສິນໃຫ້ໄປຕາມແຜນການທີ່ກໍານົດໄວ້ເບື້ອງຕົ້ນ.

6) ການຄຸ້ມຄອງລາຄາສິນຄ້າໃນໄລຍະທີ່ຜ່ານມາ ເປັນຕົ້ນແມ່ນບາງລາຍການສິນຄ້າທີ່ບໍ່ຢູ່ໃນລາຍການທີ່ກະທົບໄວ ແຕ່ຕິດພັນກັບລາຄາສິນຄ້າທີ່ກະທົບໄວ (ເປັນຕົ້ນແມ່ນ ຄ່າຂົນສົ່ງ, ຄ່າໂດຍສານ ແລະ ລາຍການສິນຄ້າໃນໝວດຮ້ານອາຫານຕ່າງໆ) ນັ້ນ ຍັງບໍ່ທັນໄດ້ຮັບການເອົາໃຈໃສ່ເທົ່າທີ່ຄວນຈາກພາກສ່ວນທີ່ກ່ຽວຂ້ອງ (ຕົວຢ່າງ: ລາຄາຂອງສິນຄ້າ ຫຼື ບໍລິການໄດ້ປັບຂຶ້ນເວລາລາຄານໍ້າມັນຂຶ້ນ, ແຕ່ເມື່ອລາຄານໍ້າມັນປັບໂຕລົງລາຄາສິນຄ້າ ຫຼື ບໍລິການເຫຼົ່ານັ້ນບໍ່ຖືກປັບຫຼຸດລົງ). ດັ່ງນັ້ນ, ຮຽກຮ້ອງໃຫ້ມີການເພີ່ມການຕິດຕາມ ແລະ ຫາວິທີແກ້ໄຂການເພີ່ມຂຶ້ນຂອງລາຄາສິນຄ້າທີ່ຕິດພັນກັບລາຄາສິນຄ້າທີ່ກະທົບໄວ.

7) ທ່າອ່ຽງການປ່ອຍສິນເຊື່ອທີ່ຂະຫຍາຍຕົວຫຼຸດລົງ ແລະ ການຮັດກຸມສະພາບຄ່ອງຫຼາຍຂຶ້ນໂດຍເຫັນໄດ້ຈາກການເພີ່ມຂຶ້ນຂອງອັດຕາດອກເບ້ຍ ເປັນສິ່ງທ້າທາຍໜຶ່ງຕໍ່ການສະໜອງທຶນພາຍໃນໃຫ້ແກ່ການພັດທະນາ. ດັ່ງນັ້ນ, ຄວນເອົາໃຈໃສ່ແກ້ໄຂບັນຫາທີ່ຕິດພັນກັບທະນາຄານ.

8) ການສ້າງໜ່ວຍງານການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດການອອກຈາກບັນຊີປະເທດດ້ອຍພັດທະນາແມ່ນມີຄວາມຈໍາເປັນ ຍ້ອນປັດຈຸບັນຍັງບໍ່ທັນມີໜ່ວຍງານສະເພາະ ແລະ ບໍ່ທັນມີຂໍ້ມູນພຽງພໍໃນການຄິດໄລ່ຕົວເລກດັ່ງກ່າວໃຫ້ສອດຄ່ອງກັບການຄິດໄລ່ຂອງສາກົນ. ຄຽງຄູ່ກັນນັ້ນ, ການເພີ່ມທະວີສ້າງຄວາມເຂົ້າໃຈຂອງພະນັກງານລັດຖະກອນ ແລະ ສັງຄົມຕໍ່ກັບແນວຄວາມຄິດ ແລະ ມາດຖານການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາທີ່ກໍານົດໄວ້ ແນໃສ່ເພື່ອຄວາມເປັນເອກະພາບ ແລະ ເພີ່ມປະສິດທິພາບໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນການດໍາເນີນແຜນການໃນແຕ່ລະໄລຍະ.

9) ສືບຕໍ່ປະເມີນ ແລະ ຊຸກຍູ້ວຽກງານການຈັດຕັ້ງປະຕິບັດບັນດາເປົ້າໝາຍສະຫັດສະວັດດ້ານການພັດທະນາ ເພື່ອຊອກຫາມາດຕະການໃນການສົ່ງເສີມກິດຈະກໍາທີ່ເຫັນວ່າມີຄວາມຈໍາເປັນ ໂດຍສະເພາະແມ່ນການສົ່ງເສີມບັນດາຕົວຊີ້ວັດຍ່ອຍທີ່ມີຄວາມສ່ຽງຈະບໍ່ສາມາດບັນລຸໄດ້ຕາມແຜນ.

10) ມີຄວາມຈໍາເປັນໃນການເພີ່ມທະວີການຮ່ວມມື ແລະ ປະສານງານ ລະຫວ່າງຂະແໜງການກ່ຽວຂ້ອງໃນການຕິດຕາມ ແລະ ຄຸ້ມຄອງເສດຖະກິດມະຫາພາກໃຫ້ມີຄວາມສອດຄ່ອງ ແລະ ທັນເວລາ ເພື່ອສາມາດປະເມີນ ແລະ ວາງນະໂຍບາຍຮອງຮັບກັບການປ່ຽນແປງຂອງສະພາບເສດຖະກິດ-ສັງຄົມໄດ້ທັນເວລາ.

11) ກຽມພ້ອມຮັບມືໄພພິບັດທາງທໍາມະຊາດ ໂດຍສະເພາະແມ່ນໄພນໍ້າຖ້ວມໃນປີ 2015 ທີ່ອາດສ້າງຄວາມເສຍຫາຍໃຫ້ແກ່ການຜະລິດ ກໍ່ຄືຊີວິດການເປັນຢູ່ຂອງປະຊາຊົນ.

# ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ 1: ດັດຊະນີຄວາມຄິດເຫັນຜູ້ຊົມໃຊ້ ແລະ ທ່າອ່ຽງທຸລະກິດ

### ກ. ການປ່ຽນແປງດັດຊະນີຄວາມຄິດເຫັນຂອງຜູ້ຊົມໃຊ້ໃນປີ 2014

ສະພາບການຊົມໃຊ້ຂອງຄົວເຮືອນໃນປີ 2014 ເຫັນວ່າມີທ່າອ່ຽງຫຼຸດລົງຈາກປີ 2013 ເລັກໜ້ອຍ ເຫັນໄດ້ຈາກຄ່າດັດຊະນີຄວາມຄິດເຫັນຜູ້ຊົມໃຊ້ສະເລ່ຍໝົດປີຫຼຸດລົງຈາກ 117,1 ໃນປີ 2013 ມາເປັນ 116,0 ໃນປີ 2014. ເຖິງຢ່າງໃດກໍ່ຕາມ, ຄ່າດັດຊະນີຍັງຢູ່ໃນລະດັບສູງກວ່າຄ່າດັດຊະນີ 100 ສະແດງໃຫ້ເຫັນວ່າ ພາກການຊົມໃຊ້ຂອງຄົວເຮືອນແມ່ນຍັງມີບັນຍາກາດຟົດຟື້ນຢູ່. ສາເຫດທີ່ພາໃຫ້ດັດຊະນີມີທ່າອ່ຽງຫຼຸດລົງເລັກໜ້ອຍ ຕົ້ນຕໍແມ່ນຍ້ອນຄ່າດັດຊະນີການໃຊ້ຈ່າຍໃນໝວດສິນຄ້າປະຈຳວັນ ແລະ ດັດຊະນີຖານະທາງການເງິນ.

ຮູບສະແດງ ກ-1: ດັດຊະນີຄວາມຄິດເຫັນຜູ້ຊົມໃຊ້ ປະຈຳປີ 2010-2014




ແຫຼ່ງຂໍ້ມູນ: ການສຳຫຼວດຄວາມຄິດເຫັນຂອງຜູ້ຊົມໃຊ້, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສ)

### ກ.1 ສະພາບການໃຊ້ຈ່າຍໃນສິນຄ້າປະຈຳວັນ-ບໍລິການ ແລະ ສິນຄ້າຍາວນານ

ການໃຊ້ຈ່າຍໃນສິນຄ້າປະຈຳວັນ ແລະ ບໍລິການ ໃນປີນີ້ເຫັນວ່າມີທ່າອ່ຽງຫຼຸດລົງຈາກປີຜ່ານມາ ຈາກ 119,4 ມາເປັນ 114,7 ໃນປີ 2014. ເຖິງຢ່າງໃດກໍ່ຕາມ, ຄ່າດັດຊະນີຂອງໝວດນີ້ຍັງຢູ່ໃນລະດັບສູງ ເຊິ່ງສະແດງໃຫ້ຮູ້ວ່າການໃຊ້ຈ່າຍຍັງມີບັນຍາກາດຟົດຟື້ນດີ. ໃນນັ້ນ, ໝວດສິນຄ້າທີ່ມີຄວາມຟົດຟື້ນສ່ວນໃຫຍ່ແມ່ນໝວດທີ່ພັກອາໃສ, ໄຟຟ້າ, ນ້ຳປະປາ, ເຊື້ອເພີງ ແລະ ສິນຄ້າທີ່ກ່ຽວຂ້ອງກັບການສຶກສາ ເຊັ່ນ: ອຸປະກອນການຮຽນ, ຈ່າຍຄ່າຮຽນ, ເຄື່ອງນຸ່ງຫົ່ມ ແລະ ເກີບ. ນອກນັ້ນ, ທ່າອ່ຽງຂອງການໃຊ້ຈ່າຍເຂົ້າໃນໝວດອາຫານ ແລະ ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າ ກໍ່ເຫັນວ່າມີຄວາມຟົດຟື້ນເຊັ່ນກັນ.

ຮູບສະແດງ ກ-2: ດັດຊະນີການໃຊ້ຈ່າຍສິນຄ້າປະຈໍາບັນ ແລະ ບໍລິການ ປະຈໍາປີ 2010-2014




ແຫຼ່ງຂໍ້ມູນ: ການສໍາຫຼວດຄວາມຄິດເຫັນຂອງຜູ້ຊົມໃຊ້, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສ)

ສ່ວນສະພາບການໃຊ້ຈ່າຍໃນສິນຄ້າຍາວນານຂອງຄົວເຮືອນໃນ 2014 ຍັງສືບຕໍ່ມີບັນຍາກາດຟົດຟື້ນ ເຊິ່ງຄ່າດັດຊະນີການໃຊ້ຈ່າຍສິນຄ້າຍາວນານຂອງຄົວເຮືອນ ຍັງຢູ່ໃນລະດັບສູງຄືກັບປີຜ່ານມາທີ່ລະດັບ 111,1. ໃນນັ້ນ, ລາຍການສິນຄ້າທີ່ຄົວເຮືອນໄດ້ເພີ່ມການໃຊ້ຈ່າຍຂຶ້ນແມ່ນ: ຄອມພິວເຕີ, ຍານພາຫະນະ ແລະ ເຄື່ອງໃຊ້ໄຟຟ້າ.

ຮູບສະແດງ ກ-3: ດັດຊະນີການໃຊ້ຈ່າຍສິນຄ້າຍາວນານ ປະຈໍາປີ 2010-2014




ແຫຼ່ງຂໍ້ມູນ: ການສໍາຫຼວດຄວາມຄິດເຫັນຂອງຜູ້ຊົມໃຊ້, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສ)

## ກ.2 ຖານະທາງການເງິນ

ສະພາບຖານະທາງການເງິນຂອງຄົວເຮືອນ ໃນປີ 2014 ຍັງຢູ່ໃນລະດັບດີ ເຖິງແມ່ນວ່າຄ່າດັດຊະນີຖານະທາງການເງິນຂອງຄົວເຮືອນຈະມີທ່າອ່ຽງຫຼຸດລົງເລັກໜ້ອຍຈາກ 120,8 ໃນປີ 2013 ມາເປັນ 119 ຍ້ອນລາຍຮັບຂອງຄົວເຮືອນຫຼຸດລົງ ເປັນຕົ້ນແມ່ນລາຍຮັບຈາກການຄ້າຂາຍ, ຜົນຜະລິດກະສິກຳ ແລະ ພີ່ນ້ອງສົ່ງເງິນມາແຕ່ຕ່າງປະເທດ. ເຖິງຢ່າງໃດກໍ່ຕາມ ສະພາບດັ່ງກ່າວບໍ່ໄດ້ກະທົບເຖິງຖານະການເງິນຂອງຄົວເຮືອນປານໃດ ເຊິ່ງສະແດງອອກຄື ການອອມຂອງຄົວເຮືອນ[34] ຍັງມີທ່າອ່ຽງເພີ່ມຂຶ້ນ ແລະ ການກູ້ຢືມເງິນຫຼຸດລົງ.

## ກ.3 ໂອກາດໃນການຊອກວຽກເຮັດ

ອີກປັດໄຈໜຶ່ງທີ່ເຮັດໃຫ້ສະພາບຂອງຄົວເຮືອນຍັງສືບຕໍ່ມີບັນຍາກາດດີ ກໍ່ແມ່ນບັນຍາກາດການຊອກວຽກເຮັດງານທຳຂອງຄົວເຮືອນ. ອີງຕາມການສຳຫຼວດຄວາມຄິດເຫັນຂອງຜູ້ຊົມໃຊ້, ຄົວເຮືອນໄດ້ໃຫ້ທັດສະນະວ່າ ໂອກາດໃນການຊອກວຽກແມ່ນມີທ່າອ່ຽງດີຂຶ້ນ. ດັດຊະນີໂອກາດໃນຊອກວຽກເຮັດງານທຳ ໃນປີ 2014 ແມ່ນຢູ່ໃນລະດັບ 118,8 ເພີ່ມຂຶ້ນຈາກ 117 ໃນປີ 2013, ນີ້ສະແດງໃຫ້ເຫັນວ່າ ການຊອກວຽກເຮັດງານທຳມີບັນຍາກາດຟື້ນ ແລະ ການຊອກວຽກເຮັດງານທຳໄດ້ງ່າຍຂຶ້ນໃນປີນີ້.

ຮູບສະແດງ ກ-4: ດັດຊະນີໂອກາດຊອກວຽກເຮັດ ປະຈຳປີ 2010-2014




ແຫຼ່ງຂໍ້ມູນ: ການສຳຫຼວດຄວາມຄິດເຫັນຂອງຜູ້ຊົມໃຊ້, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄຊ)

## ກ.4 ໂຄງສ້າງການອອມເງິນ ແລະ ການກູ້ຢືມຂອງຄົວເຮືອນ

ນອກນັ້ນ, ການສຳຫຼວດຄວາມຄິດເຫັນຍັງສະແດງໃຫ້ເຫັນ ເຖິງໂຄງສ້າງຂອງການອອມຂອງເຮືອນມີຄື: ອອມເງິນໄວ້ກັບຕົນເອງ (50%), ອອມໄວ້ໃນກຸ່ມທ້ອນເງິນບ້ານ (23%), ຝາກທະນາຄານ (15%), ເຂົ້າຫວຍ (9%) ແລະ ປ່ອຍກູ້ນອກລະບອບ ແລະ ຊື້ຄຳ (3%). ສ່ວນໂຄງສ້າງການກູ້ຢືມເງິນຂອງຄົວເຮືອນມີຄື: ກູ້ຢືມຈາກທະນາຄານ (43%), ກຸ່ມທ້ອນເງິນບ້ານ (25%), ພີ່ນ້ອງ (20%), ກູ້ຢືມຈາກໝູ່ເພື່ອນ (4%) ແລະ ອື່ນໆ 8%.

---

[34] ທ່າອ່ຽງຂອງການອອມ, ການກູ້ຢືມ ແລະ ໂຄງສ້າງການອອມ ແມ່ນອີງໃສ່ອັດຕາສ່ວນຂອງຄົວເຮືອນທີ່ໃຫ້ທັດສະນະຕໍ່ການອອມ ແລະ ກູ້ຢືມ.

## ຂ. ການປ່ຽນແປງດັດຊະນີຄວາມຄິດເຫັນຂອງພາກທຸລະກິດ ໃນປີ 2014[35]

ໃນປີ 2014, ສະພາບການດຳເນີນທຸລະກິດ ແລະ ການລົງທຶນພາຍໃນປະເທດເຫັນວ່າ ມີຄວາມຟື້ນຟູຫຼາຍພໍສົມຄວນ ເມື່ອທຽບກັບປີຜ່ານມາ, ຄ່າດັດຊະນີຄວາມຄິດເຫັນພາກທຸລະກິດສະເລ່ຍໝົດປີ 2014 ຢູ່ທີ່ລະດັບ 111 ເພີ່ມຂຶ້ນຈາກລະດັບ 107 ໃນປີ 2013 (ເພີ່ມຂຶ້ນ 4,3%). ສາເຫດຕົ້ນຕໍທີ່ພາໃຫ້ຄ່າດັດຊະນີໃນປີນີ້ເພີ່ມຂຶ້ນຍ້ອນ (1) ບັນດາຫົວໜ່ວຍທຸລະກິດພາກເອກະຊົນໄດ້ເພີ່ມກຳລັງການຜະລິດ ແລະ ການບໍລິການ, (2) ຍອດຂາຍ ແລະ ການສົ່ງອອກກໍ່ມີທ່າອ່ຽງເພີ່ມຂຶ້ນ. ຈາກຕົວເລກດັ່ງກ່າວ ສະແດງໃຫ້ເຫັນເຖິງສະພາບການດຳເນີນທຸລະກິດຂອງພາກເອກະຊົນໂດຍລວມໃນປີນີ້ມີບັນຍາກາດຟື້ນຟູກວ່າປີຜ່ານມາຫຼາຍພໍສົມຄວນ ເຊິ່ງເປັນສັນຍານທີ່ດີໃຫ້ແກ່ການເຕີບໂຕໃນພາກການລົງທຶນຂອງເອກະຊົນ.

ຮູບສະແດງ ຂ-1: ຄ່າດັດຊະນີຄວາມຄິດເຫັນພາກທຸລະກິດປະຈຳປີ 2014




ແຫຼ່ງຂໍ້ມູນ:ການສຳຫຼວດຄວາມຄິດເຫັນຂອງຫົວໜ່ວຍທຸລະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສ)

### ຂ.1 ດັດຊະນີຄວາມຄິດເຫັນຕໍ່ທຸລະກິດຕາມຂະແໜງການ

ປີ 2014 ສະພາບການດຳເນີນທຸລະກິດ ແລະ ການລົງທຶນ ໃນແຕ່ລະຂະແໜງການເຫັນວ່າ ມີຄວາມຟື້ນຟູ ແລະ ມີທ່າອ່ຽງເພີ່ມທຽບກັບປີຜ່ານມາ. ໃນນັ້ນ, ຂະແໜງການທີ່ພົ້ນເດັ່ນ ແລະ ມີທ່າອ່ຽງເພີ່ມຂຶ້ນຫຼາຍ ແມ່ນຂະແໜງຍານພາຫະນະ ຢູ່ທີ່ລະດັບ 191 ເຊິ່ງສະແດງໃຫ້ເຫັນເຖິງທ່າອ່ຽງຄວາມຕ້ອງການຊົມໃຊ້ຍານພາຫະນະສູງໃນປີນີ້. ຮອງລົງມາແມ່ນຂະແໜງການກໍ່ສ້າງ ຢູ່ທີ່ລະດັບ 118, ຂະແໜງການຄ້າ ແລະ ບໍລິການ ຢູ່ທີ່ລະດັບ 115 ແລະ ຂະແໜງປຸງແຕ່ງໄມ້ ຢູ່ທີ່ລະດັບ 112. ເວົ້າລວມແລ້ວ, ການເພີ່ມຂຶ້ນຂອງດັດຊະນີຂະແໜງການດັ່ງກ່າວ ໄດ້ສະທ້ອນໃຫ້ເຫັນເຖິງທັດສະນະຕໍ່ຜົນປະກອບການທຸລະກິດທີ່ດີຂຶ້ນເມື່ອທຽບໃສ່ໄຕມາດຜ່ານມາ. ສ່ວນພາກອຸດສາຫະກຳປຸງແຕ່ງ, ຕັດຫຍິບ ແລະ ກະສິກຳ ແມ່ນຢູ່ໃນລະດັບໃກ້ຄຽງກັບປີຜ່ານມາ.

---

[35] ອີງຕາມການສຳຫຼວດຄວາມຄິດເຫັນຂອງພາກທຸລະກິດກວມ 372 ຫົວໜ່ວຍຕົວແທນໃນ 9 ແຂວງທົ່ວປະເທດ, ສະໜັບສະໜຸນໂດຍໂຄງການ ສ້າງບົດລາຍງານການພັດທະນາມະນຸດ (UNDP ແລະ ສຄສ). ຖ້າຫາກດັດຊະນີມີຄ່າສູງກວ່າ 100 ສະແດງວ່າ ຜົນການດຳເນີນທຸລະກິດຂອງຫົວໜ່ວຍທຸລະກິດມີບັນຍາກາດດີ ແລະ ກົງກັນຂ້າມຖ້າຫາກວ່າ ຄ່າດັດຊະນີຕ່ຳກວ່າ 100.

ຮູບສະແດງ ຂ-2: ດັດຊະນີຄວາມຄິດເຫັນຕໍ່ທຸລະກິດຕາມຂະແໜງການປະຈຳປີ




ແຫຼ່ງຂໍ້ມູນ:ການສຳຫຼວດຄວາມຄິດເຫັນຂອງຫົວໜ່ວຍທຸລະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສ)

## ຂ.2 ດັດຊະນີການຜະລິດຕາມຂະແໜງການ

ສະພາບການຜະລິດໃນປີ 2014 ໂດຍລວມເຫັນວ່າ ມີບັນຍາກາດຟື້ນຟູກວ່າປີຜ່ານມາ ເຊິ່ງເຫັນໄດ້ຈາກຄ່າດັດຊະນີການຜະລິດ ໄດ້ເພີ່ມຂຶ້ນຈາກ 106 ໃນປີ 2013 ມາເປັນ 108 ໃນປີ 2014. ສາເຫດທີ່ເຮັດໃຫ້ຄ່າດັດຊະນີການຜະລິດມີທ່າອ່ຽງເພີ່ມ ແມ່ນຍ້ອນສະພາບການຜະລິດໃນຂະແໜງການກໍ່ສ້າງ, ຕັດຫຍິບ, ການບໍລິການ ແລະ ປຸງແຕ່ງໄມ້ ທີ່ມີທ່າອ່ຽງເພີ່ມຂຶ້ນໄວ ເຊິ່ງສະແດງໃຫ້ເຫັນເຖິງການລົງທຶນເຂົ້າໃນການກໍ່ສ້າງຕຶກອາຄານ ແລະ ການສົ່ງອອກສິນຄ້າຕັດຫຍິບ, ຜະລິດຕະພັນໄມ້ ແລະ ການບໍລິການ ມີບັນຍາກາດທີ່ຟື້ນຟູພໍສົມຄວນ. ໃນຂະນະດຽວກັນ, ສະພາບການຜະລິດໃນຂະແໜງການອື່ນໆ ເຊັ່ນ: ການຄ້າ, ອຸດສາຫະກຳປຸງແຕ່ງ ແລະ ກະສິກຳ ເຫັນວ່າ ມີທ່າອ່ຽງຫຼຸດລົງເລັກໜ້ອຍຈາກປີຜ່ານມາ, ເຊິ່ງສອດຄ່ອງກັບສະພາບຄວາມຕ້ອງການຊົມໃຊ້ຂອງຄົວເຮືອນທີ່ມີທ່າອ່ຽງຫຼຸດລົງ.

ຮູບສະແດງ ຂ-3: ດັດຊະນີການຜະລິດຕາມຂະແໜງການປະຈຳປີ




ແຫຼ່ງຂໍ້ມູນ: ການສຳຫຼວດຄວາມຄິດເຫັນຂອງຫົວໜ່ວຍທຸລະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສ

# ເອກະສານຊ້ອນທ້າຍ 2: ຕາຕະລາງສະຖິຕິຊ້ອນທ້າຍ

## ກ. ສະພາບເສດຖະກິດມະຫາພາກຂອງ ສປປ ລາວ

ຕາຕະລາງ ກ-1: ສະພາບເສດຖະກິດຂອງ ສປປ ລາວ ໂດຍຫຍໍ້

| ການຂະຫຍາຍຕົວຂອງເສດຖະກິດ | 2009/10 | 2010/11 | 2011/12 | 2012/13 | 2013/14 | 2014/15pj. | 2015/16pj |
|---|---|---|---|---|---|---|---|
| ການຂະຫຍາຍຕົວລວມ (%) | 7,9 | 8,1 | 8,3 | 8,0 | 7,8 | 7,6 | 7,8 |
| ກະສິກຳ (%) | 3,0 | 2,9 | 2,8 | 3,1 | 3,0 | | |
| ອຸດສາຫະກຳ (%) | 17,7 | 15,2 | 14,4 | 7,4 | 8,5 | | |
| ບໍລິການ (%) | 5,2 | 7,1 | 8,1 | 9,7 | 9,3 | | |
| ພາສີອາກອນສຸດທິຕ່າງໆ(%) | 12,3 | 9,6 | 8,6 | 19,6 | 13,7 | | |
| ລາຍໄດ້ຕໍ່ຫົວຄົນ (ໂດລາ)* | 1.026 | 1.213 | 1.355 | 1.534 | 1.671 | | |
| **ໂຄງປະກອບຂອງເສດຖະກິດ** | **2009/10** | **2010/11** | **2011/12** | **2012/13** | **2013/14** | | |
| ກະສິກຳ (%) | 28,9 | 27,8 | 26,6 | 25,2 | 24,8 | | |
| ອຸດສາຫະກຳ (%) | 26,9 | 28,3 | 29,5 | 28,0 | 27,5 | | |
| ບໍລິການ (%) | 37,2 | 36,8 | 36,7 | 38,9 | 39,3 | | |
| ພາສີອາກອນສຸດທິຕ່າງໆ (%) | 7,0 | 7,1 | 7,1 | 7,9 | 8,4 | | |
| **ການປະກອບສ່ວນຕໍ່ການເຕີບໂຕ** | **2009/10** | **2010/11** | **2011/12** | **2012/13** | **2013/14** | | |
| ກະສິກຳ (%) | 11,9 | 10,9 | 9,6 | 10,7 | 9,8 | | |
| ອຸດສາຫະກຳ (%) | 52,3 | 47,7 | 47,0 | 26,7 | 31,1 | | |
| ບໍລິການ (%) | 25,3 | 33,1 | 36,1 | 45,1 | 45,2 | | |
| ພາສີອາກອນສຸດທິຕ່າງໆ (%) | 10,5 | 8,3 | 7,3 | 17,6 | 13,9 | | |
| **ລາຄາ** | **2010** | **2011** | **2012** | **2013** | **2014** | **2014/15pj.** | |
| ສະເລ່ຍອັດຕາເງິນເຟີ້ (%) | 6,07 | 7,49 | 4,26 | 6,36 | 4,13 | 3,3 | |
| ສະເລ່ຍອັດຕາແລກປ່ຽນກີບ/ໂດລາ | 8.264 | 8.030 | 8.014 | 7.837 | 8.049 | | |
| ສະເລ່ຍອັດຕາແລກປ່ຽນກີບ/ບາດ | 261 | 264 | 259 | 256 | 249 | | |
| **ການຄ້າ** | **2009/10** | **2010/11** | **2011/12** | **2012/13** | **2013/14** | | |
| ສົ່ງອອກ (ລ້ານໂດລາ) | | | 1.696 | 3645 | 3433 | | |
| ນຳເຂົ້າ (ລ້ານໂດລາ) | | | 2566 | 3649 | 4680 | | |
| **ການເງິນພາກລັດ** | **2009/10** | **2010/11** | **2011/12** | **2012/13** | **2013/14** | | |
| ລາຍຮັບລວມການຊ່ວຍເຫຼືອລ້າ (ຕື້ກີບ) | 12.100 | 13.890 | 16.552 | 21.223 | 22.038 | | |
| ລາຍຈ່າຍ (ຕື້ກີບ) | 13.336 | 15.087 | 17.592 | 24.618 | 26.016 | | |
| ຂາດດຸນ (% ຕໍ່GDP) | 2,28 | 1,93 | 1,48 | 4,23 | 4,39 | | |

ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ,ທະນາຄານແຫ່ງສປປລາວ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ

Pj: ການພະຍາກອນເບື້ອງຕົ້ນໂດຍສຄສ

## ຂ. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍ MDGs ໃນປີ 2013

ຕາຕະລາງ ຂ-1: ຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍ MDGs ໃນປີ 2013

| | ເປົ້າໝາຍສະຫັດສະວັດດ້ານການພັດທະນາ | ພື້ນຖານ | ຄວາມຄືບໜ້າ | ເປົ້າໝາຍ 2015 |
|---|---|---|---|---|
| **ເປົ້າໝາຍ 1: ລ້າງຄວາມທຸກຍາກ ແລະ ຄວາມອຶດຫິວ** | | | | |
| 1.1 | ສັດສ່ວນຂອງປະຊາກອນຢູ່ລຸ່ມເສັ້ນຄວາມທຸກຍາກ (%) | 46 (1992) | 22 (2012/2013) i | 24 |
| 1.8 | ອັດຕາສ່ວນຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ (%) | 44 (1993) | 27 (2011/2012) ii | 22 |
| 1.9 | ອັດຕາສ່ວນຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ ທີ່ມີຄວາມສູງຕ່ຳກວ່າມາດຕະຖານ (%) | 48 (1993) | 38 (2011/2012) ii | 34 |
| **ເປົ້າໝາຍ 2: ຮັບປະກັນໃຫ້ທຸກຄົນໄດ້ຮັບການສຶກສາຂັ້ນປະຖົມຢ່າງທົ່ວເຖິງ** | | | | |
| 2.1 | ອັດຕາການເຂົ້າໂຮງຮຽນປະຖົມສຸດທິ (%) | 58,8 (1992) | 98 (2013/14) iii | 98 |
| 2.3 | ອັດຕາການເຂົ້າຮຽນ ແລະ ສືບຕໍ່ຮຽນຮອດຊັ້ນປ5 ຂອງເດັກ (%) | 47,7 (1992) | 70,6 (2013/2014) iii | 95 |
| 2.4 | ອັດຕາການຮູ້ໜັງສືຂອງປະຊາກອນໜຸ່ມ (15-24 ປີ) (%) | 71,1 (1995) | 89,1 (2011/2012) iii | 99 |
| **ເປົ້າໝາຍ 3: ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ** | | | | |
| 3.1 | ຈຳນວນເດັກນ້ອຍຍິງທີ່ເຂົ້າໂຮງຮຽນຕໍ່ກັບເດັກນ້ອຍຊາຍຈຳນວນ100 ຄົນໃນຊັ້ນ | | | |
| | ປະຖົມ | 0,79 (1990) | 0,91 (2012/2013) iii | 1 |
| | ມັດທະຍົມຕອນຕົ້ນ | 0,70 (1990) | 0,88 (2012/2013) iii | 1 |
| | ມັດທະຍົມຕອນປາຍ | 0,67 (1990) | 0,82 (2012/2013) iii | 1 |
| **ເປົ້າໝາຍ 4: ຫຼຸດຜ່ອນອັດຕາການຕາຍຂອງເດັກ** | | | | |
| 4.1 | ອັດຕາການຕາຍຂອງເດັກນ້ອຍຕ່ຳກວ່າ 5 ປີ (1.000 ທີ່ເກີດ) | 170 (1993) | 71 (2013) iv | 70 |
| 4.2 | ອັດຕາການຕາຍຂອງເດັກນ້ອຍຕ່ຳກວ່າ 1 ປີ (1.000 ທີ່ເກີດ) | 114 (1993) | 54 (2013) iv | 45 |
| 4.3 | ອັດຕາການສັກຢາກັນໝາກແດງໃນເດັກນ້ອຍ 1 ປີ (%) | 67 (1995) | 82 (2012) iv | 90 |
| **ເປົ້າໝາຍ 5: ສົ່ງເສີມສຸຂະພາບຂອງແມ່** | | | | |
| 5.1 | ອັດຕາການຕາຍຂອງແມ່ (ຕໍ່ 100.000 ຄົນ) | 796 (1995) | 220 (2013) iv | 260 |
| 5.2 | ອັດຕາສ່ວນຂອງການເກີດທີ່ໄດ້ຮັບການຊ່ວຍເຫຼືອ ຈາກຊ່ຽວຊານ (%) | 14 (2000) | 42 (2012) iv | 50 |
| 5.3 | ອັດຕາການຄຸມກຳເນີດ (%) | 13 (1990) | 49,8 (2012) v | 55 |
| 5.5 | ອັດຕາການເຂົ້າເຖິງການເບິ່ງແຍງຄັນ (%) | 21 (2000) | 36,9 (2012) v | 60 |
| **ເປົ້າໝາຍ 6: ຕ້ານກັບເຊື້ອພະຍາດເອດສ໌, ມາລາເຣຍ ແລະ ເຊື້ອພະຍາດ ອື່ນໆ** | | | | |
| 6.1 | ອັດຕາການຕິດເຊື້ອHIV ໃນກຸ່ມປະຊາກອນທົ່ວໄປທີ່ມີອາຍຸແຕ່15-49 ປີ | 0,1 | 0,2 (2013) iv | <1 |
| 6.5 | ອັດຕາການຕາຍຍ້ອນໄຂ້ຍຸງ (ຕໍ່ 100.000 ຄົນ) | 7,1 (2000) | 0,3 (2011) ii | 0,2 |

| | ເປົ້າໝາຍສະຫັດສະວັດດ້ານການພັດທະນາ | ພື້ນຖານ | ຄວາມຄືບໜ້າ | ເປົ້າ ໝາຍ 2015 |
|---|---|---|---|---|
| 6.8 | ອັດຕາການຕິດເຊື້ອວັນນະໂລກ(ຕໍ່ 100.000ຄົນ) | 492 (1990) | 197 (2013) iv | 240 |
| **ເປົ້າໝາຍ 7: ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ** | | | | |
| 7.1 | ອັດຕາສ່ວນຂອງເນື້ອທີ່ທີ່ມີປ່າປົກຫຸ້ມ (%) | 49,1 (1982) | 42 (2014) iv | 65 |
| 7.8 | ອັດຕາການດື່ມນ້ຳສະອາດ (%) | 28 (1990) | 72 (2012) iv | 80 |
| 7.9 | ອັດຕາການນຳໃຊ້ວິດຖ່າຍຂອງປະຊາຊົນ (%) | 17 (1995) | 57 (2011/2012) ii | 60 |
| **ເປົ້າໝາຍ 9:ຫຼຸດຜ່ອນຜົນກະທົບຈາກລູກລະເບີດບໍ່ທັນແຕກໃນ ສປປ ລາວ** | | | | |
| **9.1** | ເນື້ອທີ່ທີ່ໄດ້ຮັບການເກັບກູ້ລະເບີດ (ເຮັກຕາ/ປີ) | 580,77 (1999) | 10.514 (2013) vii | 20.000 |
| **9.2** | ຈຳນວນຜູ້ບາດເຈັບແລະຕາຍຍ້ອນອຸບັດຕິເຫດຈາກລະເບີດບໍ່ທັນແຕກ (ກໍລະນີ/ປີ) | 257 (1999) | 41 (2013) vii | < 75 |

ແຫຼ່ງຂໍ້ມູນ: (i). ບົດສະຫຼຸບຂາດຕົວ LECS5. (ii). ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາຂອງ ສປປ ລາວ ປະຈຳປີ 2013. (iii). ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ, ຕາຕະລາງຂໍ້ມູນການສຶກສາສົກປີ 2011-12, 2012-13 ແລະ 2013-14. (iv)ທະນາຄານໂລກ, http://data.worldbank.org/indicator/SH.DYN.AIDS.ZS/countries. (v) ທະນາຄານພັດທະນາອາຊີ, http://www.adb.org/sites/default/files/publication/43030/ki2014-mdg5.pdf. (vi) ຂ່າວຈາກໂຄງການເຄືອຂ່າຍຂໍ້ມູນທີ່ດິນ, ວັນທີ 21 ພະຈິກ 2014, ຫົວຂໍ້ ທ້າທາຍແຜນເພີ່ມປ່າປົກຫຸ້ມເປົ້າຕົວເລກກະໂດດ, http://rightslinklao.org/?p=5050. (vii) UXO sector annual report 2013, UNDP in Lao PDR,http://www.la.undp.org/content/lao_pdr/en/home/library/crisis_prevention_and_recovery/uxo-sector-annual-report-20130/

## ຄ. ດັດຊະນີຄວາມສະດວກໃນການເຮັດທຸລະກິດຢູ່ ສປປ ລາວ

ຕາຕະລາງ ຄ-1: ດັດຊະນີຄວາມສະດວກໃນການເຮັດທຸລະກິດຢູ່ ສປປ ລາວ

| | 2011 | 2012 | 2013 | 2014 | 2014<br>ອາຊີຕາເວັນອອກ ແລະ ອາຊີປາຊີຟິກ |
|---|---|---|---|---|---|
| **ອັນດັບທີລວມ** | 165 | 163 | 155 | 148 | |
| **1. ການເລີ່ມຕົ້ນທຸລະກິດ** | **89** | **81** | **150** | **154** | |
| ຂັ້ນຕອນ (ຈຳນວນ) | 7 | 6 | 6 | 6 | 7,3 |
| ເວລາ (ວັນ) | 93 | 92 | 92 | 92 | 34,4 |
| ຄ່າໃຊ້ຈ່າຍ (%ລາຍໄດ້ຕໍ່ຄົນ) | 7,6 | 7,1 | 6,7 | 5,7 | 27,7 |
| ການຊຳລະທຶນຂັ້ນຕ່ຳ (%ລາຍໄດ້ຕໍ່ຫົວຄົນ) | - | 0 | 0 | 0 | 256,4 |
| **2. ການຂໍອະນຸຍາດກໍ່ສ້າງ** | **80** | **87** | **107** | **107** | |
| ຂັ້ນຕອນ (ຈຳນວນ) | 23 | 23 | 22 | 22 | 14,6 |
| ເວລາ (ວັນ) | 108 | 108 | 107 | 107 | 134 |
| ຄ່າໃຊ້ຈ່າຍ (% ຄ່າສາງສິນຄ້າ) | 52,4 | 48,6 | 0,7 | 0,6 | 2,1 |
| **3. ການຂໍໃຊ້ໄຟຟ້າ** | **138** | **138** | **129** | **128** | |
| ຂັ້ນຕອນ (ຈຳນວນ) | 5 | 5 | 5 | 5 | 4,6 |
| ເວລາ (ວັນ) | 134 | 134 | 134 | 134 | 77,4 |
| ຄ່າໃຊ້ຈ່າຍ (%ລາຍໄດ້ຕໍ່ຄົນ) | 2.381,6 | 2.130,5 | 1.913,0 | 1.650,40 | 887,6 |
| **4. ການຈົດທະບຽນຊັບສິນ** | **72** | **74** | **75** | **77** | |
| ຂັ້ນຕອນ (ຈຳນວນ) | 5 | 5 | 5 | 5 | 5,2 |
| ເວລາ (ວັນ) | 98 | 98 | 98 | 98 | 77,9 |
| ຄ່າໃຊ້ຈ່າຍ (%ລາຍໄດ້ຕໍ່ຄົນ) | 1,1 | 1,1 | 1,1 | 1,1 | 4,5 |
| **5. ການໄດ້ຮັບສິນເຊື່ອ** | **166** | **167** | **157** | **116** | |
| ດັດຊະນີຄວາມເຂັ້ມງວດຂອງກົດໝາຍ (0-12) | 4 | 4 | 4 | 7 | 6 |
| ດັດຊະນີຄວາມເລິກຂອງຂໍ້ມູນ (0-8) | 0 | 0 | 0 | 0 | 4 |
| ການຄຸ້ມຄອງການລົງທະບຽນສາທາລະນະ (% ຂອງຜູ້ໃຫຍ່) | 0 | 0,0 | 2,5 | 3,5 | 11 |
| ສຳນັກງານຄຸ້ມຄອງພາກເອກະຊົນ (% ຂອງຜູ້ໃຫຍ່) | 0 | 0,0 | 0 | 0 | 20,4 |
| **6. ການຄຸ້ມຄອງນັກລົງທຶນ** | **182** | **184** | **186** | **178** | |
| ດັດຊະນີຂອບເຂດໃນການເປີດເຜີຍຂໍ້ມູນ (0-10) | 2 | 2 | 2 | 6 | 5,5 |
| ດັດຊະນີຂອບເຂດຄວາມຮັບຜິດຊອບຂອງອຳນວຍການ (0-10) | 1 | 1 | 1 | 1 | 4,6 |
| ດັດຊະນີຄວາມງ່າຍຂອງຜູ້ຖືຫຸ້ນ (0-10) | 2 | 2 | 3 | 3 | 6,4 |
| ດັດຊະນີຄວາມເຂັ້ມງວດຂອງການຄຸ້ມຄອງຜູ້ລົງທຶນ (0-10) | 1,7 | 1,7 | 2,3 | 2,9 | 5 |
| **7. ການຊຳລະພາສີ** | **123** | **126** | **119** | **129** | |
| ການຊຳລະເງິນ (ຕໍ່ປີ) | 34 | 34 | 34 | 35 | 25,9 |
| ເວລາ (ຊົ່ວໂມງຕໍ່ປີ) | 362 | 362 | 362 | 362 | 204,3 |
| ອັດຕາພາສີລວມ (%ຂອງກຳໄລ) | 33,3 | 33,3 | 26,3 | 25,8 | 34,4 |

| | 2011 | 2012 | 2013 | 2014 | 2014<br>ອາຊີຕາເວັນອອກ<br>ແລະ ອາຊີປາຊີຟິກ |
|---|---|---|---|---|---|
| **ອັນດັບທີລວມ** | **165** | **163** | **155** | **148** | |
| **8. ການຄ້າລະຫວ່າງປະເທດ** | **168** | **160** | **156** | **156** | |
| ເອກະສານໃນການສົ່ງອອກ (ຈໍານວນ) | 9 | 10 | 10 | 10 | 6 |
| ເວລາໃນການສົ່ງອອກ (ວັນ) | 44 | 26 | 23 | 23 | 20,2 |
| ຕົ້ນທຶນການສົ່ງອອກ (ໂດລາຕໍ່ຕູ້ບັນຈຸສິນຄ້າ) | 1.880 | 2.140 | 1.950 | 1.950 | 864 |
| ເອກະສານໃນການນໍາເຂົ້າ (ຈໍານວນ) | 10 | 10 | 10 | 10 | 7 |
| ເວລາໃນການນໍາເຂົ້າ (ວັນ) | 46 | 26 | 26 | 26 | 21,6 |
| ຕົ້ນທຶນການນໍາເຂົ້າ (ໂດລາຕໍ່ຕູ້ບັນຈຸສິນຄ້າ) | 2.035 | 2.125 | 1.910 | 1.910 | 895,6 |
| **9. ການບັງຄັບໃຫ້ປະຕິບັດຕາມສັນຍາ** | **113** | **114** | **99** | **99** | |
| ຂັ້ນຕອນ (ຈໍານວນ) | 42 | 42 | 42 | 42 | 37,2 |
| ເວລາ (ວັນ) | 443 | 443 | 443 | 443 | 553,8 |
| ຄ່າໃຊ້ຈ່າຍ (%ຂອງການຮຽກຮ້ອງ) | 31,6 | 31,6 | 31,6 | 31,6 | 48,6 |
| **10. ການແກ້ໄຂບັນຫາລົ້ມລະລາຍ** | **183** | **185** | **189** | **189** | |
| ເວລາ (ປີ) | - | - | - | - | 2,6 |
| ຕົ້ນທຶນ (%ຂອງຊັບສິນ) | - | - | - | - | 21,8 |
| ອັດຕາການກູ້ຄືນ (ເປີເຊັນ) | 0 | 0 | 0 | 0 | 36,8 |

ແຫຼ່ງຂໍ້ມູນ: ບົດລາຍງານການຈັດອັນດັບຄວາມສະດວກໃນການເຮັດທຸລະກິດ (ທະນາຄານໂລກ, 2015).

## ງ. ສະຖານະຂອງ ສປປ ລາວ ໃນພາກພື້ນ

ຕາຕະລາງ ງ-1: ຄວາມຄືບໜ້າໃນການປະຕິບັດມາດຖານຫຼຸດພົ້ນຈາກບັນຊີປະເທດດ້ອຍພັດທະນາຂອງ ສປປ ລາວ ແລະ ບັນດາປະເທດດ້ອຍພັດທະນາໃນໂລກ.

| | | ດັດຊະນີມາດຖານຂອງປະເທດ LDCs | | | | | | | | |
|---|---|---|---|---|---|---|---|---|---|---|
| | | ດັດຊະນີລາຍໄດ້ຕໍ່ຫົວຄົນ (ໂດລາ) | | | ດັດຊະນີຊັບສິນມະນຸດ | | | ດັດຊະນີຄວາມບອບບາງທາງເສດຖະກິດ | | |
| | ປີ | 2009 | 2012 | 2015 | 2009 | 2012 | 2015 | 2009 | 2012 | 2015 |
| | ມາດຕະຖານ | 1.086 | 1.190 | 1.242 | 66 | 66 | 66 | 38 | 32 | 32 |
| ລ/ດ | ຊື່ປະເທດ | | | | | | | | | |
| 1 | ອາຟການິດສະຖານ | 301 | 357 | 672 | 15,22 | 22,54 | 43,12 | 39,52 | 38,83 | 35,11 |
| 2 | ອັງໂກລາ | 1.963 | 3.747 | 4.518 | 26,01 | 31,60 | 41,91 | 49,77 | 51,29 | 39,73 |
| 3 | ບັງກລາເທດ | 453 | 637 | 926 | 53,34 | 54,68 | 63,80 | 23,21 | 32,41 | 25,11 |
| 4 | ເບແນັງ | 537 | 763 | 753 | 41,15 | 41,11 | 50,13 | 42,50 | 36,16 | 31,19 |
| 5 | ພູຖານ | 1.487 | 1.700 | 2.277 | 58,64 | 59,05 | 67,86 | 52,93 | 44,19 | 40,19 |
| 6 | ບວກກີນາຟາໂຊ | 417 | 507 | 666 | 33,24 | 29,18 | 36,53 | 43,81 | 37,55 | 39,46 |
| 7 | ບຸຣຸນດີ | 100 | 153 | 239 | 22,07 | 20,82 | 41,02 | 56,81 | 57,16 | 49,87 |
| 8 | ກຳປູເຈຍ | 490 | 707 | 852 | 57,77 | 57,93 | 67,17 | 55,63 | 50,47 | 38,27 |
| 9 | ອາຟຣິກາກາງ | 363 | 447 | 439 | 27,24 | 21,55 | 22,92 | 45,06 | 35,65 | 33,52 |
| 10 | ຊາດ | 463 | 593 | 444 | 20,00 | 18,06 | 24,39 | 53,53 | 52,82 | 45,95 |
| 11 | ໂກໂມຣົດ | 667 | 727 | 855 | 48,22 | 45,29 | 54,16 | 56,94 | 49,90 | 45,85 |
| 12 | ກົງໂກ | 130 | 170 | 386 | 22,63 | 21,69 | 29,89 | 49,27 | 35,39 | 30,29 |
| 13 | ຈີບູຕີ | 1.050 | 1.235 | 1.629 | 44,51 | 42,43 | 54,56 | 51,20 | 46,30 | 37,69 |
| 14 | ກີເນ ເອກວາຕໍຣີອານ | 8.957 | 15.090 | 16.089 | 49,49 | 43,03 | 54,81 | 60,54 | 43,69 | 39,34 |
| 15 | ອີຣີເທຍ | 197 | 293 | 444 | 36,21 | 35,61 | 41,16 | 55,46 | 58,99 | 56,75 |
| 16 | ເອທິໂອປີ | 190 | 343 | 395 | 28,40 | 28,16 | 39,18 | 32,04 | 33,48 | 31,81 |
| 17 | ກຳບີ | 287 | 433 | 509 | 42,59 | 49,23 | 62,11 | 56,27 | 67,79 | 70,66 |
| 18 | ກີເນ | 413 | 377 | 485 | 37,40 | 36,77 | 38,72 | 27,90 | 28,60 | 24,86 |
| 19 | ກີເນ-ບິດຊາວ | 187 | 547 | 567 | 33,82 | 34,21 | 44,82 | 60,53 | 60,52 | 53,55 |
| 20 | ໄຮຕິ | 490 | 645 | 696 | 39,79 | 35,57 | 39,32 | 52,19 | 47,31 | 34,12 |
| 21 | ກີຣິບາຕິ | 1.048 | 1.937 | 2.489 | 87,62 | 86,88 | 86,25 | 75,25 | 81,99 | 71,53 |
| 22 | ສປປ ລາວ | 510 | 913 | 1.232 | 62,28 | 61,36 | 60,85 | 59,89 | 37,06 | 36,24 |
| 23 | ເລໂຊໂຕ | 940 | 1.050 | 1.374 | 61,87 | 62,06 | 62,92 | 49,94 | 45,86 | 42,91 |
| 24 | ລີເບເຣຍ | 133 | 190 | 340 | 30,61 | 38,55 | 46,24 | 65,46 | 60,97 | 57,92 |
| 25 | ມາດາກາສະກາ | 297 | 417 | 430 | 45,54 | 52,49 | 53,45 | 37,17 | 38,04 | 36,71 |
| 26 | ມາລາວີ | 233 | 307 | 410 | 46,23 | 44,15 | 53,72 | 55,88 | 51,93 | 41,09 |
| 27 | ມາລີ | 470 | 563 | 666 | 32,64 | 30,17 | 45,49 | 42,32 | 36,78 | 33,29 |
| 28 | ໂມຣິຕາເນຍ | 733 | 987 | 1.261 | 54,65 | 47,09 | 49,49 | 47,13 | 44,19 | 41,18 |
| 29 | ໂມຊໍາບິກ | 307 | 420 | 546 | 27,52 | 30,72 | 41,75 | 48,68 | 44,37 | 38,06 |

| | | ດັດຊະນີມາດຖານຂອງປະເທດ LDCs | | | | | | | | |
|---|---|---|---|---|---|---|---|---|---|---|
| | | ດັດຊະນີລາຍໄດ້ຕໍ່ຫົວຄົນ (ໂດລາ) | | | ດັດຊະນີຊັບສິນມະນຸດ | | | ດັດຊະນີຄວາມບອບບາງ ທາງເສດຖະກິດ | | |
| | ປີ | 2009 | 2012 | 2015 | 2009 | 2012 | 2015 | 2009 | 2012 | 2015 |
| | ມາດຕະຖານ | 1.086 | 1.190 | 1.242 | 66 | 66 | 66 | 38 | 32 | 32 |
| ລ/ດ | ຊື່ປະເທດ | | | | | | | | | |
| 30 | ມຽນມາ | 306 | 704 | 1.063 | 66,05 | 68,81 | 72,70 | 37,39 | 45,01 | 33,70 |
| 31 | ເນປານ | 320 | 420 | 659 | 58,34 | 59,83 | 68,68 | 33,65 | 27,77 | 26,80 |
| 32 | ນີເຊ | 267 | 347 | 389 | 22,84 | 24,28 | 34,75 | 45,84 | 38,63 | 37,63 |
| 33 | ຣູວັນດາ | 283 | 477 | 592 | 33,03 | 42,20 | 51,52 | 55,05 | 47,26 | 40,73 |
| 34 | ເຊົາໂຕເມແລະແຟຣງຊິບ | 810 | 1.113 | 1.431 | 72,07 | 74,90 | 77,43 | 54,97 | 46,08 | 39,24 |
| 35 | ເຊເນການ | 773 | 1.063 | 1.006 | 40,74 | 47,04 | 55,89 | 37,58 | 36,14 | 32,99 |
| 36 | ເຊຍຣາເລອອນ | 237 | 333 | 567 | 20,42 | 24,79 | 34,76 | 50,67 | 48,50 | 48,93 |
| 37 | ໝູ່ເກາະຊາໂລມົງ | 683 | 1.013 | 1.402 | 64,11 | 65,07 | 71,71 | 57,98 | 55,25 | 50,79 |
| 38 | ໂຊມາລີ | 282 | 201 | 119 | 9,35 | 1,38 | 7,84 | 62,63 | 50,10 | 36,26 |
| 39 | ຊູດັງໃຕ້[i] | - | - | 573 | - | - | 29,11 | - | - | 55,96 |
| 40 | ຊູດັງ | 787 | 1.213 | 1.511 | 51,41 | 52,64 | 56,55 | 52,86 | 44,44 | 49,94 |
| 41 | ຕີມໍແລັດສະເຕ | 1.070 | 2.233 | 3.767 | 53,95 | 48,14 | 57,38 | 56,70 | 53,35 | 54,98 |
| 42 | ໂຕໂກ | 350 | 460 | 491 | 42,56 | 45,49 | 58,68 | 42,79 | 35,36 | 33,55 |
| 43 | ຕູວາລູ | 2.544 | 4.993 | 5.788 | 88,36 | 88,05 | 88,82 | 79,69 | 63,93 | 53,98 |
| 44 | ອູກັນດາ | 303 | 463 | 663 | 51,28 | 45,78 | 53,63 | 51,91 | 36,23 | 31,77 |
| 45 | ຕັງຊານີ | 373 | 497 | 779 | 40,58 | 40,10 | 51,98 | 31,02 | 28,69 | 28,77 |
| 46 | ວານູອາຕູ | 1.737 | 2.540 | 2.997 | 72,28 | 77,69 | 81,25 | 62,30 | 46,78 | 47,70 |
| 47 | ເຢເມນ | 767 | 1.020 | 1.234 | 52,13 | 52,34 | 59,79 | 44,90 | 38,47 | 35,43 |
| 48 | ຊໍາບີ | 647 | 1.010 | 1.327 | 40,68 | 36,88 | 40,85 | 52,79 | 53,03 | 45,61 |

ແຫຼ່ງຂໍ້ມູນ: ອີງການ UNCTAD

ຕາຕະລາງ ງ-2: ສະຖານະພາບດ້ານການພັດທະນາເສດຖະກິດ ແລະ ສັງຄົມຂອງ ສປປ ລາວ ໃນພາກພື້ນ

| ປະເທດ | ພົນລະເມືອງ (ຄົນ, 2013) | ອັດຕາການຂະຫຍາຍຕົວຂອງ GDP (%, 2014) | ອັດຕາເງິນເຟີ້ (%, 2014) | ລາຍໄດ້ຕໍ່ຄົນ (ໂດລາ, 2013) | ອາຍຸຍືນສະເລ່ຍ (2013) | ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ | ລະດັບການພັດທະນາມະນຸດ (2013) | ດັດຊະນີການດໍາເນີນທຸລະກິດ (2013) |
|---|---|---|---|---|---|---|---|---|
| ສປປ ລາວ | 6.769.727 | 7,4* | 4,1* | 4.822 | 68.8 | 81,7 (2010) | 139 | 148 |
| ໄທ | 67.010.502 | 0,7 | 1,9 | 14.393 | 74,9 | 96,4 (2010) | 89 | 26 |
| ຫວຽດນາມ | 89.708.900 | 6,0* | 4,1* | 5.294 | 75 | 93,5 (2009) | 121 | 78 |
| ກໍາປູເຈຍ | 14.864.646 | 7,0* | 3,8* | 3.041 | 66 | 73,9 (2009) | 136 | 135 |
| ມຽນມາ | 53.259.018 | 7,7 | 5,9 | 1.300 (2012) | 68 | 92,6 (2012) | 150 | 177 |
| ສິງກະໂປ | 5.399.200 | 2,9 | 1,0 | 78.763 | 84 | 96,3 (2012) | 9 | 1 |
| ມາເລເຊຍ | 29.716.965 | 6,0 | 3,1 | 23.338 | 75,7 | 93,1 (2010) | 62 | 18 |
| ອິນໂດເນເຊຍ | 249.865.931 | 5,0 | 6,4 | 9.561 | 72 | 92,8 (2011) | 108 | 114 |
| ຟີລິບປິນ | 98.393.574 | 6,1 | 4,2 | 6.535 | 73 | 95 (2008) | 117 | 95 |
| ບູຣໄນ | 417.784 | -0,7* | -0,2* | 71.776 | 79 | 95,4 (2012) | 30 | 101 |
| ຕີມໍເລດຊເຕ | 1.178.252 | 6,6* | 2,5* | 2.076 (2012) | 64 | 58,3 (2010) | 128 | 172 |

ແຫຼ່ງຂໍ້ມູນ: http://www.doingbusiness.org/data (June, 2014); World Economic Outlook ເດືອນເມສາ 2015, IMF; World Development Indicators, ທະນາຄານໂລກ; http://www.undp.org, UNDP

ໝາຍເຫດ: * ຕົວເລກພະຍາກອນຈາກກອງທຶນການເງິນສາກົນ

## ສ. ສະພາບເສດຖະກິດສາກົນ

ຕາຕະລາງ ຈ-1: ການຂະຫຍາຍຕົວ ແລະ ທ່າອ່ຽງຂອງເສດຖະກິດສາກົນ

| ປະເທດ ແລະ ພາກພື້ນ | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 |
|---|---|---|---|---|---|---|---|---|
| ໂລກ | 3,4 | 3,4 | 3,4 | 3,5 | 3,8 | 3,8 | 3,9 | 3,9 |
| ປະເທດພັດທະນາແລ້ວ | 1,2 | 1,4 | 1,8 | 2,4 | 2,4 | 2,2 | 2,1 | 2,0 |
| ສະຫະພາບເອີຣົບ (28 ປະເທດ) | -0,4 | 0,1 | 1,4 | 1,8 | 1,9 | 1,9 | 1,9 | 1,9 |
| ເອີໂຣໂຊນ (17 ປະເທດ) | -0,8 | -0,5 | 0,9 | 1,5 | 1,7 | 1,6 | 1,6 | 1,6 |
| ປະເທດກຳລັງພັດທະນາໃນອາຊີ | 6,8 | 7,0 | 6,8 | 6,6 | 6,4 | 6,3 | 6,4 | 6,6 |
| ກຸ່ມ ASEAN | 5,7 | 5,2 | 4,8 | 5,2 | 5,6 | 5,7 | 5,9 | 6,4 |
| ກຳປູເຈຍ | 7,3 | 7,4 | 7,0 | 7,2 | 7,2 | 7,3 | 7,4 | 7,3 |
| ສສ ຫວຽດນາມ | 5,2 | 5,4 | 6,0 | 6,0 | 5,8 | 5,9 | 6,0 | 6,0 |
| ມຽນມາ | 7,3 | 8,3 | 7,7 | 8,3 | 8,5 | 8,3 | 8,0 | 7,7 |
| ໄທ | 6,5 | 2,9 | 0,7 | 3,7 | 4,0 | 4,1 | 4,0 | 3,9 |
| ອິນໂດເນເຊຍ | 6,0 | 5,6 | 5,0 | 5,2 | 5,5 | 5,8 | 6,0 | 6,0 |
| ມາເລເຊຍ | 5,6 | 4,7 | 6,0 | 4,8 | 4,9 | 5,0 | 5,0 | 5,0 |
| ສປ ຈີນ | 7,7 | 7,7 | 7,4 | 6,8 | 6,3 | 6,0 | 6,1 | 6,3 |
| ຍີ່ປຸ່ນ | 1,8 | 1,6 | -0,1 | 1,0 | 1,2 | 0,4 | 0,7 | 0,7 |
| ສະຫະລັດອາເມລິກາ | 2,3 | 2,2 | 2,4 | 3,1 | 3,1 | 2,7 | 2,4 | 2,0 |

ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ, ບົດລາຍງານທ່າອ່ຽງເສດຖະກິດໂລກ (WEO), ເມສາ 2015

ຕາຕະລາງ ຈ-2: ອັດຕາເງິນເຟີ້ ແລະ ທ່າອ່ຽງຂອງອັດຕາເງິນສາກົນ

| ປະເທດ ແລະ ພາກພື້ນ | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 |
|---|---|---|---|---|---|---|---|---|
| ໂລກ | 4,2 | 3,9 | 3,5 | 3,2 | 3,3 | 3,5 | 3,5 | 3,5 |
| ປະເທດພັດທະນາແລ້ວ* | 2,0 | 1,4 | 1,4 | 0,4 | 1,4 | 1,9 | 2,0 | 2,0 |
| ສະຫະພາບເອີຣົບ (28 ປະເທດ) | 2,6 | 1,5 | 0,5 | 0,0 | 1,2 | 1,5 | 1,6 | 1,8 |
| ເອີໂຣໂຊນ (17 ປະເທດ) | 2,5 | 1,3 | 0,4 | 0,1 | 1,0 | 1,2 | 1,4 | 1,5 |
| ປະເທດກຳລັງພັດທະນາໃນອາຊີ | 4,7 | 4,8 | 3,5 | 3,0 | 3,1 | 3,3 | 3,5 | 3,7 |
| ກຸ່ມ ASEAN | 3,6 | 3,8 | 3,4 | 2,6 | 3,4 | 3,4 | 3,4 | 3,3 |
| ກຳປູເຈຍ | 2,9 | 3,0 | 3,9 | -0,3 | 2,5 | 3,0 | 3,0 | 2,9 |
| ສສ ຫວຽດນາມ | 9,1 | 6,6 | 4,1 | 2,5 | 3,3 | 3,5 | 3,6 | 3,8 |
| ມຽນມ້າ | 2,8 | 5,7 | 5,9 | 8,4 | 7,6 | 5,8 | 5,6 | 5,3 |
| ໄທ | 3,0 | 2,2 | 1,9 | 0,3 | 2,4 | 2,2 | 2,2 | 2,2 |
| ອິນໂດເນເຊຍ | 4,0 | 6,4 | 6,4 | 6,8 | 5,8 | 4,8 | 4,8 | 4,8 |
| ມາເລເຊຍ | 1,7 | 2,1 | 3,1 | 2,7 | 3,0 | 3,0 | 3,0 | 3,0 |
| ສປ ຈີນ | 2,6 | 2,6 | 2,0 | 1,2 | 1,5 | 2,0 | 2,5 | 3,0 |
| ຍີ່ປຸ່ນ | 0,0 | 0,4 | 2,7 | 1,0 | 0,9 | 1,8 | 1,3 | 1,2 |
| ສະຫະລັດອາເມລິກາ | 2,1 | 1,5 | 1,6 | 0,1 | 1,5 | 2,4 | 2,5 | 2,3 |

ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ, ບົດລາຍງານທ່າອ່ຽງເສດຖະກິດໂລກ (WEO), ເມສາ 2015

## ຕາຕະລາງ ຈ-3: ລາຄາສິນຄ້າໃນຕະຫຼາດສາກົນ

| ລາຍການສິນຄ້າ | ຫົວໜ່ວຍ | ລາຄາ (ໂດລາສະຫະລັດ) | | | | | | | | |
|---|---|---|---|---|---|---|---|---|---|---|
| | | 2011 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 |
| **I. ໝວດສະບຽງອາຫານ** | | | | | | | | | | |
| ເຂົ້າສານໄທ (ເມັດຫັກ 5%) | ໂດລາ/ໂຕນ | 543,0 | 562,9 | 505,9 | 422,8 | 415,0 | 411,4 | 407,8 | 404,2 | 400,6 |
| ສາລີ | ໂດລາ/ໂຕນ | 291,6 | 298,4 | 259,3 | 192,8 | 195,0 | 197,4 | 199,8 | 202,2 | 195,0 |
| ຊີ້ນງົວ | ໂດລາ/ກິໂລ | 4,04 | 4,14 | 4,07 | 4,95 | 4,70 | 4,65 | 4,60 | 5,54 | 4,66 |
| ໄກ່ | ໂດລາ/ກິໂລ | 1,93 | 2,08 | 2,29 | 2,43 | 2,25 | 2,22 | 2,20 | 2,17 | 2,23 |
| ປາ | ໂດລາ/ໂຕນ | 1,537 | 1,558 | 1,747 | 1,712 | | | | | |
| ນໍ້າຕານ | ເຊັນ/ກິໂລ | 0,57 | 0,47 | 0,39 | 0,37 | 0,38 | 0,37 | 0,37 | 0,38 | 0,36 |
| **II. ພະລັງງານ** | | | | | | | | | | |
| ນໍ້າມັນດິບ | ໂດລາ/ບາເຣວ | 104,0 | 105,0 | 104,0 | 96,24 | 97,5 | 96,6 | 97,4 | 98,3 | 69,4 |
| ອາຍແກັສ** | ໂດລາ/mmbtu | | | 11,0 | 15,8 | 11,0 | 11,1 | 11,3 | 11,4 | 11,6 |
| **III. ແຮ່ທາດ ແລະ ຢາງພາລາ** | | | | | | | | | | |
| ຄຳ | ໂດລາ/ອອນ | 1.569 | 1.669 | 1.411 | 1.265 | 1.240 | 1.225 | 1.211 | 1.196 | 1.182 |
| ທອງ | ໂດລາ/ໂຕນ | 8.828 | 7.962 | 7.332 | 6.863 | 6.880 | 6.872 | 6.864 | 6.856 | 6.618 |
| ອະລູມີນຽມ | ໂດລາ/ໂຕນ | 2.401 | 2.023 | 1.846 | 1.867 | 1.925 | 1.946 | 1.968 | 1.990 | 2.012 |
| ສັງກະສີ | ໂດລາ/ໂຕນ | 2.194 | 1.956 | 1.910 | 2.160 | 2.200 | 2.228 | 2.256 | 2.286 | 2.315 |
| ຢາງພາລາ | ໂດລາ/ກິໂລ | 4,82 | 3,38 | 2,79 | 1,96 | 2,10 | 2,16 | 2,22 | 2,29 | 2,01 |

ແຫຼ່ງຂໍ້ມູນ: ທະນາຄານໂລກ,

ໝາຍເຫດ: * ຂໍ້ມູນ 2014-2018 ແມ່ນການຄາດຄະເນຕັ້ງ ວັນທີ 10 ມັງກອນ 2015, ທະນາຄານໂລກ,

** ລາຄາອາຍແກັສທຳມະຊາດ ແມ່ນສະເລ່ຍຈາກສະຫາລັດອາເມລິກາ

Btu (British Thermal Unit) ແມ່ນຫົວໜ່ວຍວັດບໍລິມາດອາຍແກັສທຳມະຊາດຂອງອັງກິດ (1 mmbtu= 1 ລ້ານ mtu = 28,263682 $m^3$ ພາຍໃຕ້ອຸນຫະພູມ ແລະ ແຮງດັນທີ່ກຳນົດ).

## ຕາຕະລາງ ຈ-4: ອັດຕາແລກປ່ຽນສະກຸນເງິນຕ່າງໆຕໍ່ໂດລາສະຫະລັດ

| ດັດຊະນີ ແລະ ສະກຸນເງິນຕາ | 2013 | 2014 | ຄ່າຕໍ່າສຸດ ຂອງປີ 2014 | ຄ່າສູງສຸດ ຂອງປີ 2014 |
|---|---|---|---|---|
| ດັດຊະນີຄ່າເງິນໂດລາ | 75,91 | 78,42 | | |
| ເອີໂຣ/ໂດລາ | 1,32 | 1,32 | 1,21 | 1,39 |
| ປອນ/ໂດລາ | 1,56 | 1,64 | 1,55 | 1,71 |
| ຢວນ/ໂດລາ | 6,14 | 6,16 | 6,04 | 6,25 |
| ໂດລາສິງກະໂປ/ໂດລາ | 1,25 | 1,26 | 1,23 | 1,32 |
| ຣິງກິດ/ໂດລາ | 3,14 | 3,27 | 3,14 | 3,49 |
| ບາດ/ໂດລາ | 30,70 | 32,46 | 31,74 | 33,08 |
| ເຢນ/ໂດລາ | 97,56 | 105,85 | 101,11 | 121,38 |

ແຫຼ່ງຂໍ້ມູນ: ທະນາຄານກາງສະຫາລັດອະເມລິກາ

## ຊ. ສັງລວມເຫດການທີ່ພົ້ນເດັ່ນທີ່ສຳຄັນຢູ່ ສປປ ລາວ ໃນປີ 2013

ຕາຕະລາງ ສ-1: ສັງລວມເຫດການທີ່ພົ້ນເດັ່ນທີ່ສຳຄັນຢູ່ ສປປ ລາວ ໃນປີ 2013

| ເຫດການທີ່ພົ້ນເດັ່ນກ່ຽວກັບໄພທຳມະຊາດ ແລະ ການປ່ຽນແປງທາງດ້ານດິນຟ້າອາກາດ | |
|---|---|
| **ເດືອນມີນາ 2014** | ສະພາບອາກາດທີ່ໜາວເຢັນ ແລະ ແຫ້ງແລ້ງ ເຮັດໃຫ້ປະຊາຊົນໃນຫຼາຍແຂວງທາງພາກເໜືອຕ້ອງພົບກັບບັນຫາຂາດເຂົ້າກິນຢ່າງໜັກໜ່ວງ ໂດຍສະເພາະແມ່ນແຂວງອຸດົມໄຊທີ່ສາມາດປູກເຂົ້ານາແຊງໄດ້ຕົວຈິງພຽງແຕ່ 451 ຮຕ ກວມພຽງ 35 ສ່ວນຮ້ອຍຂອງແຜນການທີ່ວາງໄວ້, |
| **ເດືອນ ກໍລະກົດ 2014** | ແຂວງສະຫວັນນະເຂດໄດ້ຖືກພາຍຸຣາມມະສູນເຂົ້າກະທົບ ເຮັດໃຫ້ມີຝົນແຮງ ແລະ ນໍ້າຖ້ວມໃນຫຼາຍພື້ນທີ່, ໃນນັ້ນມີເນື້ອທີ່ນາຖືກຖ້ວມປະມານ 4,300 ຮຕ ແລະ 69 ບ້ານທີ່ຢູ່ລຽບແຄມແມ່ນໍ້າເຊຈຳພອນຖືກນໍ້າໄຫຼເຂົ້າຖ້ວມ, |
| **ເດືອນສິງຫາ 2014** | ເກີດຝົນທີ່ຕົກໜັກຕິດຕໍ່ກັນຫຼາຍມື້ໄດ້ເຮັດໃຫ້ເກີດໄພນໍ້າຖ້ວມໃນຫຼາຍເຂດຂອງແຂວງຈຳປາສັກ ເຊິ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ເນື້ອທີ່ທຳການຜະລິດເຖິງ 11.887 ຮຕ ກວມ 10% ສ່ວນຮ້ອຍຂອງເນື້ອທີ່ນາທັງໝົດຢູ່ໃນແຂວງ, ສ່ວນຢູ່ໃນແຂວງຄຳມ່ວນມີ 6 ເມືອງທີ່ໄດ້ຮັບຄວາມເສຍຫາຍຄື: ເມືອງເຊບັ້ງໄຟ, ຫີນບູນ, ມະຫາໄຊ, ຍົມມະລາດ, ໜອງບົກ ແລະ ນາກາຍ ເຊິ່ງໄພນໍ້າຖ້ວມຄາດວ່າ ໄດ້ສ້າງຄວາມເສຍຫາຍທາງດ້ານເສດຖະກິດປະມານ 30 ຕື້ກີບ ແລະ ມີປະຊາຊົນ 20,000 ກວ່າຄອບຄົວໄດ້ຮັບຜົນກະທົບ, ພ້ອມນັ້ນ, ຫຼາຍເຂດຂອງເມືອງຄົງເຊໂດນແຂວງສາລະວັນກໍ່ໄດ້ປະສົບກັບໄພນໍ້າຖ້ວມຢ່າງໜັກໜ່ວງ, ມີເນື້ອທີ່ຖືກນໍ້າຖ້ວມ ແລະ ເສຍຫາຍປະມານ 6.796 ຮຕ, ມີ 61 ບ້ານ ແລະ 4.420 ຄອບຄົວທີ່ໄດ້ຮັບຜົນກະທົບ, ນອກນັ້ນ, ຍັງມີຊັບສິນອື່ນໆ ແລະ ສັດລ້ຽງຈຳນວນໜຶ່ງໄດ້ຮັບຜົນເສຍຫາຍ ເຊິ່ງຄວາມເສຍຫາຍໃນຄັ້ງນີ້ຄິດເປັນມູນຄ່າສູງເຖິງ 30 ຕື້ກີບ ແລະ ສິ່ງຂອງສາທາລະນູປະໂພກອື່ນໆອີກ ເຊິ່ງລວມມູນຄ່າເສຍຫາຍປະມານ 28,31 ຕື້ກວ່າກີບ. ພ້ອມນັ້ນ, ເມືອງໄຊສົມບູນ ແຂວງວຽງຈັນ ໄດ້ຮັບຄວາມເສຍຫາຍ ໂດຍສະເພາະແມ່ນເສັ້ນທາງ ແລະ ຂົວລະປະທານຫຼາຍແຫ່ງເປ່ເພຍ້ອນດິນເຈື່ອນຖົມທາງ ຄື: ທາງ 5B, 1D, 5A ແລະ ຄູກັນເຈື່ອນໃນເທດສະບານເມືອງ ຄິດໄລ່ມູນຄ່າຄວາມເສຍຫາຍຫຼາຍເຖິງ 13 ຕື້ກວ່າກີບ, |
| **ເດືອນກັນຍາ 2004** | ເມືອງຫຼວງພະບາງແຂວງຫຼວງພະບາງໄດ້ຖືກນໍ້າໄຫຼເຂົ້າຖ້ວມຢ່າງຮຸນແຮງເຮັດໃຫ້ບ້ານເຮືອນຫຼາຍຫຼັງ, ຊັບສິນ ແລະ ສັດລ້ຽງຂອງປະຊາຊົນທີ່ຢູ່ລຽບແຄມຫ້ວຍມາວຖືກນໍ້າໄຫຼພັດໄປ, ນອກນັ້ນ, ຍັງມີບາງເສັ້ນທາງ ແລະ ຂົວຖືກຕັດຂາດເຮັດການຊ່ວຍເຫຼືອ ແລະ ຍົກຍ້າຍຜູ້ທີ່ຖືກກະທົບມີຄວາມຫຍຸ້ງຍາກ, |